

# ທາງເລືອກໃນການໃຫ້ຄວາມຍຸດຕິທຳ

## ການສະໜອງການເຂົ້າເຖິງຄວາມຍຸດຕິທຳ
## ໂດຍຜ່ານຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງຂັ້ນຊຸມຊົນ
## ໄລຍະສອງທົດສະຫວັດທີ່ຜ່ານມາໃນປະເທດສີລັງກາ

ໂດຍ ທ່ານ Michelle Gunawardana



*“ການໄກ່ເກ່ຍຂໍ້ຂັດແຍ່ງແມ່ນໄດ້ຮັບໝາກຜົນສຳເລັດອັນໂດດເດັ່ນໃນປະເທດສີລັງການັ້ນກໍ່ເພາະໄດ້ຮັບການເອົາໃຈໃສ່ຈາກລັດຖະບານຢ່າງເຕັມທີ່ເຊິ່ງສະແດງອອກໃນຄວາມຈູບຈາວທ້າວທັນຂອງພະນັກງານລັດຖະ ກອນກະຊວງຍຸດຕິທຳ, ການປະກອບສ່ວນຂອງແຜນງານ, ຄວາມເອົາໃຈໃສ່ຂອງບຸກຄົນຜູ້ທີ່ອາສາສະມັກເປັນຜູ້ໄກ່ເກັ່ຍ, ການຝຶກອົບຮົມຢ່າງກວ້າງຂວາງແລະການປະເມີນຜົນຂອງຂະບວນການໄກ່ເກ່ຍລວມທັງຄວາມເປັນເອກະລາດຂອງຄະນະກຳມະທິການໄກ່ເກ່ຍຂໍ້ຂັດແຍ່ງທີ່ມີການບໍລິຫານບວນການໄກ່ເກ່ຍອັນເໝາະສົມ.”*



# ຜູ້ໄກ່ເກັ່ຍຂໍ້ຂັດແຍ່ງທອດຖອນປະສົບການຂອງເຂົາເຈົ້າ


ຄຳນຳ......................................................7

ບົດສະເໜີ................................................10

ປະຫວັດຄວາມເປັນມາໂດຍຫຍໍ້ຂອງການໄກ່ເກ່ຍໃນປະ
ເທດສີລັງກາ.............................................15

ມີການດຳເນີນງານແນວໃດ.............................24

ຜູ້ໄກ່ເກັ່ຍຂໍ້ຂັດແຍ່ງ.......................................29

ຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງໃນປັດຈຸບັນ...................36

ບາດກ້າວຕໍ່ໜ້າ..........................................37


The Asia Foundation

Ministry of Justice

British
High Commission
Colombo

# ສານຈາກທ່ານເລຂາທິການກະຊວງຍຸດຕິທຳ



*"ໃນຂະນະທີ່ພວກເຮົາມີຄວາມພາກພູມໃຈອັນຍິ່ງໃຫ່ຍຕໍ່ກັບຜົນສຳເລັດຂອງແຜນງານຄະນະໄກ່ເກ່ຍຂໍ້ຂັດແຍ່ງຂັ້ນຊຸມຊົນພວກເຮົາຂັ້ນກະຊວງຍຸດຕິທຳມີຄວາມກະຕືລືລົ້ນສືບຕໍ່ສ້າງສາບົນພື້ນຖານຄວາມສຳເລັດນີ້ ແລະ ຮັກສາຄວາມເອົາໃຈໃສ່ປັບປຸງແຜນງານໃຫ້ດີຍິ່ງຂຶ້ນໃນອະນາຄົດຂ້າງໜ້າ."*

ຈາກເຄົ້າຄວາມຄິດໃນທ້າຍທົດສະຫວັດແປດສິບຈົນມາເຖິງກົນໄກທີ່ອອກໝາກອອກຜົນ ແລະ ນຳໃຊ້ຢ່າງແຜ່ຫຼາຍເພື່ອແກ້ໄຂຂໍ້ຂັດແຍ່ງແຜນງານຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງຂັ້ນຊຸມຊົນໃນປະເທດສີລັງກາໄດ້ມີການດຳເນີນຜ່ານມາເປັນເວລາອັນຍາວນານ.

ກະຊວງຍຸດຕິທຳມີຄວາມເຊື່ອຖືຢ່າງຍິ່ງໃນຄຸນຄ່າຂອງລະບບົບນີ້ຕັ້ງແຕ່ແລກເລີ້ມ ແລະ ຫຼາຍປີຜ່ານມາໄປຄວາມກະຕືລືລົ້ນຂອງພວກເຮົາແມ່ນບໍ່ເຄີຍຈືດຈາງ. ປະຈຸບັນແຜນງານໄດ້ຖືກດຳເນີນໄປໄກເກີນກວ່າຈຸດປະສົງເດີມທີ່ແນໃສ່ເພື່ອຫຼຸດຜ່ອນກໍລະນີຂໍ້ຂັດແຍ່ງທີ່ຄົງຂ້າງໃນຂັ້ນສານຍຸດຕິທຳ ແລະ ເພື່ອສະໜອງການເຂົ້າເຖິງຂະບວນການຍຸດຕິທຳທີ່ມີຄວາມໝາຍໃຫ້ແກ່ຊຸມຊົນຕ່າງໆໃນທົ່ວປະເທດ-ນັບຕັ້ງແຕ່ຊຸມຊົນທັງຢູ່ເຂດໃຈກາງເມືອງຫາຊຸມຊົນທີ່ຢູ່ໃນໝູ່ບ້ານຊົນະບົດຫ່າງໄກຊອກຫຼີກ. ມັນເປັນ ການໃຫ້ທິດທາງແກ່ປະຊາຊົນໃນການແກ້ໄຂຂໍ້ຂັດແຍ່ງຂອງເຂົາເຈົ້າທີ່ມີລັກສະນະສະມັກສະໝານສາມັກຄີເຊິ່ງຊ່ວຍຫຼຸດຜ່ອນຄວາມບາດໝາງ ແລະ ຮັກສາກຽດສັກສີຂອງໝົດທຸກໆຄົນ.

ດັ່ງທີ່ການປະເມີນຜົນຂອງແຜນງານຢ່າງຮອບດ້ານໄດ້ເຜີຍໃຫ້ເຫັນວ່າການໄກ່ເກ່ຍຂໍ້ຂັດແຍ່ງແມ່ນເປັນທີ່ຍອມຮັບຈາກປະຊາຊົນໃນສີລັງກາຢ່າງແຜ່ຫຼາຍໃນປະຈຸບັນເຊິ່ງມັນເປັນທາງ ເລືອກທີ່ມີຜົນ, ມີປະສິດທິພາບ ແລະ ມີຄ່າໃຊ້ຈ່າຍເໝາະສົມສາມາດທົດແທນລະບົບສານຍຸດຕິທຳທາງການ ແລະ ການບັນທຶກເກັບກຳຂອງຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງຂັ້ນຊຸມຊົນໄດ້ສະແດງໃຫ້ເຫັນເຖິງການແກ້ໄຂທີ່ໄດ້ຮັບຜົນສຳເລັດຫຼາຍກວ່າໜຶ່ງລ້ານກໍລະນີໃນໄລຍະ 20 ປີຜ່ານມາ.

ຜົນສຳເລັດຂອງແຜນງານນີ້ແມ່ນເກີດມາຈາກທັກສະຄວາມຊຳນິຊຳນານ ແລະ ການອຸທິດຕົນອັນໃຫ່ຍຫຼວງຂອງຜູ້ໄກ່ເກ່ຍຂໍ້ຂັດແຍ່ງອາສາສະມັກຫຼາຍກວ່າ 7,000 ຄົນໃນທົ່ວປະເທດ. ວຽກງານຜົນສຳເລັດຂອງເຂົາເຈົ້າຍັງຄົງກະຕຸ້ນຊຸກຍູ້ພວກເຮົາໃຫ້ສືບຕໍ່. ພວກເຮົາຍັງເປັນໜີ້ບຸນຄຸນມູນນິທິເອເຊຍ ແລະ ບັນດາຜູ້ສະໜັບສະໜູນເຊິ່ງລວມທັງຄະນະກຳມະທິການສະພາສູງແຫ່ງລາຊະອານາຈັກອັງກິດທີ່ເປັນຄູ່ຮ່ວມມາຍາວນານໃນການພັດທະນາຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງຂັ້ນຊຸມຊົນໂດຍສະເພາະແມ່ນໃນພາລະບົດບາດສະໜອງການສະໜັບໜູນທາງດ້ານເຕັກນິກ ແລະ ການເງິນສຳຫຼັບການຝຶກອົບຮົມຜູ້ໄກ່ເກ່ຍຂໍ້ຂັດແຍ່ງຢ່າງເປັນລະບົບ. ນີ້ແມ່ນພາລະບົດບາດອັນຕັດສິນຊີ້ຂາດໃນການຊ່ວຍເຫຼືອເພື່ອບັນລຸລະດັບຄວາມມີຜະສິດທິພາບອັນສູງສົ່ງທີ່ພວກເຮົາເຫັນໃນ ປະຈຸບັນນີ້.

ໃນຂະນະທີ່ພວກເຮົາມີຄວາມພາກພູມໃຈອັນຍິ່ງໃຫ່ຍຕໍ່ກັບຜົນສຳເລັດຂອງແຜນງານຄະນະໄກ່ເກ່ຍຂໍ້ຂັດແຍ່ງຂັ້ນຊຸມຊົນພວກເຮົາຂັ້ນກະຊວງຍຸດຕິທຳມີຄວາມກະຕືລືລົ້ນສືບຕໍ່ສ້າງສາບົນພື້ນຖານຄວາມສຳເລັດນີ້ ແລະ ຮັກສາຄວາມເອົາໃຈໃສ່ປັບປຸງແຜນງານໃຫ້ດີຍິ່ງຂຶ້ນໃນອະນາຄົດຂ້າງໜ້າ.

**ທ່ານ Suhada Gamalath**
ເລຂາທິການ
ກະຊວງຍຸດຕິທຳ
ເມສາ 2011



## ຄຳນຳ

ການເຂົ້າມາມີສ່ວນຮ່ວມຂອງມູນນິທິເອເຊຍໃນແຜນງານຄະນະໄກ່ເກ່ຍຂໍ້ຂັດແຍ່ງຂັ້ນຊຸມຊົນທີ່ຈັດຕັ້ງປະຕິບັດໂດຍກະຊວງຍຸດຕິທຳແມ່ນໄດ້ເລີ້ມຕົ້ນມາຕັ້ງແຕ່ປີ 1990 ເມື່ອທາງກະຊວງໄດ້ເລີ້ມທາບຖາມການສະໜັບສະໜູນຈາກມູນນິທິເອເຊຍ. ພວກເຮົາໄດ້ມີສ່ວນຮ່ວມຕັ້ງແຕ່ນັ້ນມາໃນການສ້າງ ແລະ ທະວີຄວາມເຂັ້ມແຂງຂີດຄວາມສາມາດດ້ານເຕັກນິກໃຫ້ແກ່ບັນດາຄູຝຶກຜູ້ໄກ່ເກ່ຍ ແລະ ຜູ້ໄກ່ເກ່ຍຂໍ້ຂັດແຍງເອງ. ໂດຍໄດ້ຮັບການສະໜັບສະໜູນຈາກອົງການຊ່ວຍເຫຼືອຕ່າງໆເຊັ່ນອົງການ USAID ແລະ ຫວ່າງມໍ່ໆມານີ້ເອງຄະນະກຳມະທິການສະພາສູງແຫ່ງລາຊະອານາຈັກອັງກິດໄດ້ໃຫ້ການຊ່ວຍເຫຼືອຂະຫຍາຍຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງອອກໄປສູ່ພາກຕາເວັນອອກ ແລະ ຕໍ່ມາແມ່ນໃນພາກເໜືອ. ໂຄງການຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງຂັ້ນຊຸມຊົນເປັນແຜນງານຊ່ວຍເຫຼືອຂອງມູນນິທິເອເຊຍທີ່ມີໄລຍະຍາວນານກວ່າໝູ່ໃນປະເທດສີລັງກາ ແລະ ພວກເຮົາມີຄວາມພາກພູມໃຈຫຼາຍຕໍ່ກັບຜົນສຳເລັດຂອງມັນ.

ເມື່ອບໍ່ດົນມານີ້ການໃຫ້ບໍລິການໄກ່ເກ່ຍຂໍ້ຂັດແຍ່ງໃນປະເທດສີລັງກາໄດ້ຂະຫຍາຍຕົວຢ່າງວ່ອງໄວທັງໃນດ້ານເຂດພື້ນທີ່ ແລະ ຂອບເຂດພ້ອມດຽວກັນໃນປັດຈຸບັນການໄກ່ເກ່ຍຂໍ້ຂັດແຍ່ງແມ່ນເປັນທີ່ຮູ້ຈັກກັນດີ ແລະ ເປັນທີ່ຍອມຮັບຢ່າງກວ້າງຂວາງວ່າເປັນອີກຮູບແບບທາງເລືອກໜຶ່ງໃນການແກ້ໄຂບັນຫາພ້ອມທັງສະໜອງການເຂົ້າເຖິງຂະບວນການຍຸດຕິທຳຢ່າງຖ່ວງທັນເວລາໃຫ້ແກ່ຊຸມຊົນຕ່າງໆທົ່ວປະເທດ.

ນັບແຕ່ປີ 2004 ມູນນິທິເອເຊຍທີ່ສະໜັບສະໜູນໂດຍຄະນະກຳມະທິການສະພາສູງແຫ່ງລາຊະອານາຈັກອັງກິດໄດ້ລິເລີ້ມບົດບາດອັນສຳຄັນໃນການຊ່ວຍເຫຼືອກະຊວງຍຸດຕິທຳເພື່ອຟື້ນຟູຄືນຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງຂັ້ນຊຸມຊົນພ້ອມນັ້ນກໍ່ໄດ້ສ້າງຕັ້ງຄະນະຜູ້ໄກ່ເກ່ຍໃໝ່ຢູ່ແຂວງຕ່າງໆທາງພາກເໜືອ ແລະ ພາກຕາເວັນອອກເຊິ່ງເປັນຂົງເຂດທີ່ການຂັດແຍ່ງທາງການເມືອງໄດ້ຍຸດສະຫງັກການໃຫ້ບໍລິການທີ່ສຳຄັນນີ້ໃຫ້ແກ່ປະຊາຊົນ ແລະ ຊຸມຊົນຕ່າງໆ. ພວກເຮົາຍັງໄດ້ເພີ້ມທະວີຂີດຄວາມສາມາດໃນການຝຶກອົບຮົມການໄກ່ເກ່ຍຂັ້ນທ້ອງຖິ່ນໂດຍຜ່ານສະຖາບັນການຝຶກອົບຮົມໄກ່ເກ່ຍຂໍ້ຂັດແຍ່ງແຫ່ງທຳອິດໃນສີລັງກາລວມທັງສູນໄກ່ເກ່ຍຂໍ້ຂັດແຍ່ງ ແລະ ການຝຶກອົບ ຮົມການໄກ່ເກ່ຍຂໍ້ຂັດແຍ່ງເຊິ່ງແມ່ນມູນນິທິເອເຊຍໄດ້ປະກອບສ່ວນຕິດຕັ້ງເຄື່ອງອຸປະກອນຮັບໃຊ້. ຫວ່າງມໍ່ໆ ມານີ້ມູນນິທິເອເຊຍຮ່ວມກັບກະຊວງຍຸດຕິທຳໄດ້ພັດທະນາປື້ມຄູ່ມືສຳຫຼັບຄູຝຶກ ແລະ ຜູ້ຝຶກອົບຮົມເພື່ອກາຍເປັນຄູຝຶກອົບຮົມການໄກ່ເກ່ຍພາຍໃຕ້ການຊີ້ນຳຂອງຊ່ຽນຊານດ້ານການໄກ່ເກ່ຍຂໍ້ຂັດແຍ່ງສາກົນຄືທ່ານ ດຣ. Christopher Moore.

*"ຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງຂັ້ນຊຸມຊົນຂອງກະຊວງຍຸດຕິທຳເປັນແຜນງານຊ່ວຍເຫຼືອຂອງມູນນິທິເອເຊຍທີ່ມີໄລຍະຍາວນານກວ່າໝູ່ໃນປະເທດສີລັງກາ ແລະ ພວກເຮົາມີ ຄວາມພາກພູມໃຈຢ່າງຍິ່ງຕໍ່ ກັບຜົນສຳເລັດຕ່າງໆຂອງມັນ."*

ການໄກ່ເກ່ຍຂໍ້ຂັດແຍ່ງແມ່ນໄດ້ຮັບໝາກຜົນສຳເລັດອັນໂດດເດັ່ນໃນປະເທດສີລັງກາທັງນັ້ນກໍ່ເພາະໄດ້ຮັບຄວາມເອົາໃຈໃສ່ຈາກລັດຖະບານຢ່າງເຕັມສ່ວນເຊິ່ງສະແດງອອກໃນຄວາມຈິງຈາວຫ້າວຫັນຂອງພະນັກງານລັດຖະກອນກະຊວງຍຸດຕິທຳ, ການປະກອບສ່ວນຂອງແຜນງານ, ຄວາມເອົາໃຈໃສ່ຂອງປາຊາຊົນຜູ້ທີ່ອາສາສະມັກເປັນຜູ້ໄກ່ເກ່ຍ, ການຝຶກອົບຮົມທີ່ກວ້າງຂວາງ ແລະ ການປະເມີນຜົນຂະບວນການໄກ່ເກ່ຍລວມທັງຄະນະກຳມະທິການໄກ່ເກ່ຍຂໍ້ຂັດແຍ່ງທີ່ມີການບໍລິຫານຂະບວນການໄກ່ເກ່ຍອັນເໝາະສົມ.

ຜົນສຳເລັດຂອງແຜນງານຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງຂັ້ນຊຸມຊົນແມ່ນມີຫຼັກຖານຂໍ້ອ້າງອີງຕົວຈິງທີ່ວ່າບັນດາປະເທດອື່ນໆ - ໂດຍສະເພາະປະເທດຈີນ, ມົງໂກນ ແລະ ເນປານ - ໄດ້ນຳໃຊ້ແບບຈຳລອງຂອງປະເທດສີລັງກາເພື່ອພັດທະນາລະບົບການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນຊຸມຊົນຂອງເຂົາເຈົ້າເອງ. ມູນນິທິເອເຊຍໄດ້ຊ່ວຍອຳນວຍຄວາມສະດວກໃນການເຂົ້າຮ່ວມຂອງປະເທດເຫຼົ່ານີ້ໂດຍຜ່ານເຄືອຂ່າຍຫ້ອງການປະຈຳພື້ນທີ່ແລະຊ່ວຍຈັດຕັ້ງ 'ຕົ້ນແບບ'ຂອງສີລັງກາໃນການໄກ່ເກ່ຍຂໍ້ຂັດແຍ່ງທົ່ວພາກພື້ນອາຊີ.

ການປະເມີນຜົນແຜນງານເມື່ອມໍ່ໆຜ່ານມານີ້ໄດ້ຊີ້ໃຫ້ເຫັນຫຼັກຖານທີ່ສຳຄັນວ່າຄະນະຜູ້ໄກ່ເກັ່ຍຂໍ້ຂັດແຍ່ງໄດ້ສ້າງຜົນກະທົບໃນທາງບວກຕໍ່ຊຸມຊົນຕ່າງໆທົ່ວປະເທດ. ແປດໃນສິບຂອງຄູ່ກໍລະນີ ແລະ ຜູ້ໄກ່ເກ່ຍຂໍ້ຂັດແຍ່ງທີ່ໄດ້ສຳຫຼວດໄດ້ຊີ້ແຈງວ່າການໄກ່ເກັ່ຍຂໍ້ຂັດແຍ່ງໄດ້ສົ່ງເສີມຄວາມສະຫງົບສຸກ ແລະ ກະຕຸ້ນຊຸກຍູ້ການໃຊ້ຊີວິດຢູ່ຮ່ວມກັນ. ມັນເປັນທີ່ປິຕິຍິນດີວ່າບັນດາສິ່ງທີ່ໄດ້ພົບພໍ້ຈາກການປະເມີນຜົນໄດ້ຊີ້ໃຫ້ເຫັນເຖິງຄວາມເພິ່ງພໍໃຈທີ່ສູງຕໍ່ກັບການໄກ່ເກ່ຍຂໍ້ຂັດແຍ່ງເຊິ່ງເປັນອີກທາງເລືອກໜຶ່ງໃຫ້ແກ່ລະບົບການແກ້ໄຂຂໍ້ຂັດແຍ່ງ. ຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງຂັ້ນຊຸມຊົນທີ່ຖືວ່າໃໝ່ສົມຄວນໄດ້ສະແດງບົດບາດໃນການເຮັດໃຫ້ການເຂົ້າເຖິງຂະບວນການຍຸດຕິທຳທີ່ງ່າຍຂຶ້ນສຳຫຼັບຊຸມຊົນຕ່າງໆທີ່ຢູ່ບັນດາແຂວງພາກຕາເວັນອອກ. ພວກເຮົາເຊື່ອວ່າເຂົາເຈົ້າສາມາດເຮັດໄດ້ເຊັ່ນດຽວກັນກັບປະຊາຊົນທີ່ຢູ່ທາງພາກເໜືອ.

ມູນນິທິເອເຊຍກຳລັງສະໜັບສະໜູນກະຊວງຍຸດຕິທຳນຳຂໍ້ສະເໜີແນະທີ່ໄດ້ຮັບຈາກການປະເມີນຜົນຂຶ້ນພິຈາລະນາຕໍ່ໄປ. ໂດຍສະເພາະພວກເຮົາແມ່ນກຳລັງຊ່ວຍເຫຼືອອອກແບບລະບົບການຕິດຕາມແລະປະເມີນຜົນທີ່ຖີ່ຖ້ວນເຊິ່ງລວມມີການນຳໃຊ້ໂທລະສັບເພື່ອສົ່ງຂໍ້ມູນທັງນັ້ນກໍ່ເພື່ອໃຫ້ທັນກັບເວລາຕົວຈິງຂອງການປະເມີນຜົນແຜນງານໄກ່ເກ່ຍຂໍ້ຂັດແຍ່ງ. ໃນນາມຂອງມູນນິທິເອເຊຍຂ້າພະເຈົ້າຂໍສະແດງຄວາມປິຕິຍິນດີຕໍ່ກະຊວງຍຸດຕິທຳໃນການສ້າງຕັ້ງແລະດຳເນີນແຜນງານນີ້ໄດ້ຜົນສຳເລັດເປັນຢ່າງສູງ ແລະ ທັງມີຄວາມພຽບພ້ອມແລະມີຄວາມປາດຖະໜາທີ່ຈະແບ່ງປັນຜົນສຳເລັດນີ້ຮ່ວມກັບບັນດາປະເທດອື່ນໃນອາຊີ. ຂ້າພະເຈົ້າຂໍຂອບໃຈແລະຮູ້ບຸນຄຸນສະມາຊິກຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງນັບພັນໆທ່ານເຊິ່ງອາໄສຢູ່ທົ່ວທຸກມູມຂອງປະເທດ. ເຂົາເຈົ້າໄດ້ສະໜອງການບໍລິການທີ່ປະທັບໃຈໃຫ້ແກ່ຊຸມຊົນຂອງເຂົາເຈົ້າໂດຍປັດສະຈາກການໃຫ້ສິ່ງຕອບແທນໃດໆ ແລະ ທັງເປັນພະເອກຂອງແຜນງານຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງຂັ້ນຊຸມຊົນ.



ສຸດທ້າຍຂ້າພະເຈົ້າຂໍສະແດງຄວາມຂອບໃຈມາຍັງຜູ້ຮຽບຮຽງຂຽນປຶ້ມເຫຼັ້ມນີ້ຄືທ່ານ Michelle Gunawar-dana ເຊິ່ງທ່ານໄດ້ຈັບທາດແທ້ເນື້ອໃນຂອງແຜນ ງານ ແລະ ໝາກຜົນອັນໂດດເດັ່ນໄດ້ຢ່າງງົດງາມ.

ປຶ້ມເຫຼັ້ມນີ້ແມ່ນຂອງຂັວນ ແລະ ຄຳສັນລະເສີນແກ່ແຜນງານທີ່ໄດ້ຮັບຜົນສຳເລັດອັນສູງສົ່ງຂອງລັດຖະບານປະເທດສີລັງກາ ແລະ ພ້ອມທັງໃຫ້ຄວາມກະຈ່າງແຈ້ງກ່ຽວກັບແບບຈຳລອງຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງຂອງສີລັງກາ ແລະ ປະຊາຊົນຜູ້ທີ່ໄດ້ຂັບເຄື່ອນ ແລະ ດຳເນີນແຜນງານນີ້ຕະຫຼອດໄລຍະ 20 ປີຜ່ານມາ.



ທ່ານ Nilan Fernando
ຜູ້ແທນປະຈຳປະເທດສີລັງກາ
ມູນນິທິເອເຊຍ
ເມສາ 2011

## ບົດສະເໜີ



ຖະໜົນສາຍໜຶ່ງທອດຍາວໄປຫາໂຮງຮຽນປະຈຳໝູ່ບ້ານ ຫ້ອງໂຖງໃຫ່ຍທີ່ມີຕັ່ງໄມ້ທາສີນ້ຳມັນລຽນເປັນແຖວປິ່ນໜ້າໄປຫາກະດານດຳ. ມັນເປັນວັນເສົາແລະບັນດາເດັກນ້ອຍຕ່າງກໍ່ຫອບຫິ້ວເຄື່ອງດົນຕີເພື່ອຝຶກຊ້ອມຢູ່ໃຕ້ກ້ອງຮົ່ມໄມ້ໜຶ່ງ.

ນີ້ແມ່ນເປັນຮູບພາບກິດຈະວັດປະຈຳວັນ. ຍົກເວັ້ນຜ້າສາກຜືນໃຫ່ຍຫ້ອຍຢູ່ປະຕູໂຂງທີ່ຕີພິມຄຳວ່າ“ຄະນະຜູ້ໄກ່ເກ່ຍ”ເຊິ່ງເປັນການໃຫ້ສັນຍານວ່າວັນນີ້ຈະມີຫຍັງເກີດຂຶ້ນ ແລະ ຕາມຈິງເປັນເຫດການຕື່ນຕາຕື່ນໃຈສົມຄວນ.

ທ່ານຜູ້ອາວຸໂສທ່ານໜຶ່ງເຊິ່ງອ້ອມຂ້າງດ້ວຍຍິງແລະຊາຍຈຳນວນ 18 ຄົນທີ່ເຝົ້າລໍຢ່າງໃຈຈົດໃຈຈໍໄດ້ລຸກຂຶ້ນ ແລະ ຮຽກເອີ້ນເອົາກຸ່ມຄົນຈຳນວນໜຶ່ງເຊິ່ງໄດ້ມາຮວມຕົວກັນຢູ່ທາງດ້ານໜ້າຫ້ອງໂຖງໃຫ່ຍ. ທ່ານຜູ້ອາວຸໂສກໍ່ເລີ້ມປະກາດວ່າກອງປະຊຸມຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງກຳລັງຈະເປີດຂຶ້ນແລ້ວແລະຮ້ອງຂໍໃຫ້ໝົດທຸກໆຄົນຮ່ວມສວດມົນ. ຫຼັງຈາກນັ້ນລາວໄດ້ເລີ້ມເຫຼົ່າເລື່ອງລາວທີ່ມາທີ່ໄປຂອງຂໍ້ຂັດແຍ່ງແລະຄ່ອຍໆແນະນຳເຊື້ອເຊີນບຸກຄົນເຫຼົ່ານັ້ນທີ່ໄດ້ນຳຂໍ້ຂັດແຍ່ງຂອງເຂົາເຈົ້າຂຶ້ນມາເພື່ອໄກ່ເກ່ຍໃຫ້ເລີ້ມຂະບວນການໄກ່ເກ່ຍດ້ວຍຄວາມມີຈິດໃຈອັນເປີດກວ້າງ, ຄຳນຶງສະເໝີເຖິງຄຸນຄ່າຂອງຄວາມຜູກພັນຂອງເຂົາເຈົ້າກັບອີກຝ່າຍໜຶ່ງແລະໃຫ້ໃຊ້ຄວາມພະຍາຍາມໃຫ້ເຖິງທີ່ສຸດເພື່ອຊອກຫາຫົນທາງທີ່ຈະນຳໄປສູ່ການແກ້ໄຂບັນຫາຂອງເຂົາເຈົ້າໂດຍສັນຕິວິທີແລະດ້ວຍຄວາມສາມັກຄີ. ຢ່າງໃດກໍ່ຕາມລາວຍັງໄດ້ຢໍ້າຕື່ມອີກວ່າຂະບວນການໄກ່ເກ່ຍທັງໝົດນີ້ແມ່ນເກີດຂຶ້ນດ້ວຍຄວາມສະໝັກໃຈ ແລະ ບໍ່ມີໃຜທີ່ຮູ້ສຶກຖືກບີບບັງຄັບໃຫ້ເຮັດການຕັດສິນໃຈທີ່ພວກເຂົາເຈົ້າບໍ່ຢາກຈະເຮັດ. ຫຼັງຈາກນັ້ນລາວໄດ້ອະທິບາຍເປັນຄຳເວົ້າງ່າຍໆວ່າຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງມີການດຳເນີນງານຄືແນວໂຮງຮຽນຢູ່ Kaduwela ເຊິ່ງເປັນສະຖານທີ່ທີ່ສະພາໄກ່ເກ່ຍປະ



*ໂຮງຮຽນຢູ່ Kaduwela ເຊິ່ງເປັນສະຖານທີ່ທີ່ສະພາໄກ່ເກ່ຍປະຈຳການທຸກໆວັນເສົາ*

ຈຳການທຸກໆວັນເສົາໃດ ແລະ ບົດບາດຂອງຜູ້ໄກ່ເກ່ຍທີ່ມີໃນຂະບວນການໄກ່ເກ່ຍຂໍ້ຂັດແຍ່ງນີ້.

ລຳດັບຕໍ່ມາການໄກ່ເກ່ຍຂໍ້ຂັດແຍ່ງກໍ່ໄດ້ເລີ້ມຂຶ້ນ ແລະ ຄະນະຜູ້ໄກ່ເກ່ຍທັງສາມທ່ານກໍ່ໄດ້ຍາຍໄປຢູ່ອີກມູມໜຶ່ງຂອງຫ້ອງ. ຄູ່ກໍລະນີທັງສອງໄດ້ນັ່ງລົງຕໍ່ໜ້າຜູ້ໄກ່ເກ່ຍ ແລະ ເລີ້ມເຫຼົ່າເລື້ອງລາວຄວາມເປັນມາເຊິ່ງມັນແມ່ນການໂຕ້ຖຽງເລັກໆນ້ອຍໆລະຫວ່າງເພື່ອນບ້ານໃກ້ຄຽງທີ່ນຳໄປສູ່ຕົບຕີ....ຕໍ່ສູ້ຂ້າມເຂດແດນ...ຂໍ້ຂັດແຍ່ງພາຍໃນ...ຂໍ້ຖົກຖຽງກ່ຽວກັບຂໍ້ຕົກລົງທາງທຸລະກິດ ຫຼື ໜີ້ສິນທີ່ຍັງບໍ່ທັນໄດ້ຈ່າຍ...

ໃບໜ້າຂອງຫຼາຍທ່ານຕ່າງກໍ່ເຕັມໄປດ້ວຍຄວາມໜັກອົກໜັກໃຈ. ໃບໜ້າບາງທ່ານກໍ່ຄ້ຳກ່ຳເຕັມໄປດ້ວຍຄວາມໂມໂຫໂຖໂສ. ທົ່ວທັງຫ້ອງໂຖງແມ່ນເຕັ້ມໄປດ້ວຍສຽງຮື່ມຮ່ຳ, ສະລັບປ່ຽນດ້ວຍສຽງຮ້ອງຂຶ້ນບາງຄັ້ງຄາວ ຫຼື ສຽງເວົ້າດ້ວຍຄວາມສະອື້ນທີ່ເປັນຄວາມໂກດຮ້າຍເກີດຈາກຄວາມອັດອັ້ນພາຍໃນ, ຄວາມໝົດຫວັງຫຼືການລະບາຍອອກມາຈາກຄວາມເຈັບປວດ. ແຕ່ລະຂັ້ນຕອນຈະກິນເວລາປະມານ 20 ນາທີ ຫຼື ໜຶ່ງຊົ່ວໂມງເຄິ່ງ. ມັນບໍ່ມີການກຳນົດເວລາແລະໃນຄວາມເປັນຈິງແລ້ວມັນມີພຽງແຕ່ກົດກະຕິກາພຽງເລັກໜ້ອຍ, ພຽງແຕ່ການກ່າວເປີດເທົ່ານັ້ນ.



“ຂ້າພະເຈົ້າມີຄວາມປາດຖະໜາທີ່ຈະເຫັນຜູ້ໄກ່ເກ່ຍເປັນແມ່ຍິ່ງຫຼາຍຂື້ນຢູ່ໃນຄະນະສະພາຂອງພວກເຮົາ. ໂດຍສະເພາະເມື່ອພວກເຮົາຕ້ອງການທີ່ຈະໄກ່ເກ່ຍຂໍ້ຂັດແຍ່ງພາຍໃນ, ຂ້າພະເຈົ້າສາມາດເຫັນໄດ້ວ່າຄູ່ກໍລະນີທີ່ເປັນແມ່ຍິງປາກເວົ້າໄດ້ຢ່າງມີອິດສະລະກວ່າເມື່ອມີຜູ້ໄກ່ເກ່ຍເປັນແມ່ຍິງຢູ່ໃນຄະນະ. ເມື່ອຂ້າພະເຈົ້າປະກອບສ່ວນເຂົ້າໃນການຕັ້ງຄະນະເພື່ອໄກ່ເກ່ຍຂໍ້ຂັດແຍ່ງຕ່າງໆທີ່ລັກສະນະເຊັ່ນນີ້ ຂ້າພະເຈົ້າຈະພະຍາຍາມສະເໜີໃຫ້ມີຢ່າງໜ້ອຍແມ່ຍິງໜຶ່ງທ່ານຮ່ວມຢູ່ໃນຄະນະໄກ່ເກ່ຍ. ຂ້າພະເຈົ້າຮູ້ດີວ່າໃນຫຼາຍໆພື້ນທີ່ນັ້ນມີແມ່ຍິງໜ້ອຍແລະຄວາມຫວັງກໍ່ເປັນໄປບໍ່ໄດ້ເຊິ່ງນັ້ນມັນກໍ່ເປັນຕາໜ້າເສຍດາຍ.”

ທ່ານນາງ Mallika Bandula (ອາຍຸ 67 ປີ)
ປະຖານຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງຂອງເມືອງ Kaduwela



ເລື້ອຍໆທີ່ການເວົ້າຄວາມກັນແບບຊ່ອງໜ້າມີຄວາມຄືບໜ້າພຽງເລັກນ້ອຍໃນຊ່ວງທຳອິດແລະຄູ່ກໍລະນີຖືກຂໍຮ້ອງໃຫ້ກັບບ້ານໄປກ່ອນ, ກັບໄປຄິດທົບທວນບັນຫາຕ່າງໆ,ພິຈາລະນາຂໍ້ສະເໜີຕ່າງໆທີ່ອີກຝ່າຍໜຶ່ງອາດຍອມຮັບໄດ້ ແລະ ກັບຄືນມາໃໝ່ໃນອາທິດຕໍ່ໄປ. ຫຼັງຈາກທີ່ໄດ້ຊ່ອງໜ້າກັນສອງລືສາມຄັ້ງຜ່ານໄປຄວາມເຂົ້າໃຈກັນແລະກັນກໍ່ເລີ້ມມີຫຼາຍຂຶ້ນ. ບາງຄັ້ງຄູ່ກໍລະນີເປັນຄົນຫົວແຂງຫຼາຍເກີນໄປຫຼືໂອນເອນໄປຫາການຕໍ່ສູ້ຂອງເຂົາເຈົ້າຫຼາຍເກີນໄປເກີນກວ່າທີ່ຈະພົບຂໍ້ແກ້ໄຂທີ່ມີຄວາມໝາຍ. ແຕ່ວ່າມີຫຼາຍກວ່າເຄິ່ງໜຶ່ງທີ່ຂໍ້ຂັດແຍ່ງໄດ້ຮັບການໄກ່ເກ່ຍແລະຕົກລົງກັນຢ່າງມີມິດຕະພາບ. ທັງສອງຄູ່ແຍກກັນໄປທາງໃຜທາງມັນ,

ທ່ານນາງ Bandula ແມ່ນໜຶ່ງໃນກຸ່ມທະນາຍຄວາມສານຄອບຄົວກຸ່ມທຳອິດຈາກກະຊວງຍຸດຕິທຳທີ່ໄດ້ຮັບການຝຶກອົບຮົມການໄກ່ເກັ່ຍຈາກທ່ານ ດຣ. Christopher Moore ໃນປີ 1989. ທ່ານໄດ້ເຮັດວຽກໃຫ້ກັບກະຊວງໃນຖານະເປັນຄູຝຶກຜູ້ໄກ່ເກ່ຍເປັນເວລາກວ່າ 13 ປີ ແລະ ກໍ່ໄດ້ອອກກິນເບັ້ຍບຳນານ, ແລະ ຍັງໄດ້ປະກອບສ່ວນຊ່ວຍສ້າງຕັ້ງສູນໄກ່ເກ່ຍ ແລະ ຝຶກອົບຮົມການໄກ່ເກ່ຍຂໍ້ຂັດແຍ່ງ ແລະ ທ່ານກໍ່ໄດ້ປະຈຳການຢູ່ທີ່ນີ້ຈົນເຖິງປະຈຸບັນ. ໃນປີ 2000 ທ່ານນາງ Bandula ໄດ້ອາສາສະມັກເປັນຜູ້ໄກ່ເກ່ຍຂໍ້ຂັດແຍ່ງແລະປະຈຸບັນທ່ານໄດ້ນຳເອົາທຸກໆຄວາມຮູ້ ແລະ ປະສົບການລົງປະຕິບັດຕົວຈິງ ແລະ ບໍລິຫານຄະນະຢ່າງມີປະສິດທິພາບສູງ

*ໃນການໄກ່ເກ່ຍຂໍ້ຂັດແຍ່ງຫຼາຍກວ່າ 300 ຄັ້ງເຊັ່ນດຽວກັນນີ້ທົ່ວປະເທດ, ໄດ້ມີຫຼາຍກວ່າ 100,000 ກໍລະນີຂັດແຍ່ງໄດ້ຊ່ອງໜ້າກັນໃນທຸກໆປີໂດຍມີອາສາສະມັກ 7,000 ຄົນ*

ຖ້າບໍ່ແມ່ນເປັນເພື່ອນຢ່າງໜ້ອຍກໍ່ເປັນປະຊາຊົນພົນລະເຮືອນປົກກະຕິເຊິ່ງໄດ້ປົດປ່ອຍນ້ຳໜັກອອກຈາກບ່າໄຫຼຂອງເຂົາເຈົ້າ.
ເວົ້າລວມແລ້ວການໄກ່ເກ່ຍໄດ້ເຮັດໃຫ້ອີກໜຶ່ງຂໍ້ຂັດແຍ່ງໜ້ອຍລົງເຊິ່ງຂໍ້ຂັດແຍ່ງດັ່ງກ່າວໄດ້ເຮັດໃຫ້ຄວາມສາມັກຄີປອງດອງຂອງຊຸມຊົນກາຍເປັນຈຸດດ່າງພ້ອຍ.

ເພື່ອເຮັດໃຫ້ການໄກ່ເກ່ຍທີ່ດີເກີດຂຶ້ນຜູ້ໄກ່ເກ່ຍຂໍ້ຂັດແຍ່ງຈະຕ້ອງເປັນຄົນທີ່ມີຄວາມອົດທົນສູງ, ມີສັນຕິໄມຕີ, ຊຸກຍູ້ ແລະ ມີຄວາມກະລຸນາປະກອບກັບທັກສະທີ່ສາມາດດຶງດູດເອົາຄວາມເຊື່ອໝັ້ນອອກມາໄດ້, ສາມາດເຂົ້າເຖິງກົກເຖິງຮາກຂອງບັນຫາ, ຊອກຫາທົນທາງເພື່ອໃຫ້ຄູ່ກໍລະນີສາມາດເຫັນແລະເຂົ້າໃຈຈຸດຢືນຂອງແຕ່ລະຝ່າຍ ແລະ ຊອກເຫັນຄວາມປະນີປະນອມທີ່ຍອມຮັບໄດ້. ພວກເຂົາເຈົ້າຈະຕ້ອງໄດ້ຮັບຄວາມເຄົາລົບນັບຖື ແລະ ຄວາມໄວ້ວາງໃຈຈາກໝົດທຸກໆຄົນທີ່ມີໜ້າຢູ່ນັ້ນ. ພ້ອມດຽວກັນພວກເຂົາເຈົ້າຈະຕ້ອງມີຄວາມຍິນຍອມທີ່ຈະເສຍສະລະເວລາທ້າຍອາທິດເປັນອາທິດໆເພື່ອເຂົ້າຮ່ວມການໄກ່ເກ່ຍເຊິ່ງມັນເປັນການບໍລິການທີ່ບໍ່ໄດ້ຮັບຜົນຕອບແທນເປັນເງິນຕາ.

ໃນແຕ່ລະປີຈະມີການໄກ່ເກ່ຍຂໍ້ຂັດແຍ່ງຫຼາຍກວ່າ 300 ຄັ້ງທີ່ຄ້າຍຄືກັນນີ້ທົ່ວປະເທດ. ທຸກໆປີກໍ່ຈະມີອາສາສະມັກ 7,000 ຄົນຮັບຟັງກໍລະນີຂັດແຍ່ງຫຼາຍກວ່າ 100,000 ກໍລະນີ.

ມີບາງຄັ້ງທີ່ການໄກ່ເກ່ຍໄດ້ຈົບລົງດ້ວຍການໂອບກອດກັນຢ່າງກົນໃຈ ແລະ ມີການກັບຄືນມາດີກັນດ້ວຍຄວາມປື້ມປິຕິຍິນດີລະຫ່ວາງສະມາຊິກຄອບຄົວ, ເພື່ອນບ້ານ ຫຼື ຄູ່ຮ່ວມທຸລະກິດ. ສຳຫຼັບຜູ້ໄກ່ເກ່ຍ ແລະ ໝົດທຸກໆຄົນທີ່ໄດ້ປະກອບສ່ວນຢ່າງບໍ່ມີຄວາມອິດເມື່ອຍຢູ່ເບື້ອງຫຼັງຂະບວນການໄກ້ເກ່ຍຂໍ້ຂັດແຍ່ງນີ້ແມ່ນວິນາທີແຫ່ງຄວາມພາກພູມໃຈໃນວຽກງານນີ້.

## ປະຫວັດໂດຍຫຍໍ້ຂອງການໄກ່ເກ່ຍຂໍ້ຂັດແຍ່ງໃນປະເທດສີລັງກາ

ປະເພນີການໄກ່ເກ່ຍເຊິ່ງເປັນຮູບແບບການແກ້ໄຂຂໍ້ຂັດແຍ່ງແມ່ນສ່ວນໜຶ່ງທີ່ຮາກຢັ່ງລົງເລິກຢູ່ໃນວັດທະນະທຳສີລັງກາ. ຫຼັກຖານທີ່ໄດ້ມີການບັນທຶກໄວ້ເມື່ອປີ 425 ກ່ອນຄຼິສຕະສັກະຫຼາດກໍ່ຄືໃນຊ່ວງໄລຍະເວລາການປົກຄອງຂອງພະລາຊາ Pandukabaya ໄດ້ມີຄະນະໝູ່ບ້ານທີ່ຮູ້ຈັກກັນໃນນາມ Gam Sabha ໄດ້ພົບກັນເພື່ອ 'ຟັງຄຳຮ້ອງທຸກ ແລະຊອກຫາຄວາມຍຸດຕິທຳລະຫວ່າງເພື່ອນບ້ານ'. ການພົບປະກັນຂອງຄະນະໝູ່ບ້ານເຊິ່ງປະກອບມີຜູ້ເຖົ້າຜູ້ແກ່ໃນໝູ່ບ້ານໄດ້ຈັດຂຶ້ນທີ່ລານຊຸມນຸມຂອງໝູ່ບ້ານ- ບາງຄັ້ງກໍ່ງ່າຍໆກ້ອງຮົ່ມໄມ້ - ເພື່ອຮັບຟັງຂໍ້ຂັດແຍ່ງຂອງການລັກເລັກຂະໂມຍນ້ອຍ, ຂໍ້ຂັດແຍ່ງຂອງເຂດແດນ ແລະ ຂໍ້ຂັດແຍ່ງຫຼາກຫຼາຍຮູບແບບທີ່ເກີດຂຶ້ນໃນໝູ່ບ້ານຂອງເຂົາເຈົ້າ. ເຖິງແມ່ນວ່າຈະມີບາງອົງປະກອບຂອງການວິນິໄສຢູ່ໃນຂະບວນການໄກ່ເກ່ຍນັ້ນຈຸດປະສົງຫຼັກຂອງການເຕົ້າໂຮມຄະນະໝູ່ບ້ານແມ່ນເພື່ອເຮັດໃຫ້ເກີດຄວາມຍຸດຕິທຳ ແລະ ການໄກ່ເກ່ຍທີ່ມີຄວາມຮຽບຮ້ອຍຫຼາຍກວ່າທີ່ຈະເປັນການຮ້າຍວ່າດຸດັນ ແລະ ລົງໂທດກັນ.

ຄະນະໝູ່ບ້ານ (Gam Sabha) ໄດ້ມີຄວາມຍືນຍົງຢູ່ຕະຫຼອດສັດຕະຫວັດຂອງການເປັນຫົວເມືອງຂຶ້ນຂອງປະເທດຮອນແລນ ແລະ ປອກຕຸການແຕ່ໄດ້ຫາຍສາບສູນໄປຈາກການບັນທຶກປະຫວັດສາດທີ່ມີການປຸ່ງແປງແບບບິດເບືອນເຊິ່ງໄດ້ເກີດຂຶ້ນໃນຊ່ວງການປົກຄອງຂອງປະເທດອັງກິດ (1796 - 1948). ເຈົ້າເມືອງຂຶ້ນອັງກິດໄດ້ພະຍາຍາມທີ່ຈະຟື້ນຟູລະບົບເພື່ອຈັດການກັບຂໍ້ຂັດແຍ່ງພາຍໃນທ້ອງຖິ່ນໂດຍການອອກກົດລະບຽບວ່າດ້ວຍຊຸມຊົນໝູ່ບ້ານ.

ການຮວມຊຸມນຸມຂອງຜູ້ເຖົ້າຜູ້ແກ່ປະຈຳບ້ານ
ໃນສັດຕະຫວັດທີ 19 ທີ່ເມືອງ Ceylon



*ປະເພນີການໄກ່ເກ່ຍເຊິ່ງເປັນຮູບແບບການ ແກ້ໄຂຂໍ້ຂັດແຍ່ງແມ່ນສ່ວນໜຶ່ງທີ່ຮາກຢັ່ງລຶງ ເລິກຢູ່ໃນວັດທະນະທຳສີລັງກາ. ຫຼັກຖານທີ່ ໄດ້ມີການບັນທຶກໄວ້ເມື່ອປີ 425 ກ່ອນຄູິສຕະ ສັກະຫຼາດກໍ່ຄືໃນຊ່ວງໄລຍະເວລາການປົກ ຄອງຂອງພະລາຊາ Pandukabaya ໄດ້ມີ ຄະນະໝູ່ບ້ານທີ່ຮູ້ຈັກກັນໃນນາມ Gam Sabha ໄດ້ພົບກັນເພື່ອ 'ຟັງຄຳຮ້ອງທຸກ ແລະ ຊອກຫາຄວາມຍຸດຕິທຳລະຫວ່າງ ເພື່ອນບ້ານ'.*

ບົດຄຳສັ່ງຂອງປີ 1871 ແລະ ຄຳສັ່ງສານຊົນະບົດປີ 1945 ໄດ້ໃຫ້ສານຍຸດຕິທຳສຳລະຄວາມເຫຼົ່ານີ້ມີບົດບາດໜ້າທີ່ໃນລະບົບສານຍຸດຕິທຳຂອງລາຊະອານະຈັກອັງກິດແຕ່ວ່າຄວາມມີປະສິດທິຜົນຂອງລະບົບສານເຫຼົ່ານີ້ແມ່ນມີຂີດຈຳກັດ.

ໃນປີ 1958 ສານຊົນະບົດໄດ້ຖືກປ່ຽນແທນໂດຍຄະນະສະພາສ້າງຄວາມປອງດອງເຊິ່ງເປັນການຟື້ນຄືນໃໝ່ຂອງກົນໄກເພື່ອຊອກຫາທາງເລືອກໃນການແກ້ໄຂຂໍ້ຂັດແຍ່ງ. ແຕ່ວ່າຄະນະສະພານີ້ແມ່ນບໍ່ໄດ້ຮັບຜົນສຳເລັດ ແລະ ບໍ່ເປັນທີ່ຍອມຮັບໃນສັງຄົມ. ກົດລະບຽບນີ້ໄດ້ຖືກລົບລ້າງໄປໃນປີ 1978.



*"ຂ້າພະເຈົ້າຄິດວ່າຜົນສຳເລັດຂອງການນຳສະເໜີລະບົບ ການໄກ່ເກຍຂໍ້ຂັດແຍ່ງໃນປະເທດສີລັງກາແມ່ນຕ້ອງຍົກ ໃຫ້ການເລີ່ມຕົ້ນທີ່ດີ ແລະ ບຸກຄົນຕ່າງໆທີ່ຮ່ວມສ້າງລະ ບົບນີ້ຂຶ້ນມາ. ແຊມປ້ຽນທີ່ເກີດຂຶ້ນມາກັບການເຄື່ອນໄຫວ ນີ້ກໍ່ຄື: ທ່ານ P. B. Heart ເຊິ່ງເປັນຜູ້ທີ່ຢູ່ເບື້ອງຫຼັງການ ຮ່າງກົດໝາຍ ແລະ ຊຸກຍູ້ໃຫ້ໄດ້ຖືກຮັບຮອງເອົາ ແລະ ໄດ້ເລືອກບຸກຄົນທີ່ຖືກຕ້ອງໃນການຕິດ ຕາມມັນ. ໃນນັ້ນ ກໍ່ລວມມີທ່ານ Dhara Wijayatilake ແລະ ທ່ານ Kam - alini de Silva ເຊິ່ງໄດ້ສືບທອດຮັກສາວິໄສທັດ ແລະ ຊຸກຍູ້ສົ່ງເສີມແບບຈຳລອງພ້ອມດຽວກັນນັ້ນມັນຍັງເປັນ ການເຄື່ອນໄຫວແບບສົ່ງເສີມເພື່ອຄັດເລືອກເອົາທີ່ປຶກສາທີ່ ຈະເປັນກຸ່ມຄູຝຶກອົບຮົມໄກ່ເກັ່ຍລຸ້ນທຳອິດ ແລະ ເປັນ ການສະໜັບສະໜູນແກ່ຄະນະຜູ້ໄກ່ເກ່ຍທ້ອງຖິ່ນ. ປະສົບ ການໄກ່ເກ່ຍຂໍ້ຂັດແຍ່ງທີ່ພວກເຂົາເຈົ້າໄດ້ຖືຕິດຕົວໄປນຳ ໄດ້ເຮັດໃຫ້ເຂົາເຈົ້າກາຍເປັນຜູ້ທີ່ເໝາະສົມທີ່ສຸດສຳລັບພາ ລະບົດບາດນີ້.*

**ທ່ານ ດຣ. Christopher Moore** (ຊ່ຽວຊານດ້ານ ການໄກ່ເກ່ຍຂໍ້ຂັດແຍ່ງ) ຄູ່ຮ່ວມງານ, ສະມາຄົມ CDR, USA

ປັດໄຈຫຼາຍໆຢ່າງໄດ້ປະກອບສ່ວນເຮັດໃຫ້ຄະນະສະພາສ້າງຄວາມປອງດອງບໍ່ໄດ້ຮັບຜົນສຳເລັດ. ປັດໄຈເຫຼົ່ານີ້ລວມເຖິງການບໍ່ມີການຝຶກອົບຮົມທີ່ເປັນຮູ້ຮ່າງໃຫ້ແກ່ສະມາຊິກຂອງຄະນະສະພານັ້ນ ແລະ ບໍ່ມີກອບແຜນງານດ້ານເຕັກນິກເພື່ອຈັດການກັບຂໍ້ຂັດແຍ່ງນັ້ນພ້ອມທັງມີບັນຫາພາຍໃນຄະນະກ່ຽວກັບການມີອຳນາດໃນການຕັດສິນຂະດີເຊິ່ງເກີນກວ່າຄວາມສາມາດຂອງບຸກຄົນທີ່ນັ່ງເປັນສະມາຊິກໃນຄະນະກຳມະການໃນຂະນະທີ່ການຕົກລົງນັ້ນມີຜົນສັກສິດທາງກົດໝາຍ. ຈຸດຕຳນິທີ່ເດັ່ນກວ່າໝູ່ແມ່ນຂະບວນການຄັດເລືອກທີ່ມີສ່ວນກ່ຽວຂ້ອງກັບການເມືອງ ແລະ ຂີດຄວາມສາມາດຂອງບຸກຄົນທີ່ຖືກເລືອກມາເປັນຜູ້ສ້າງຄວາມປອງດອງ. ສະພາບເຫຼົ່ານີ້ໄດ້ຖືກພິຈາລະນາວ່າເປັນຮາກເຫງົ້າຂອງການນຳໃຊ້ອຳນາດຄະນະສະພາໄປໃນທາງທີ່ຜິດກົດລະບຽບ (ເຊິ່ງລວມທັງອຳນາດໃນການອອກໝາຍເອີ້ນຕົວ).

## ປະຫວັດໂດຍຫຍໍ້ຂອງການໄກ່ເກ່ຍຂໍ້ຂັດແຍ່ງໃນປະເທດສີລັງກາ



*ມູນນິທິເອເຊຍໄດ້ປະຕິບັດວຽກງານຮ່ວມກັບກະຊວງຍຸດຕິທຳມາຕັ້ງແຕ່ຊຸມປີ 1960 ເຊິ່ງລວມມີຫຼາກຫຼາຍແຜນງານທີ່ອອກແບບມາເພື່ອປັບປຸງການຄຸ້ມຄອງບໍລິຫານຄວາມຍຸດຕິທຳ.*

ມັນເປັນທີ່ຈະແຈ້ງວ່າກົນໄກທີ່ເປັນທາງເລືອກສຳຫຼັບການແກ້ໄຂຂໍ້ຂັດແຍ່ງຍັງຄົງເປັນທີ່ຕ້ອງການ. ໃນຄວາມເປັນຈິງທີ່ວ່າສານຍຸດຕິທຳທາງການນັ້ນແມ່ນມີກໍລະນີທີ່ຕ້ອງໄດ້ແກ້ໄຂຢ່າງຫຼວງຫຼາຍສະນັ້ນຈຶ່ງເຮັດໃຫ້ເກີດມີຄວາມຫຼ້າຊ້າ ແລະ ມີຫຼາຍກໍລະນີທີ່ຍັງຄົງຂ້າງມາໄດ້ຫຼາຍປີແລ້ວ. ໃນປີ 1985 ກະຊວງຍຸດຕິທຳ (MOJ) ໄດ້ເລີ່ມເຮັດການສຳຫຼວດສຶກສາກ່ຽວກັບຄວາມຫຼ້າຊ້າຂອງສານຍຸດຕິທຳແລະວັດທະນະທຳການປະພຶດດ້ານລະບຽບກົດໝາຍ. ໂດຍອີງໃສ່ຜົນຂອງການສຶກສາ ແລະ ການຄົ້ນຄ້ວາຢ່າງລະອຽດກ່ຽວກັບລະບົບທີ່ມີ ແລະ ນຳໃຊ້ໃນປະຈຸບັນກະຊວງຍຸດຕິທຳໄດ້ເລີ່ມແຍກສ່ວນທີ່ເປັນທາງເລືອກໃໝ່ ແລະ ບໍ່ແມ່ນການຟ້ອງຮ້ອງເຊິ່ງທົດແທນສານຍຸດຕິທຳ.

ເພິ່ນໄດ້ສັງເກດເຫັນວ່າທາງເລືອກໜຶ່ງທີ່ມີຄວາມໝາຍສຳຄັນແມ່ນຈະຕ້ອງປັບປຸງຄຸນນະພາບຂອງຄວາມຍຸດຕິທຳໃຫ້ດີຂຶ້ນສຳຫຼັບປະຊາຊົນຜູ້ທີ່ໃຊ້ບໍລິການຂອງລະບົບນີ້ໂດຍການຫຼຸດຜ່ອນຄວາມສັກຊ້າ, ຄວາມກົດດັນ ແລະ ຄ່າໃຊ້ຈ່າຍໃນການຕໍ່ສູ້ຄະດີ, ເພີ່ມຄວາມອາດສາມາດເຂົ້າເຖິງ, ປັບປຸງຄວາມຮູ້ຄວາມເຂົ້າໃຈ ແລະ ຄວາມເຊື່ອໝັ້ນໃນຂະບວນການຍຸດຕິທຳພ້ອມທັງສ້າງຜົນໄດ້ຮັບສຸດທ້າຍທີ່ສາມາດຖືກຍອມຮັບໄດ້ວ່ານີ້ລະຄືຄວາມຍຸດຕິທຳ. ຄະນະກຳມະການທີ່ມີສ່ວນຮ່ວມແມ່ນຈະຕ້ອງໄດ້ເອົາໃຈໃສ່ມີສະຕິລະວັງຕົວເພື່ອຫຼີກລ້ຽງກັບດັກທີ່ຄະນະສະພາສ້າງຄວາມປອງດອງອາດປະເຊີນໜ້າໄດ້.

ມູນນິທິເອເຊຍໄດ້ປະຕິບັດວຽກງານຮ່ວມກັບກະຊວງຍຸດຕິທຳມາຕັ້ງແຕ່ຊຸມປີ 1960 ເຊິ່ງລວມມີຫຼາກຫຼາຍແຜນງານທີ່ອອກແບບມາເພື່ອປັບປຸງການຄຸ້ມຄອງບໍລິຫານຄວາມຍຸດຕິທຳ. ໃນຕອນທ້າຍຊຸມປີ 1980 ມູນນິທິເອເຊຍໄດ້ສະໜັບສະໜູນຂໍ້ລິເລີ່ມໃໝ່ຂອງກະຊວງຍຸດຕິທຳໂດຍມອບໝາຍໃຫ້ເລຂາທິການຂອງກະຊວງທ່ານ ດຣ. A. R. B. Amarasinghe (ຕໍ່ມາທ່ານໄດ້ເລື່ອນຂຶ້ນໄປຢູ່ສານໄອຍະການສູງສຸດ) ແລະ ພະນັກງານອື່ນໆທີ່ມີສ່ວນຮ່ວມໃນການອອກແບບລະບົບໃໝ່ນີ້ໄດ້ມີໂອກາດເຂົ້າຮ່ວມກອງປະຊຸມກ່ຽວກັບການໄກ່ເກ່ຍຂໍ້ຂັດແຍ່ງໃນອາຊີ-ປາຊີຟິກຄັ້ງທຳອິດ. ມູນນິທິເອເຊຍຍັງໄດ້ເປັນຜູ້ຈັດການເດີນທາງສຶກສາຕິດຕາມໃນປະເທດສະຫະລັດອາເມລິກາຫຼາຍຄັ້ງ.

ຜົນທີ່ໄດ້ຮັບກໍ່ຄືການສ້າງຕັ້ງຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງເຊິ່ງສ້າງຕັ້ງຂຶ້ນອີງໃສ່ກົດໝາຍມາດຕາ 72 ຂອງປີ 1988 ພາຍໃຕ້ການຄຸ້ມຄອງບໍລິຫານຂອງກະຊວງຍຸດຕິທຳເຊິ່ງມີຈຸດປະສົງເພື່ອອຳນວຍການແກ້ໄຂຂໍ້ຂັດແຍ່ງແບບສະມັກໃຈໂດຍນຳໃຊ້ການໄກ່ເກ່ຍແບບອີງຕາມຄວາມພໍໃຈ.



ຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງ Kotte ກຳລັງເລີ່ມຂະບວນການໄກ່ເກ່ຍ.

ໃນປີ 1989 ມູນນິທິເອເຊຍໄດ້ມອບໝາຍໃຫ້ຊ່ຽວຊານສາກົນດ້ານການໄກ່ເກ່ຍຂໍ້ຂັດແຍ່ງທ່ານ Christopher Moore ແລະ ທ່ານນາງ Susan Wildau ຈາກສະມາຄົມ CDR ໃນລັດໂຄໂລຣາໂດປະເທດສະຫະລັດອາເມລິກາໂດຍມີຈຸດປະສົງເພື່ອພັດທະນາເອກະສານການຝຶກອົບຮົມລຳຫຼັບແຜນງານ ແລະ ການຝຶກອົບຮົມຄູຝຶກການໄກ່ເກ່ຍຂໍ້ຂັດແຍ່ງທີ່ເປັນຄົນສີລັງກາຄົນທຳອິດພ້ອມທັງອີກ 25 ທ່ານທີ່ເປັນທະນາຍຄວາມສານຄອບຄົວຈາກກະຊວງຍຸດຕິທຳ. ຄູຝຶກອົບຮົມການໄກ່ເກ່ຍເຫຼົ່ານີ້ໄດ້ລົງໄປຝຶກຜູ້ໄກ່ເກ່ຍຂໍ້ຂັດແຍ່ງອີກເປັນຮ້ອຍໆຄົນໃນປີຕໍ່ມາ.

ຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງຂັ້ນຊຸມຊົນທຳອິດໃນປະເທດສີລັງກາໄດ້ຖືກສ້າງຕັ້ງຂື້ນເມື່ອປີ 1990.







“ຂ້າພະເຈົ້າມີຄວາມປາດຖະໜາຢາກໃຫ້ຫຼາຍໆຄົນຮູ້ຈັກກ່ຽວກັບການໄກ່ເກ່ຍຂໍ້ຂັດແຍ່ງແລະມີຄວາມເຂົ້າໃຈດີກວ່າເກົ່າກ່ຽວກັບຄວາມອາດສາມາດຂອງມັນໃນການຍຸດຕິຂໍ້ຂັດແຍ່ງ. ຖ້າເຂົາເຈົ້າໄດ້ຮູ້ ແລະ ເຂົ້າໃຈຂ້າພະເຈົ້າເຊື່ອແນ່ວ່າເຂົາເຈົ້າຈະນຳເອົາຂໍ້ຂັດແຍ່ງຂອງເຂົາເຈົ້າມາສູ່ຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງ. ບາງທີການນຳສະເໜີກ່ຽວກັບແນວຄວາມຄິດຂອງການໄກ່ເກ່ຍອາດສາມາດເລີ້ມເອົາເຂົ້າໃນຫຼັກສູນຂອງໂຮງຮຽນທັງນັ້ນກໍ່ເພື່ອວ່າລຸ້ນຕໍ່ໄປຈະສາມາດເກັບກ່ຽວໝາກຜົນຂອງແຜນງານໄດ້ຢ່າງເຕັມເມັດເຕັມໜ່ວຍ.”

ທ່ານ Reginald Wanaguru (ອາຍຸ 67 ປີ)
ເປັນຜູ້ໄກ່ເກ່ຍມາໄດ້ 6 ປີແລ້ວ

## ມັນມີການດຳເນີນງານແນວໃດ

*ໃນການໄກ່ເກ່ຍຂໍ້ຂັດແຍ່ງແບບອີງຕາມຄວາມພໍໃຈຜູ້ໄກ່ເກ່ຍຈະເປັນຜູ້ນຳພາຄູ່ກໍລະນີທັງສອງຝ່າຍເຂົ້າຜ່ານຂະບວນການທີ່ພະຍາຍາມໃຫ້ຮູ້ຈັກກັບບັນຫາຕົວຈິງທີ່ຢັ່ງລົງເລິກເຖິງຮາກເຫງົ້າຂອງຂໍ້ຂັດແຍ່ງ, ຮູ້ໄດ້ເຖິງຄວາມຕ້ອງການ ຫຼື ຄວາມເພິ່ງພໍໃຈຂອງແຕ່ລະຝ່າຍ ແລະ ສຸດທ້າຍກໍ່ຈະຊອກຫາຂໍ້ແກ້ໄຂທີ່ທັງສອງຝ່າຍສາມາດຍອມຮັບໄດ້.*

ການໄກ່ເກ່ຍຂໍ້ຂັດແຍ່ງທີ່ອີງຕາມຄວາມພໍໃຈແມ່ນຂະບວນການໜຶ່ງທີ່ຈະບໍ່ພະຍາຍາມກຳນົດວ່າແມ່ນໃຜຜິດ ຫຼື ໃຜບໍລິສຸດຫຼືວ່າໃຫ້ຄຳຕັດສິນກ່ຽວກັບຄວາມຜິດ ຫຼື ຄວາມຖືກຂອງເຫດການທີ່ຜ່ານມານັ້ນ. ຜູ້ໄກ່ເກ່ຍຈະເປັນຜູ້ນຳພາຄູ່ກໍລະນີທັງສອງຝ່າຍຜ່ານຂະບວນການທີ່ພະຍາຍາມໃຫ້ຮູ້ຈັກກັບບັນຫາຕົວຈິງທີ່ຢັ່ງລົງເລິກເຖິງຮາກເຫງົ້າຂອງຂໍ້ຂັດແຍ່ງ, ຮູ້ໄດ້ເຖິງຄວາມຕ້ອງການ ຫຼື ຄວາມເພິ່ງພໍໃຈຂອງແຕ່ລະຝ່າຍແລະສຸດທ້າຍກໍ່ຈະຊອກຫາຂໍ້ແກ້ໄຂທີ່ທັງສອງຝ່າຍສາມາດຍອມຮັບໄດ້.

> ເມື່ອທ່ານ Wanaguru ໄດ້ອອກກິນເບ້ຍບຳນານຈາກການເປັນຜູ້ອຳນວຍການໃນກະຊວງພັດທະນາ ແລະ ຈັດຕັ້ງປະຕິບັດນະໂຍບາຍທ່ານໄດ້ອາສາສະມັກປະກອບສ່ວນໃນວຽກງານບໍລິການສັງຄົມ. ທ່ານຮູ້ສຶກວ່າການເປັນຜູ້ໄກ່ເກ່ຍແມ່ນເປັນທາງເລືອກທີ່ຈະໃຫ້ໝາກອອກຜົນທີ່ສຸດທີ່ທ່ານສາມາດຮັບໃຊ້ຊຸມຊົນຂອງທ່ານເອງ.

ໃນແບບຈຳລອງຂອງສີລັງກາຈະບໍ່ມີການເຊື່ອມໂຍງກັນແບບຕາຍຕົວລະຫວ່າງລະບົບສານຍຸດຕິທຳທາງການ ແລະ ຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງ. ນັກກົດໝາຍ ຫຼື ທະນາຍຄວາມຈະບໍ່ໄດ້ຮັບອະນຸຍາດໃຫ້ເຂົ້າຮ່ວມ ແລະ ຂໍ້ຕົກລົງທີ່ໄດ້ຈາກຄະນະຜູ້ໄກ່ເກ່ຍແມ່ນຈະບໍ່ເປັນຂໍ້ຜູກມັດທາງກົດໝາຍທາງການ ແລະ ບໍ່ສາມາດມີຜົນສັກສິດໃນສານຍຸດຕິທຳໄດ້. ມັນຂຶ້ນກັບຜູ້ໄກ່ເກ່ຍເອງທີ່ຈະພະຍາຍາມ ແລະ ຮັບປະກັນວ່າຂໍ້ຕົກລົງໄກ່ເກ່ຍຕາມ



> *"ເມື່ອທ່ານສັງເກດເບິ່ງການປະຕິບັດງານຂອງຄະນະຜູ້ໄກ່ເກ່ຍທ່ານຈະສາມາດເວົ້າໄດ້ວ່າຂະບວນການຍຸດຕິທຳນີ້ໄດ້ບັນເທົາທຸກຂອງປະຊາຊົນລົງໄດ້ຢ່າງຫຼວງຫຼາຍ. ມັນໄດ້ເປັນການລະບາຍຄວາມຮູ້ສຶກ, ເປັນຊ່ອງທາງໃນການປົດປ່ອຍຄວາມຮູ້ສຶກ, ແລະ ໄດ້ມີໃຜຜູ້ໜຶ່ງຮັບຟັງບັນຫາດ້ວຍຄວາມເປັນທຳ. ໃນຫຼາຍໆກໍລະນີເຫດບັງເອີນທີ່ເກີດຂຶ້ນກາຍເປັນຂໍ້ຂັດແຍ່ງໃຫ້ຕ້ອງໄກ່ເກ່ຍແມ່ນອາການຂອງບັນຫາທີ່ເລິກແລບເຊິ່ງເປັນສິ່ງທີ່ຜູ້ໄກ່ເກ່ຍຈະຕ້ອງໄດ້ພະຍາຍາມເຮັດໃຫ້ທັງສອງຝ່າຍຊ່ວຍກັນແກ້ໄຂ. ມັນທັງເປັນສະຖານທີ່ພິເສດທີ່ທາງຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງໄດ້ສ້າງຂຶ້ນເຊິ່ງບໍ່ສາມາດພົບໄດ້ໃນສານຍຸດຕິທຳທີ່ເປັນທາງການ."*
>
> *ທ່ານນາງ Ramani Jayasundere ຜູ້ຊີ້ນຳດ້ານເຕັກນິກອາວໂສ, ມນນິທິເອເຊຍ*

ຄວາມຈິງແລ້ວແມ່ນຜົນໄດ້ຮັບຂອງການເຫັນດີເຫັນພ້ອມອັນແທ້ຈິງລະຫວ່າງຄູ່ກໍລະນີທັງສອງຝ່າຍ ແລະ ຖືກຍອມຮັບດ້ວຍກຽດສັກສີ. ຖ້າຫາກວ່າມີການລະເມີດຂໍ້ຕົກລົງໄກ່ເກ່ຍນັ້ນຝ່າຍທີ່ໄດ້ຮັບຜົນເສຍຫາຍສາມາດສະເໜີມາທາງຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງໄດ້ອີກຄັ້ງ. ຖ້າຫາກວ່າການໄກ່ເກ່ຍນັ້ນບໍ່ສາມາດແກ້ໄຂຫຍັງໄດ້ເລີຍທາງຄະນະຜູ້ໄກ່ເກ່ຍຈະອອກໃບຢັ້ງຢືນບໍ່ຕົກລົງ ແລະ ຄູ່ກໍລະນີສາມາດນຳເລື່ອງລາວຂໍ້ຂັດແຍ່ງຂຶ້ນພິຈາລະນາທີ່ສານຍຸດຕິທຳໄດ້.

ລະບົບຄະນະຜູ້ໄກ່ເກ່ຍຂັ້ນຊຸມຊົນ (CMB) ໄດ້ລົບລ້າງບາງປັດໄຈຫຼັກໆອອກຫຼາຍຢ່າງເຊິ່ງວ່າປັດໃຈເຫຼົ່ານີ້ໄດ້ເຮັດໃຫ້ປະຊາຊົນຫວາດກົວ ແລະ ບໍ່ກ້າທີ່ຈະມາຫາຄວາມຍຸດຕິທຳໂດຍຜ່ານລະບົບສານຍຸດຕິທຳທາງການ. ເມື່ອສາມາດເຂົ້າເຖິງຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງໄດ້ຖືກຮັບພິຈາລະນາແລ້ວ, ຂະບວນການຂໍສະເໜີແມ່ນລຽບງ່າຍແລະຄ່າໃຊ້ຈ່າຍສຳຫຼັບຜູ້ສະເໜີຂໍບໍລິການໄກ່ເກ່ຍຂໍ້ຂັດແຍ່ງແມ່ນ 5 ລູປີເປັນພຽງແຕ່ຄ່າສະແຕມເທົ່ານັ້ນ.

## ມັນມີການດຳເນີນງານແນວໃດ



*"ໜຶ່ງໃນບັນຫາຫຼັກໆທີ່ເປັນສິ່ງກີດຂວາງຜົນສຳເລັດຂອງຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງກໍ່ຄືຄວາມລັງເລໃຈ ແລະ ການປະຕິເສດເມື່ອຝ່າຍທີ່ສອງໄດ້ມາຊ່ອງໜ້າກັບຄະນະເພື່ອສົນທະນາ... ແຕ່ຢ່າງໃດກໍ່ດີໂດຍຄຳນຶງວ່າຈິດວິນຍານຂອງການໄກ່ເກ່ຍຂໍ້ຂັດແຍ່ງແມ່ນຈຳເປັນຕ້ອງໄດ້ຂຶ້ນກັບແຮງປາດຖະໜາ ແລະ ຄວາມຜູກມັດຂອງທັງສອງຝ່າຍທີ່ຈະຊ່ວຍກັນໄກ່ເກ່ຍບັນຫານັ້ນໆ. ມັນອາດຈະຜິດກັບແນວຄວາມຄິດຂອງການໄກ່ເກ້ຍທີ່ນຳສະເໜີການຮັກສາຢຸວຢາແບບໃຊ້ວິທີບັງຄັບ. ພວກເຮົາມີຄວາມເຊື່ອໝັ້ນຢ່າງຍິ່ງວ່າຄວາມເຊື່ອຖືທີ່ເພີ່ມຂຶ້ນຕໍ່ກັບລະບົບສາມາດເປັນແບບວິທີທີ່ມີປະສິດທິຜົນທີ່ສຸດຂອງການແກ້ໄຂບັນຫາ."*

***ທ່ານນາງ Dhara Wijayatilake***
*ອະດີດເລຂາທິການ, ກະຊວງຍຸດຕິທຳ*

ຄູ່ກໍລະນີອາດນຳຂໍ້ຂັດແຍ່ງຕ່າງໆຂຶ້ນມາໄກ່ເກ່ຍໂດຍກົງ ຫຼືອ້າງອີງເຖິງເຈົ້າໜ້າທີ່ຕຳຫຼວດ ຫຼື ສານຍຸດຕິທຳ. ກົດໝາຍໄດ້ກຳນົດພາລະບົດບາດໄວ້ວ່າປະເພດຂໍ້ຂັດແຍ່ງ (ເຊັ່ນ: ຊັບສິນ ຫຼື ໜີ້ສິນທີ່ມີມູນຄ່າຕໍ່າກວ່າ 250,000 ລູປີ ແລະ ຂໍ້ຂັດແຍ່ງທີ່ກ່ຽວພັນກັບອາດຍະກຳສະຖານເບົາເຊັ່ນການທຳຮາຍບາດເຈັບ, ການລ່ວງລໍ້າເຂດແດນ ແລະການຍັກຍອກ) ສາມາດນຳຂຶ້ນມາໄກ່ເກ່ຍໄດ້ກ່ອນ, ກ່ອນທີ່ໜ້າທີ່ເຂົາເຈົ້າຈະສາມາດນຳສະເໜີເລື້ອງຂຶ້ນຫາສານຍຸດຕິທຳ. ຖ້າຫາກວ່າການຕົກລົງແກ້ໄຂບໍ່ສາມາດເກີດຂຶ້ນໄດ້ຄະນະຜູ້ໄກ່ເກ່ຍຈະອອກໃບຢັ້ງຢືນໄກ່ເກ່ຍບໍ່ໄດ້ໃຫ້ກັບທັງສອງຝ່າຍທັງນັ້ນກໍ່ເພື່ອເຮັດໃຫ້ກໍລະນີຂັດແຍ່ງຖືກນຳສົ່ງໃຫ້ຂຶ້ນພິຈາລະນາໃນສານຍຸດຕິທຳໄດ້.

ຂໍ້ຂັດແຍ່ງກ່ຽວກັບການທຳຮ້າຍຮ່າງ ກາຍ, ທີ່ດິນ, ໜີ້ສິນ ແລະ ຂໍ້ຂັດແຍ່ງພາຍໃນແມ່ນເປັນຂໍ້ຂັດແຍ່ງທີ່ເກີດຂຶ້ນຫຼາຍກວ່າໝູ່ທີ່ໄດ້ໄກ່ເກ່ຍຜ່ານມາ. ປະເພດຂໍ້ຂັດແຍ່ງທີ່ບໍ່ມີສາມາດນຳມາໄກ່ເກ່ຍໂດຍຄະນະຜູ້ໄກ່ເກ່ຍ



ໄດ້ລວມມີຂໍ້ຂັດແຍ່ງກ່ຽວກັບສິດທິສືບ ທອດມໍລະດົກ, ການແບ່ງປັນມໍລະດົກ, ການລ້ຽງດູ, ການຢ່າຮ້າງ ແລະ ສິດທິພື້ນຖານອື່ນໆ (ທີ່ຮຽກຮ້ອງໃຫ້ມີເອກະສານທາງການຈາກສານຍຸດຕິທຳອ້າງອີງ), ແລະ ປະເພດສະເພາະກ່ຽວກັບການໃຊ້ກຳລັງ ແລະ ອາດຍາກຳຕໍ່ເນື່ອງທີ່ໄດ້ລະບຸໄວ້ໃນກົດໝາຍ. ຂໍ້ຂັດ ແຍ່ງສ່ວນໃຫ່ຍທີ່ທາງຄະນະຜູ້ໄກ່ເກ່ຍໄດ້ຮັບຟັງແມ່ນມາຈາກຄວາມສະມັກໃຈຄູ່ກໍລະນີໄດ້ເລືອກເອົາການໄກ່ເກ່ຍຂໍ້ຂັດແຍ່ງເພື່ອຕໍ່ສູ້ຄະດີ.

ຂໍ້ຂັດແຍ່ງແຕ່ລະຂໍ້ແມ່ນຈະໄດ້ຖືກຮັບຟັງໂດຍຄະນະຜູ້ໄກ່ເກ່ຍເຊິ່ງປະກອບມີ 3 ທ່ານທີ່ໄດ້ຖືກຄັດເລືອກມາຈາກລາຍຊື່ຂອງຄະນະຜູ້ໄກ່ເກ່ຍທ້ອງຖິ່ນໂດຍອີງໃສ່ການເລືອກເຟັ້ນຂອງຄູ່ກໍລະນີທັງສອງຝ່າຍເອງ. ເພື່ອເປັນການຮັກສາຈິດໃຈເນື້ອໃນຂອງການໄກ່ເກ່ຍຂໍ້ຂັດແຍ່ງການປະກົດຕົວຕໍ່ໜ້າຄະນະຜູ້ໄກ່ເກ່ຍແມ່ນເປັນໄປດ້ວຍຄວາມສະມັກໃຈ ແລະ ຜູ້ໄກ່ເກ່ຍເອງແມ່ນບໍ່ໄດ້ບັງຄັບການພິຈາລະນາດ້ວຍກຳລັງໃດໆ. ໃນການໄກ່ເກ່ຍຂໍ້ຂັດແຍ່ງຈະບໍ່ມີກົດລະບຽບຂໍ້ກຳນົດດ້ານຂັ້ນຕອນ ແລະ ການໄກ່ເກ່ຍແຕ່ລະຄັ້ງແມ່ນດຳເນີນໄປໃນສະຖານທີ່ທີ່ບໍ່ເປັນທາງການ, ຂອບເຂດອ້ອມແອມເຊັ່ນ: ໂຮງຮຽນ ຫຼື ວັດວາອາຮາມໃນທ້ອງຖິ່ນ. ຄະນະຜູ້ໄກ່ເກ່ຍຈະນັດພົບກັນອາທິດລະຄັ້ງປົກະຕິແມ່ນເປັນທ້າຍອາທິດແລະຈະພິຈາລະນາຫາຂໍ້ແກ້ໄຂຂໍ້ຂັດແຍ່ງໃດໜຶ່ງພາຍໃນ 30 ວັນພາຍຫຼັງທີ່ໄດ້ຈັດຕັ້ງຄະນະສະພາໄກ່ເກ່ຍຂໍ້ຂັດແຍ່ງຂຶ້ນ.

ປະສົບການຄັ້ງທຳອິດຂອງທ່ານ Somadasa ກ່ຽວກັບຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງແມ່ນເມື່ອທ່ານຂຶ້ນເປັນຄູ່ກໍລະນີເຊິ່ງໃນຕອນນັ້ນທ່ານເປັນຜູ້ອຳນວຍການບໍລິສັດທຸລະກິດເອກະຊົນແຫ່ງໜຶ່ງ. ທ່ານມີຄວາມຕື້ນຕັນໃຈກັບຂະບວນການໄກ່ເກ້ຍທີ່ທ່ານໄດ້ແກ້ໄຂດ້ວຍຄວາມສະມັກໃຈໃນຖານະທີ່ເປັນຜູ້ໄກ່ເກ່ຍຂໍ້ຂັດແຍ່ງເມື່ອໄດ້ອອກກິນເບ້ຍບຳນານແລ້ວ.



“ໂດຍມີປະສົບການເປັນຄະນະຜູ້ໄກ່ເກັ່ຍຂໍ້ຂັດແຍ່ງປະເຊີນໜ້າກັບທັງສອງຝ່າຍຂອງຕະປະຊຸມຂ້າພະເຈົ້າຍັງຄົງສືບຕໍ່ມ່ວນຊື່ນກັບຂະບວນການໄກ່ເກ່ຍນີ້. ມັນເປັນລະບົບງ່າຍໆແຕ່ຜົນໄດ້ຮັບອອກມາແມ່ນຫຼວງຫຼາຍ. ຄວາມເພິ່ງພໍໃຈສ່ວນຕົວທີ່ພວກເຮົາໄດ້ຮັບໃນການເປັນຜູ້ໄກ່ເກ່ຍຂໍ້ຂັດແຍ່ງກໍ່ຄືເມື່ອທັງສອງຝ່າຍ (ບາງເທື່ອກໍ່ເປັນພີ່ນ້ອງກັນຫຼືເພື່ອນບ້ານກັນ) ທີ່ມາໃນທີ່ນີ້ເພື່ອພ້ອມຕໍ່ສູ້ແລະຈາກກັນໄປໃນຖານະເພື່ອນເຊິ່ງນັ້ນມັນກໍ່ເປັນຄ່າຕອບແທນໃຫ້ກັບພວກເຮົາທີ່ພວກເຮົາໄດ້ເສຍເວລາໄປແລະຄວາມພະຍາຍາມເຮັດລົງໄປ.

**ທ່ານ T.M. Somadasa (ອາຍຸ 68 ປີ)**

**ເປັນຜູ້ໄກ່ເກ່ຍຂໍ້ຂັດແຍ່ງມາໄດ້ 10 ປີ**

## ຜູ້ໄກ່ເກ່ຍຂໍ້ຂັດແຍ່ງ

*ຜູ້ໄກ່ເກ່ຍຂໍ້ຂັດແຍ່ງແມ່ນມີພື້ນຖານມາຈາກຫຼາກຫຼາຍສາຂາອາຊີບເຊິ່ງລວມມີຄູບາອາຈານ, ວິສະວະກອນ, ນັກສຳຫຼວດ, ນັກພີຊີກສາດທຳມະຊາດ, ພະນັກງານລັດຖະກອນແລະພະສົງອົງຂະເຈົ້າ. ມາດຕະເກນການຄັດເລືອກອັນດຽວກໍ່ຄືວ່າພວກເຂົາເຈົ້າຕ້ອງເປັນທີ່ເຄົາລົບນັບຖືຈາກຊຸມຊົນຂອງເຂົາເຈົ້າ ແລະ ມີຄຸນນະວຸດທິທີ່ຈຳເປັນທີ່ຜູ້ໄກ່ເກ່ຍທີ່ມີຄວາມຊຳນິຊຳນານຕ້ອງມີ.*



*"ຜົນສຳເລັດຂອງການໄກ່ເກ່ຍຂໍ້ຂັດແຍ່ງສ່ວນໃຫ່ຍແມ່ນຂຶ້ນກັບຄວາມຮູ້ຄວາມສາມາດຂອງຜູ້ໄກ່ເກ່ຍ. ເຂົາເຈົ້າສາມາດໂນມນາວຄວາມເຊື່ອຖືກ່ຽວກັບລະບົບຫຼືຂັບໄລ່ຜູ້ທີ່ເຊື່ອຖືໂດຍການໄກ່ເກ່ຍບັນຫາທີ່ບໍ່ໄດ້ເລື້ອງ."*

***ທ່ານນາງ Kamalini De Silva***

*ເລຂາທິການຊ່ວຍ, ກະຊວງຍຸດຕິທຳ*

ຂະບວນໄກ່ເກ່ຍໄດ້ກາຍເປັນທີ່ຍຶດໝັ້ນຢູ່ໃນຊຸມຊົນແຕ່ການເຂົ້າເຖິງຄະນະຜູ້ໄກ່ເກ່ຍແມ່ນມີຄວາມຈຳກັດສະເພາະແຕ່ສຳຫຼັບກຸ່ມບຸກຄົນທີ່ຢ◌ູໃນຂອບເຂດຊຸມຊົນເທົ່ານັ້ນ ແລະ ຄະນະຜູ້ໄກ່ເກ່ຍເອງກໍ່ປະກອບດ້ວຍກຸ່ມຄົນທີ່ຢູ່ໃນຂອບເຂດຊຸມຊົນນັ້ນໆ.

ເພື່ອຮັບປະກັນຄວາມເປັນເອກະລາດຢ່າງເຕັມສ່ວນໃນການຄັດເລື້ອກຜູ້ໄກ່ເກ່ຍອຳນາດທີ່ຈະມາແຕ່ງຕັ້ງ, ເບິ່ງແຍງກວດກາແລະອຳນາດໃນການຄຸ້ມຄອງຜູ້ໄກ່ເກ່ຍແມ່ນຖືກມອບໝາຍໃຫ້ຄະນະກຳມະທິການເອກະລາດທີ່ປະກອບມີສະມາຊິກ 5 ທ່ານ ແລະ ຖືກແຕ່ງຕັ້ງໂດຍທ່ານປະຖານາທິບໍດີແລະໃນນັ້ນ 3 ທ່ານຈະຕ້ອງແມ່ນພະນັກງານເບ້ຍບຳນານຈາກສານສູງຫຼືສານໄອຍະການ.

ໜຶ່ງໃນປັດໄຈຕັດສິນທີ່ສຳຄັນກໍ່ຄືທັກສະຂອງຜູ້ໄກ່ເກ່ຍຂໍ້ຂັດແຍ່ງເຊິ່ງແມ່ນປັດໃຈຫຼັກທີ່ຕັດສິນຄວາມສຳເລັດຂອງຂະບວນການໄກ່ເກ່ຍຂໍ້ຂັດແຍ່ງ. ດ້ວຍຄວາມເປັນຈິງນີ້ຜູ້ໄກ່ເກ່ຍຂໍ້ຂັດແຍ່ງແມ່ນຢູ່ໃນຖານະຜູ້ຮັບເຊີນເທົ່ານັ້ນ ແລະ ມັນຍັງເປັນສິ່ງໜ້າພູມໃຈທີ່ວ່າອາສາສະມັກແມ່ນມີບໍ່ຂາດເຂີນເຊິ່ງມີແຮງປາດຖະໜາທີ່ຈະປະກອບສ່ວນດ້ວຍເວລາ ແລະ ຄວາມພະຍາຍາມຂອງເຂົາເຈົ້າເພື່ອໃຫ້ບໍລິການໄກ່ເກ່ຍຂໍ້ຂັດແຍ່ງ.

ຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງຈຳນວນ 12 ທ່ານໃນ 40 ທ່ານແມ່ນໄດ້ຖືກແຕ່ງຕັ້ງສຳຫຼັບແຕ່ລະເຂດຮັບຜິດຊອບຂອງຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງ (ຄຽງຄູ່ກັບໜ່ວຍບໍລິຫານເຊິ່ງກຳນົດໂດຍລັດຖະບານໃນນາມຂອງພະແນກເລຂາທິການພະແນກ). ໃນປະເທດສີລັງກາຄຳວ່າ 'ຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງຂັ້ນຊຸມຊົນ' ແມ່ນມີຄວາມໝາຍຕາມຕົວຈິງທີ່ວ່າແຕ່ລະຄະນະຜູ້ໄກ່ເກ່ຍແມ່ນມີປະຈຳສະເພາະເຂດນັ້ນໆ.

ທ່ານ Ranasinghe ແມ່ນພະນັກງານລັດຖະກອນເຊິ່ງເມື່ອກ່ອນທ່ານໄດ້ປະຕິບັດໜ້າທີ່ປະຈຳຢູ່ກົມວາງແຜນປະເທດແລະຕົວເມືອງ. ດັ່ງທີ່ເຫັນໄດ້ຈາກປີການຂອງການໄກ່ເກ່ຍຂໍ້ຂັດແຍ່ງທ່ານໄດ້ມີຄວາມເຊື່ອໝັ້ນຢ່າງຍິ່ງໃນຄຸນຄ່າອັນມະຫາສານຂອງຂະບວນການໄກ່ເກ່ຍຂໍ້ຂັດແຍ່ງ ແລະ ທ່ານຍັງມີຄວາມຊົງຈຳກ່ຽວກັບກໍລະນີໄກ່ເກັ່ຍທີ່ຖືກໃຈໄປກັບຄວາມມ່ວນຊື່ນ.

**ທ່ານ Piyadasa Ranasinghe (ອາຍຸ 62 ປີ)** ເປັນຜູ້ໄກ່ເກ່ຍຂໍ້ຂັດແຍ່ງມາໄດ້ 13 ປີແລ້ວ



“ຫຼາຍສິ່ງຫຼາຍຢ່າງແມ່ນຂຶ້ນກັບຄວາມສາມາດທີ່ຈະສ້າງຄວາມພ້ອມພຽງໃຈລະຫວ່າງຜູ້ໄກ່ເກ່ຍຂໍ້ຂັດແຍ່ງ ແລະ ຄູ່ກໍລະນີ. ມັນເປັນຂະບວນການສ້າງຄວາມເຊື່ອໝັ້ນ. ຄວາມເປັນຈິງຈະຄ່ອຍໆປະກົດອອກມາບາງຄັ້ງກໍ່ຢູ່ໃນການຊ່ອງໜ້າຄັ້ງທີສາມ ຫຼື ສີ່. ມັນຮຽກຮ້ອງໃຫ້ມີຄວາມອົດທົນສູງ ແລະ ເມື່ອມີການຕົກລົງກັນເປັນທີ່ພໍໃຈແລ້ວມັນກໍ່ກາຍເປັນລາງວັນອັນຍິ່ງໃຫ່ຍ... ຂ້າພະເຈົ້າຄິດວ່າຖ້າມີປະຊາຊົນທີ່ເຂົ້າໃຈຢ່າງແທ້ຈິງຫຼາຍຂຶ້ນກ່ຽວກັບຂະບວນການໄກ່ເກ່ຍຂໍ້ຂັດແຍ່ງວ່າມີການດໍາເນີນງານກັນແນວໃດພວກເຮົາອາດຈະມີຄູ່ກໍລະນີມາຫາຄະນະໄກ່ເກ່ຍຫຼາຍຂຶ້ນເພື່ອຮ້ອງຂໍຄວາມຊ່ວຍເຫຼືອແກ້ໄຂຂໍ້ຂັດແຍ່ງຂອງເຂົາເຈົ້າ. ຈະຕ້ອງມີການເຜີຍແຜ່ອອກສູ່ມະຫາຊົນຫຼາຍຂຶ້ນ - ອາດຈະດ້ວຍການໂຄສະນາຜ່ານໂທລະທັດຫຼືດ້ວຍການສະແດງເປັນລະຄອນດັ່ງທີ່ໄດ້ສົ່ງອອກອາກາດເມື່ອຫຼາຍປີຜ່ານມາ.”

## ຜູ້ໄກ່ເກ່ຍຂໍ້ຂັດແຍ່ງ



*"ຂ້າພະເຈົ້າຄິດວ່າພວກເຮົາໃນປະເທດສີລັງກາແມ່ນໂຊກດີຫຼາຍຢູ່ບ່ອນວ່າພວກເຮົາມີກຸ່ມຄົນທີ່ມີການສຶກສາ ແລະ ປະສົບການ. ເຂົາເຈົ້າເຫຼົ່ານີ້ມີຄວາມຍິນດີອາສາສະມັກສະໜອງບໍລິການໃຫ້ແກ່ຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງແລະຜູ້ໄກ່ເກ່ຍເຫຼົ່ານີ້ມີຄວາມຍິນດີປະຕິບັດວຽກງານໂດຍບໍ່ໄດ້ຄ່າຕອບແທນໃດໆ. ເຂົາເຈົ້າປະຕິບັດໜ້າທີ່ໂດຍມີເຄື່ອງອຸປະກອນຂັ້ນພື້ນຖານເທົ່ານັ້ນເພື່ອສະໜອງບໍລິການໃຫ້ແກ່ປະຊາຊົນ.*

*ຄ່າໃຊ້ຈ່າຍສໍາຫຼັບການບໍລິການ ແມ່ນຕໍ່າມີພຽງແຕ່ 5 ລູປີເຊິ່ງເປັນຄ່າສະແຕມຕິດ ໃບຄໍາຮ້ອງ. ໃນເບື້ອງລັດຄ່າໃຊ້ຈ່າຍແມ່ນປະມານ 520 ລູປີ (5 ໂດລາ) ຕໍ່ຂໍ້ຂັດແຍ່ງ - ເຊິ່ງເປັນສັດສ່ວນນ້ອຍໆຂອງຄ່າໃຊ້ຈ່າຍສໍາຫຼັບກໍລະນີທີ່ງ່າຍທີ່ສຸດໃນການຂຶ້ນສານທາງການ.*

***ທ່ານ A. K. D. D. D. Arandara***
*ຜູ້ຊ່ວຍເລຂາທິການ, ກະຊວງຍຸດຕິທໍາ*



ບັນດາຜູ້ໄກ່ເກ່ຍຂໍ້ຂັດແຍ່ງສໍາຫຼັບຄະນະສະພາຈະຕ້ອງເປັນບຸກຄົນທີ່ຖືກສະເໜີໂດຍອົງການທີ່ບໍ່ກ່ຽວຂ້ອງກັບການເມືອງ, ອົງການທາງສາດສະໜາ, ຜູ້ອໍານວຍການໂຮງຮຽນ, ພະນັກງານລັດຖະກອນ - ປົກະຕິແມ່ນເລຂາທິການພະແນກ - ຫຼື ທ່ານປະທານຂອງຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງ. ຜູ້ໄກ່ເກ່ຍຂໍ້ຂັດແຍ່ງແມ່ນມີພື້ນຖານມາຈາກຫຼາກຫຼາຍສາຂາອາຊີບເຊິ່ງລວມມີຄູບາອາຈານ, ວິສະວະກອນ, ນັກສໍາຫຼວດ, ນັກພີຊິກສາດທໍາມະຊາດ, ພະນັກງານລັດຖະກອນ ແລະ ພະສົງອົງຂະເຈົ້າ. ມາດຕະເກນການຄັດເລືອກອັນດຽວກໍ່ຄືວ່າພວກເຂົາເຈົ້າຕ້ອງເປັນທີ່ເຄົາລົບນັບຖືຈາກຊຸມຊົນຂອງເຂົາເຈົ້າ ແລະ ມີຄຸນນະວຸດທິທີ່ຈໍາເປັນທີ່ຜູ້ໄກ່ເກ່ຍທີ່ມີຄວາມຊໍານິຊໍານານຕ້ອງມີ. ຖ້າຫາກວ່າທ່ານໃດມີສ່ວນຮ່ວມ ຫຼື ກ່ຽວຂ້ອງໃນກິດຈະກໍາທາງດ້ານການເມືອງແມ່ນຈະບໍ່ໄດ້ຮັບການພິຈາລະນາ.



*"ໃນຂະນະທີ່ພວກເຮົາອອກແບບລະບົບໃນທ້າຍຊຸມປີ 1980 ຂ້າພະເຈົ້າໄດ້ຮູ້ສຶກວ່າມັນສໍາຄັນຢ່າງຍິ່ງວ່າບຸກຄົນເຫຼົ່ານັ້ນທີ່ຈະມາຢູ່ໃນຕໍາແໜ່ງດັ່ງກ່າວບໍ່ຄວນມີຄວາມກະຕືລືລົ້ນເພາະເງິນຕາ. ຂ້າພະເຈົ້າໝັ້ນໃຈຢ່າງຍິ່ງວ່າຈະຄົນດີມາຮັບໃຊ້ໃຫ້ບໍລິການແກ່ຊຸມຊົນຂອງເຂົາເຈົ້າ. ຄວາມເປັນຈິງກໍ່ຄືວ່າຕໍາແໜ່ງນີ້ບໍ່ມີຄ່າຕອບແທນ ແລະ ບໍ່ໄດ້ຖືກມອບໃຫ້ມີອໍານາດທາງກົດໝາຍໃດໆກໍ່ເພາະວ່າມີຈຸດປະສົງເຮັດໃຫ້ມັນບໍ່ແມ່ນບ່ອນຫາຜົນປະໂຫຍດໃດໆ ແລະ ເພື່ອບໍ່ໃຫ້ມັນກາຍເປັນສິ່ງລໍ້ໃຈທາງການເມືອງ."*

***ທ່ານ P. B. Heart***
*ອະດີດເລຂາທິການ, ກະຊວງຍຸດຕິທໍາ*

ເມື່ອໄດ້ຄັດເລືອກໂດຍຜ່ານການສຳພາດເປັນທີ່ຮຽບຮ້ອຍແລ້ວຜູ້ທີ່ຈະມາເປັນຜູ້ໄກ່ເກ່ຍຂໍ້ຂັດແຍ່ງຈະໄດ້ຮັບການຝຶກອົບຮົມດ້ານເຕັກນິກ ແລະ ທັກສະກ່ອນ 40 ຊົ່ວໂມງ. ຕະຫຼອດໄລຍະການຝຶກອົບຮົມຄູຝຶກກໍ່ຈະໄດ້ຕິດຕາມປະເມີນຜົນທັກສະນະຂອງຜູ້ເຂົ້າຮ່ວມການຝຶກອົບຮົມ. ຜູ້ໄກ່ເກ່ຍຂໍ້ຂັດແຍ່ງຈະຖືກແຕ່ງຕັ້ງຢ່າງເປັນທາງການໂດຍຄະນະກຳມະທິການອີງຕາມການປະເມີນຜົນ. ພາຍຫຼັງທີ່ຄົບກຳນົດ 3 ປີຜູ້ໄກ່ເກ່ຍຂໍ້ຂັດແຍ່ງຜູ້ທີ່ຈະຖືກສະເໜີໃຫ້ຖືກແຕ່ງຕັ້ງອີກຈະຕ້ອງໄດ້ຜ່ານຂະບວນການສຳພາດ, ຝຶກອົບຮົມ ແລະ ປະເມີນຜົນນັ້ນອີກ.

ຄູຝຶກການໄກ່ເກ່ຍຂໍ້ຂັດແຍ່ງທີ່ເຄີຍຮັບໃຊ້ເປັນພະນັກງານຂົນຂວາຍຂອງກະຊວງຍຸດຕິທຳຍັງຕ້ອງຮ່ວມບໍລິຫານຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງໂດຍສັງເກດຕິດຕາມຜູ້ໄກ່ເກ່ຍ ແລະ ໃຫ້ຄຳຄິດເຫັນກັບຄືນ ແລະ ຊ່ວຍຄະນະສະພາເພື່ອຮັບມືກັບກິດຈະກຳການບໍລິຫານ.



*"ການຝຶກອົບຮົມສຳຫຼັບແຜນງານການໄກ່ເກ່ຍຂໍ້ຂັດແຍ່ງແມ່ນໄດ້ອອກແບບຢ່າງລະມັດລະວັງໂດຍລວມເອົາບັນດາອົງປະກອບອັນມີຄຸນຄ່າທາງວັດທະນະທຳຂອງພວກເຮົາເອງລວມທັງທັກສະຄວາມສາມາດອັນທັນສະໄໝ ແລະ ເຕັກນິກທີ່ໄດ້ຖືກນຳເໜີໂດຍຊ່ຽວຊານການໄກ່ເກ່ຍຂໍ້ຂັດແຍ່ງ ທ່ານ Flaurie Storie ແລະ ທ່ານ ດຣ. Christopher Moore. ພວກເຮົາກຳລັງຮັບເອົາ ແລະ ຂະຫຍາຍຕົວອີງໃສ່ເອກະສານຝຶກອົບຮົມທີ່ແນໃສ່ການສ້າງທັກສະຄວາມສາມາດສະເພາະພາຍໃຕ້ການແນະນຳຂອງທ່ານ ດຣ. Moore. ໂດຍລວມພື້ນຖານແນວຄວາມຄິດແມ່ນບໍ່ປ່ຽນແປງຫຼາຍຜ່ານມາຫຼາຍປີເພາະວ່າມັນເປັນແນວຄວາມຄິດງ່າຍໆ."*

*ທ່ານ M. Thirunavukarasu*
*ຄູຝຶກການໄກ່ເກ່ຍຂໍ້ຂັດແຍ່ງ, ສູນໄກ່ເກ່ຍ ແລະ ຝຶກອົບຮົມການໄກ່ເກ່ຍຂໍ້ຂັດແຍ່ງ*

ຄູຝຶກອົບຮົມການໄກ່ເກ່ຍຂໍ້ຂັດແຍ່ງຂອງກະຊວງຍຸດຕິທຳ





ໂດຍແຕກຕ່າງຈາກຂະບວນການສານຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງຂັ້ນຊຸມຊົນການໃຫ້ໂອກາດແກ່ປະຊາຊົນແກ້ໄຂຂໍ້ຂັດແຍ່ງຂອງເຂົາເຈົ້າພ້ອມທັງສະແດງຄວາມເຄົາລົບສິດທິສ່ວນຕົວ ແລະ ຮັກສາຊື່ສຽງຂອງເຂົາເຈົ້າ. ໃນຖານະທີ່ເປັນຜູ້ໄກ່ເກ່ຍຂໍ້ຂັດແຍ່ງພວກເຮົາຈະຕ້ອງມີຄວາມລະມັດລະວັງຢ່າງສູງເພື່ອເຮັດໃຫ້ເຂົາເຈົ້າມີຄວາມເຄົາລົບຕົວເອງ. ເມື່ອພວກເຮົາມີປະສົບການຫຼາຍຂຶ້ນພວກເຮົາຮຽນຮູ້ເຕັກນິກນ້ອຍໆໜຶ່ງທີ່ຈະເຮັດໃຫ້ທ່າທາງອັນແຂງກະດາງອ່ອນລົງ ແລະ ຄວາມເປັນປໍລະປັກກັນຫຼຸດຜ່ອນລົງຈົນເຮັດໃຫ້ທັງສອງຝ່າຍສາມາດເດີນເຂົ້າຫາຂໍ້ແກ້ໄຂບັນຫາ. ຕົວຢ່າງເຕັກນິກງ່າຍໆໜຶ່ງທີ່ຂ້າພະເຈົ້າເຫັນວ່າມີປະສິດທິຜົນແມ່ນບິດເບືອນການສົນທະນາອອກໄປຈາກຂໍ້ຂັດແຍ່ງຊົ່ວຄັ້ງຊົ່ວຄາວ ແລະ ກະຕຸ້ນໃຫ້ທັງສອງເຫຼົ່າເລື້ອງຂອງເຂົາເຈົ້າເລັກນ້ອຍ. ການຊອກຄົ້ນຮູ້ຈັກບາງສິ່ງບາງຢ່າງກ່ຽວກັບແຕ່ລະຝ່າຍຂອງຄູ່ກໍລະນີທີ່ເຂົາເຈົ້າມີຄວາມພາກພູມໃຈມັນ ແລະ ຈາກນັ້ນກໍ່ພະຍາຍາມເຮັດໃຫ້ເຂົາເຈົ້າເຫັນຂໍ້ຂັດແຍ່ງທີ່ເຂົາເຈົ້າຕິດພັນຢູ່ຈາກຈຸດຍືນທີ່ແຕກຕ່າງກັນ - ‘ຈາກທີ່ສູງ’.”

**ທ່ານ Chandra Attapattu (ອາຍຸ 72 ປີ)**

ປະທານຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງ Sri Jayawardanapura Kotte

## ຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງຂັ້ນຊຸມຊົນໃນປະຈຸບັນ

*ໃນປະຈຸບັນມີຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງຂັ້ນຊຸມຊົນທັງໝົດ 320 ແຫ່ງໃນທົ່ວປະເທດແລະມີຜູ້ໄກ່ເກ່ຍທີ່ໄດ້ຜ່ານການຝຶກຫຼາຍກວ່າ 7,000 ຄົນເຊິ່ງດຳເນີນການໄກ່ເກ່ຍຂໍ້ຂັດແຍ່ງລວມ 112,000 ກໍລະນີໃນແຕ່ລະປີໂດຍມີອັດຕາການໄກ່ເກ່ຍສຳເລັດໃນລະຫວ່າງ 53 ຫາ 60 ສ່ວນຮ້ອຍພາຍໃນໄລຍະ 15 ປີຂອງການດຳເນີນງານຜ່ານມາ.*

ໃນປັດຈຸບັນມີຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງຂັ້ນຊຸມຊົນທັງໝົດ 320 ແຫ່ງໃນທົ່ວປະເທດແລະມີຜູ້ໄກ່ເກ່ຍທີ່ໄດ້ຜ່ານການຝຶກຫຼາຍກວ່າ 7,000 ຄົນເຊິ່ງດຳເນີນການໄກ່ເກ່ຍຂໍ້ຂັດແຍ່ງລວມ 112,000 ກໍລະນີໃນແຕ່ລະປີໂດຍມີອັດຕາການໄກ່ເກ່ຍສຳເລັດລະຫວ່າງ 53 ຫາ 60 ສ່ວນຮ້ອຍພາຍໃນໄລຍະ 15 ປີຂອງການດຳເນີນງານ.

ຫຼາຍປີຜ່ານມາແຜນງານຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງບໍ່ໄດ້ກວມໄປເຖິງແຂວງພາກເໜືອແລະບາງແຂວງພາກຕາເວັນອອກຂອງປະເທດເນື່ອງຈາກສາເຫດມີການຕໍ່ສູ້ກັນໃນເຂດພື້ນທີ່ເຫຼົ່ານັ້ນ. ນັບຕັ້ງແຕ່ປີ 2004 ມູນນິທິເອເຊຍໂດຍສະໜັບສະໜູນຈາກຄະນະກຳມະທິການສະພາສູງແຫ່ງລາຊາອານາຈັກອັງກິດໄດ້ມີບົດບາດອັນສຳຄັນໃນການໃຫ້ການຊ່ວຍເຫຼືອແກ່ກະຊວງຍຸດຕິທຳເພື່ອຟື້ນຟູຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງທີ່ບໍ່ໄດ້ຮັບຜົນ ແລະ ສ້າງຕັ້ງຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງຂຶ້ນໃໝ່ຢູ່ແຂວງພາກເໜືອ ແລະ ພາກຕາເວັນອອກເຊິ່ງເປັນເຂດທີ່ມີການຕໍ່ສູ້ກັນ ແລະ ເຮັດໃຫ້ການບໍລິການທີ່ສຳຄັນນີ້ຕ້ອງຢຸດສະຫງັກລົງ. ໃນລະຫວ່າງປີ 2004 ຫາປີ 2006 ຄະນະ

> *"ເທົ່າທີ່ຂ້າພະເຈົ້າຮູ້ໃນປັດຈຸບັນປະເທດສີລັງກາມີລະບົບການໄກ່ເກັ່ຍຂໍ້ຂັດແຍ່ງໃຫ່ຍເປັນອັນດັບທີສາມຮອງຈາກປະເທດຈີນແລະຟີລິບປິນ."*
>
> *ທ່ານ* ***ດຣ. Christopher Moore*** *ຄູ່ຮ່ວມມື, ສະມາຄົມ CDR, USA*

> ກ່ອນທີ່ທ່ານ Attapattu ອອກກິນເບັ້ຍບຳນານທ່ານໄດ້ຮັບໃຊ້ເປັນຜູ້ຮັບລົງທະບຽນປະຈຳໂຮງຮຽນ Colombo ແຫ່ງໜຶ່ງແລະຕໍ່ມາກໍ່ໄດ້ເປັນຜູ້ກວດກາລາຄາ ແລະ ອາຫານແຫ່ງລັດ. ທັງສອງຕໍ່ແໜ່ງຮຽກຮ້ອງໃຫ້ທ່ານຕ້ອງເປັນຕົວແທນໃຫ້ກັບສະຖາບັນທີ່ສັງກັດຢູ່ຂຶ້ນຢືນຕໍ່ໜ້າສານເຊິ່ງເປັນສະຖານທີ່ທີ່ທ່ານໄດ້ສັງເກດເຫັນຄວາມກົດດັນທີ່ທຸກຄົນໄດ້ປະສົບໃນລະຫວ່າງຂະບວນການທາງກົດໝາຍ.

> *"ວິໃສທັດຂອງພວກເຮົາສຳລັບຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງແມ່ນທຸກໆຊຸມຊົນໃນປະເທດບໍ່ວ່າຈະເປັນຊຸມຊົນທີ່ຢູ່ຊົນະບົດ ຫຼື ເຂດຫ່າງ ໄກຂອກຫຼີກທີ່ສຸດຂອງປະເທດສີລັງກາຄວນມີຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງຢູ່ໃກ້ໆ - ຖ້າໃຫ້ດີ ແມ່ນຢູ່ໃນໄລຍະຫ່າງທີ່ສາມາດຍ່າງໄປຫາໄດ້ ແລະ ພວກເຮົາຈະໄປຫານະທີ່ນັ້ນ!"*
>
> ***ທ່ານ Kamalini de Silva*** *ເລຂາທິການ, ກະຊວງຍຸດຕິທຳ*

## ຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງຂັ້ນຊຸມຊົນໃນປະຈຸບັນ

### ຄະນະຜູ້ໄກ່ເກ່ຍຂັ້ນຊຸມຊົນໃນການປະຕິບັດງານ

ນາງ Nalini ແລະ ລູກຊາຍອາໃສຢູ່ເຮືອນກະທ້ອມຫຼັງໜຶ່ງ ແລະ ມີສວນປູກຕົ້ນໄມ້ກິນໝາກ ແລະ ພືດຜັກ.ນັກທຸລະກິດຊື່ Sivam ໄດ້ປຸກອາຄານສອງຊັ້ນຕິດແຄມຮົ້ວຂັ້ນດິນທັງສອງຕອນ. ຕົ້ນໝາກໄມ້ຂອງນາງ Nalini ໄດ້ຮັບຜົນເສຍຫາຍ ຈາກກຳແພງ ແລະ ຮົ່ມເງົາອາຄານຫຼັງໃໝ່ໄດ້ສ້າງ ຜົນເສຍຫາຍຕໍ່ການເຕີບໂຕຂອງພືດຜັກ. ນາງຈຶ່ງ ໃນໂທ ແລະ ຮູ້ສຶກຖືກລົບລູ່ຈາກນັກທຸລະກິດຮັ່ງ ຍ້ອນວ່ານາງເຄີຍປະຕິເສດບໍ່ໃຫ້ກຳມະກອນເຂົ້າມາໂບກກຳແພງໃນເຂດດິນຂອງຕົນ. ການຂໍ້ຂັດແຍ່ງ ກໍ່ເລີ້ມຕົ້ນຂຶ້ນ.

ພາຍຫຼັງທີ່ໄດ້ຮຸກຮານກັນມາຫຼາຍເດືອນຂໍ້ຂັດແຍ່ງ ກໍ່ໄດ້ຖືກນຳຂຶ້ນໄກ່ເກ່ຍ. ທັງສອງ ຝ່າຍຜິດກັນຢ່າງຮຸນແຮງເຖິງຂັ້ນບໍ່ຍອມນັ່ງໃກ້ກັນ. ຜ່ານການໄກ່ເກ່ຍຫຼາຍຄັ້ງຜູ້ໄກ່ເກ່ຍໄດ້ພະຍາຍາມຫຼຸດຜ່ອນຄວາມຕຶງຄຽດ. ທັງສອງຝ່າຍກໍ່ຍອມຮັບ ວ່າທ້າວ Sivam ໄດ້ສ້າງອາຄານຕິດແຄມຮົ້ວ ເກີນໄປ ແລະ ມັນກໍ່ຈິງທີ່ເງົາອາຄານຂອງລາວໄດ້ສ້າງຄວາມເສຍຫາຍເຮັດໃຫ້ຄອບຄົວທຸກຍາກຂາດລາຍໄດ້ສ່ວນໜຶ່ງ.

ເມື່ອທັງສອງຝ່າຍໄດ້ຍອມຮັບຄວາມເປັນຈິງແລ້ວ ໂອກາດເຫັນຊ່ອງທາງແກ້ໄຂກໍ່ເລີ້ມງ່າຍຂຶ້ນ. ທ້າວ Sivam ຍອມຊົດເຊີຍຄ່າເສຍ ຫາຍພ້ອມທັງສ້າງເຮືອນຄົວໃໝ່ໃຫ້ ແລະ ລາວກໍ່ ໄດ້ຮັບອະນຸຍາດໃຫ້ເຮັດກຳແພງ. ທັງສອງຝ່າຍຮູ້ ສຶກດີກ່ຽວກັບການແກ້ໄຂນີ້ ແລະ ຕໍ່ມາຄວາມສຳ ພັນຂອງທັງສອງຝ່າຍແບບເພື່ອນບ້ານກໍ່ໄດ້ກັບຄືນມາອີກຄັ້ງ.

*ຊື່ຂອງຄູ່ກໍລະນີທັງສອງຝ່າຍໄດ້ຖືກປ່ຽນແປງເພື່ອປົກປ້ອງສິດທິສ່ວນບຸກຄົນ.*



*"ຈາກທັດສະນະຂອງມູນນິທິເອເຊຍການຮ່ວມໄມ້ຮ່ວມມືລະຫວ່າງມູນນິທິ ແລະ ກະຊວງຍຸດຕິທຳ ແມ່ນໂດດເດັ່ນໃນຜົນສຳເລັດ ແລະ ຄວາມຍືນຍົງ. ພວກເຮົາໄດ້ສະໜັບສະໜູນແຜນງານຕະຫຼອດໄລຍະເວລາຜ່ານມາກວ່າ 20 ປີ, ຊອກຫາທຶນຮອນຈາກຫຼາກຫຼາຍແຫຼ່ງທຶນເພື່ອຮັກສາຄວາມຕໍ່ເນື່ອງ, ຊ່ວຍເຫຼືອໃນການກຳນົດຂົງເຂດທີ່ຈະຕ້ອງໄດ້ປັບປຸງ ແລະ ການອຳນວຍຄວາມສະດວກດ້ານເຕັກນິກ.*

***ທ່ານ Dinesha Wikramanayake***
*ຫົວໜ້າທີມງານ, ແຜນງານການປົກຄອງທ້ອງຖິ່ນ, ມູນນິທິເອເຊຍ*

ຜູ້ໄກ່ເກ່ຍຂໍ້ຂັດແຍ່ງຫຼາຍແຫ່ງໄດ້ຖືກສ້າງຕັ້ງຂຶ້ນ ແລະ ຟື້ນຟູຂຶ້ນໃນເມືອງ Jaffna, Trincomalee, Batticaloa ແລະ Ampara ພ້ອມດຽວກັນນີ້ຄະນະຜູ້ໄກ່ເກ່ຍອີກ 16 ແຫ່ງໃນເຂດແຂວງພາກເໜືອແມ່ນກຳລັງຈະຖືກສ້າງຕັ້ງຂຶ້ນ. ນີ້ກໍ່ໝາຍຄວາມວ່າແຜນງານນີ້ຈະມີພະແນກເລຂາທິການ (DSD) ຫຼາຍກວ່າ 318 ແຫ່ງໃນທົ່ວປະເທດ - ເປັນຜົນສຳເລັດອັນໂດດເດັ່ນ. ຕະຫຼອດເວລາລັດຖະບານໄດ້ສ້າງຕັ້ງພະແນກ DSD ຂຶ້ນໃໝ່ຢູ່ເລື້ອຍໆເພື່ອຕອບສະໜອງຄວາມຕ້ອງການຂອງປະຊາຊົນໃນເຂດພື້ນທີ່ນັ້ນໆ ແລະ ທາງກະຊວງກໍ່ມີຄວາມໝັ້ນໝັ້ນທີ່ຈະສ້າງຕັ້ງຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງຂຶ້ນຢູ່ໃນແຕ່ລະພະແນກເຫຼົ່ານີ້.



ຂີດຂໍ້ຈຳກັດສຳຄັນທີ່ທາງກະຊວງຍຸດຕິທຳພົບຢູ່ກໍ່ຄື ຄວາມຂາດແຄນຄູຝຶກອົບຮົມທີ່ສາມາດເວົ້າພາສາທະມິນ ເຊິ່ງທາງກະຊວງກໍ່ກຳລັງແກ້ໄຂ. ມູນນິທິເອເຊຍແມ່ນ ກຳລັງສະໜັບສະໜູນການສ້າງຕັ້ງສູນໄກ່ເກ່ຍ ແລະ ຝຶກອົບຮົມການໄກ່ເກ່ຍຂໍ້ຂັດແຍ່ງເຊິ່ງເປັນແຫ່ງທຳອິດ ໃນປະເທດສີລັງກາທີ່ມີພະນັກງານຈາກກຸ່ມຊົນເຜົ່າຄື: Sinhalese, Tamil ແລະ Muslim ແລະ ມີຂີດ ຄວາມສາມາດຝຶກອົບຮົມໄດ້ທັງສາມພາສາ (ອັງກິດ, ສິງຫາລາ ແລະ ທະມິນ). ຕັ້ງແຕ່ປີ 2004 ສູນຝຶກອົບ ຮົມນີ້ໄດ້ຝຶກອົບຮົມຄູຝຶກໄກ່ເກ່ຍຂໍ້ຂັດແຍ່ງເປັນພາສາ ທະມິນຈຳນວນ 14 ທ່ານ ແລະ ໄດ້ຈັດສຳມະນາກັບທີ່ ໃຫ້ຜູ້ໄກ່ເກ່ຍເປັນຈຳນວນ 1,226 ທ່ານ.

ເຖິງແມ່ນວ່າຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງຈະມີຜົນສຳເລັດ ຫຼາຍກໍ່ຕາມກຸ່ມສະມາຄົມນັກກົດໝາຍກໍ່ຍັງຄົງມີຄວາມ ສົງໃສ ແລະ ບາງທ່ານກໍ່ໄດ້ສະແດງຂໍ້ສົງໃສກ່ຽວກັບ ຜົນປະໂຫຍດຂອງແຜນງານທີ່ພວກເຂົາເຈົ້າບໍ່ໄດ້ມີສ່ວນ ຮ່ວມ. ໃນຄວາມພະຍາຍາມທີ່ຈະປ່ຽນແປງທັດສະນະ ເຫຼົ່ານີ້ມູນນິທິເອເຊຍໄດ້ສະໜັບສະໜູນການສຳມະນາ ກ່ຽວກັບເຕັກນິກການໄກ່ເກ່ຍສຳຫຼັບນັກສຶກສານິຕິສາດ ກວ່າ 500 ຄົນໃນປີ 1996.

ແຜນງານນີ້ໄດ້ຄົ້ນພົບຄວາມຈິງເຊັ່ນ: ການສະທ້ອນໃນ ທາງບວກທີ່ວ່າຕັ້ງແຕ່ນັ້ນມານັກສຶກສາປີສຸດທ້າຍທີ່ວິທະ ຍະໄລນິຕິສາດແຫ່ງສີລັງກາແມ່ນຈະຕ້ອງໄດ້ເຂົ້າຮ່ວມ ສຳມະນາເປັນເວລາສາມວັນເຊິ່ງເປັນສ່ວນໜຶ່ງຂອງຫຼັກ ສູດຂອງເຂົາເຈົ້າ. ການສຳມະນານີ້ແມ່ນແນໃສ່ສ້າງທັກ ສະການໄກ່ເກ່ຍໃຫ້ກັບນັກກົດໝາຍໜຸ່ມທັງຫຼາຍ. ແຜນ ງານຍັງລວມທັງການສັງເກດຕີລາຄາການຊ້ອງໜ້າໄກ່ ເກ່ຍຂໍ້ຂັດແຍ່ງຕົວຈິງເພື່ອສະແດງໃຫ້ເຫັນເຖິງປະສິທິ ຜົນຂອງຂະບວນການໄກ່ເກ່ຍຂໍ້ຂັດແຍ່ງ.

*ການຝຶກອົບຮົມໜ່ວຍໄກ່ເກ່ຍຢູ່ Jaffna*

## ຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງຂັ້ນຊຸມຊົນໃນປະຈຸບັນ

### ຄະນະຜູ້ໄກ່ເກ່ຍຂັ້ນຊຸມຊົນໃນການປະຕິບັດງານ

ມີ5 ອ້າຍເອື້ອຍນ້ອງນໍາກັນທັງໝົດແມ່ນມີອາຊີບເປັນ dhobis (ຊັກແຫ້ງ) ແລະ ອາໄສຢູ່ໃນທີ່ດິນປະຈໍາຕະກຸນ ເຊິ່ງໄດ້ແບ່ງເປັນຕອນໆ.
ບັນຫາທີ່ມີແມ່ນທີ່ດິນຂອງອ້າຍ ຄົນໜຶ່ງແມ່ນຕັ້ງຂະໜາດກັບທົ່ນທາງຫຼວງ ແລະ ສ່ວນດິນຕອນອື່ນໆແມ່ນຕັ້ງຢູ່ເບື້ອງຫຼັງດິນຕອນທີ່ຕິດທາງຫຼວງ ແລະ ກໍ່ມີທາງເຂົ້າກວ້າງພຽງ 1.20 ແມັດແລ່ນຜ່ານດິນຕອນທາງໜ້າ. ບັນດາຜູ້ເປັນເຈົ້າຂອງດິນທີ່ຢູ່ເບື້ອງຫຼັງຕ້ອງການຂະຫຍາຍທາງນີ້ອອກເປັນ 3.04 ແມັດເຊິ່ງວ່າຜູ້ເປັນເຈົ້າຂອງດິນຕອນທາງໜ້າໄດ້ປະຕິເສດທີ່ຈະຂະຫຍາຍມັນ. ເມື່ອຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງນີ້ສາມາດຊອບຖາມເຖິງເອົາເຫດຜົນທີ່ແທ້ຈິງອອກມາວ່າເປັນຫຍັງຈຶ່ງປະຕິເສດ. ຄວາມຈິງກໍ່ຄື: ລາວບໍ່ຕ້ອງການທີ່ຈະເສຍດິນຂອງລາວທີ່ເກີດຈາກການຂະຫຍາຍທາງ.
ຂໍ້ແກ້ໄຂ: ເຈົ້າຂອງດິນທີ່ຢູ່ດ້ານຫຼັງແຕ່ລະຄົນຈະຕ້ອງແບ່ງດິນສ່ວນໜຶ່ງຂອງເຂົາເຈົ້າໃຫ້ກັບເຈົ້າຂອງດິນທີ່ຢູ່ເບື້ອງໜ້າເພື່ອເປັນການທົດແທນກັບດິນທີ່ລາວເສຍໄປຈາກການຂະຫຍາຍທາງ. ແຜນການນີ້ແມ່ນເປັນທີ່ຍອມຮັບດ້ວຍຄວາມຍິນດີຈາກທຸກໆຝ່າຍ.

ໃນປີ 2010 ກະຊວງຍຸດຕິທໍາແລະມູນນິທິເອເຊຍໄດ້ຮ່ວມກັນດໍາເນີນການສຶກສາປະເມີນຜົນແຜນງານຄະນະສະພາໄກ່ເກ່ຍຂໍ້ຂັດແຍ່ງຂັ້ນຊຸມຊົນ. ການປະເມີນຜົນໄດ້ກວມເອົາຈໍານວນ 1,097 ຄົນໃນທົ່ວປະເທດ, ແລະ ການສໍາຫຼວດຊອບຖາມຄູ່ກໍລະນີຈໍານວນ 435 ຄົນ ແລະ ຜູ້ໄກ່ເກ່ຍຂໍ້ຂັດແຍ່ງຈໍານວນ 252 ຄົນຈາກ 18 ຄະນະສະພາໄກ່ເກ່ຍຂໍ້ຂັດແຍ່ງ -ສອງຈາກທຸກໆຕົວເມືອງ. ນອກນັ້ນຍັງມີການຊອບຖາມສໍາພາດນັກກົດໝາຍ, ຕໍາຫຼວດ, ພະນັກງານລັດຖະກອນ, ຫົວໜ້າຊຸມຊົນ ແລະ ອົງການທີ່ບໍ່ຂຶ້ນກັບລັດຖະບານ. ເຖິງແມ່ນວ່າການປະເມີນຜົນຈະໄດ້ກວມເອົາ 2 ຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງຈາກແຂວງພາກເໜືອຂໍ້ມູນທີ່ເກັບກໍາໄດ້ຈາກເຂດພື້ນທີ່ນີ້ແມ່ນມີຄວາມຈໍາກັດເນື່ອງຈາກສະພາບພິເສດຫຼັງສົງຄາມ ແລະ ຄວາມເປັນຈິງທີ່ວ່າຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງໃນເຂດເຫຼົ່ານີ້ແມ່ນຫາກໍ່ຍັງໃໝ່ໆ. ຜົນທີ່ຕາມມາກໍ່ຄືຂໍ້ມູນທີ່ເກັບກໍາມາໄດ້ຈາກພາກເໜືອນັ້ນຕ້ອງໄດ້ວິເຄາະສະເພາະຕ່າງຫາກ.



ໃນດ້ານການຮັບຮູ້ຂໍ້ມູນໄດ້ຊີ້ໃຫ້ເຫັນວ່າ75 ສ່ວນຮ້ອຍຂອງປະຊາຊົນ (ຢູ່ 8 ໃນ 9 ແຂວງ) ແມ່ນຮູ້ຈັກກ່ຽວກັບຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງ, ສ່ວນໃຫ່ຍແມ່ນໄດ້ຍິນກ່ຽວກັບເຂົາເຈົ້າຈາກຄົນຮູ້ຈັກ. ແຕ່ວ່າໃນແຂວງພາກເໜືອການຮູ້ຈັກແມ່ນຕໍ່າກວ່າເຊິ່ງມີປະມານ 44 ສ່ວນຮ້ອຍ.

ຂໍ້ມູນກ່ຽວກັບຍິງ-ຊາຍ, ຊົນຊາດຊົນເຜົ່າ ແລະ ອາຍຸໄດ້ສະແດງໃຫ້ເຫັນຢ່າງຈະແຈ້ງວ່າປະຊາຊົນຈາກທຸກໆພາກສ່ວນຂອງພົນລະເມືອງແມ່ນໄດ້ໃຊ້ບໍລິການຂອງຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງ. ແຕ່ວ່າມີພຽງແຕ່ 15 ສ່ວນຮ້ອຍຂອງຜູ້ທີ່ມາໃຊ້ບໍລິການແມ່ນມີອາຍຸຕໍ່າກວ່າ 30 ປີ ແລະ ມີພຽງແຕ່ 35 ສ່ວນຮ້ອຍເປັນເພດຍິງ. ທີ່ເປັນຄືແນວນີ້ສ່ວນໜຶ່ງກໍ່ອາດເປັນເພາະວ່າຊາວໜຸ່ມ ແລະ ແມ່ຍິງແມ່ນບໍ່ຄ່ອຍນໍາຕົວໄປພົວພັນກັບຂໍ້ຂັດແຍ່ງບາງປະເພດເຊັ່ນ: ຂໍ້ຂັດແຍ່ງກ່ຽວກັບທີ່ດິນເຊິ່ງຕາມປົກະຕິແລ້ວແມ່ນຫົວໜ້າຄອບຄົວເປັນຜູ້ມາຊ່ອງໜ້າຕໍ່ກັບຄະນະຜູ້ໄກ່ເກ່ຍ. ມັນຍັງມີບາງສິ່ງບາງຢ່າງທີ່ກ່ຽວຂ້ອງກັບຄຸນລັກສະນະຂອງຜູ້ໄກ່ເກ່ຍເອງເຊິ່ງສ່ວນໃຫ່ຍແມ່ນເປັນເພດຊາຍແລະຕ່າງກໍ່ເກືອບວ່າມີອາຍຸສູງກວ່າ 60 ປີ. ກະຊວງຍຸດຕິທໍາໄດ້ກໍານົດວ່າຈະຕ້ອງໄດ້ເພີ່ມຄວາມຫຼາກຫຼາຍຂຶ້ນໃນກຸ່ມຜູ້ໄກ່ເກ່ຍຂໍ້ຂັດແຍ່ງເຊິ່ງແມ່ນໜຶ່ງໃນບໍລິມະສິດສໍາຫຼັບແຜນງານ.



"ໃນອະນາຄົດຂ້າພະເຈົ້າຢາກເຫັນຜູ້ໄກ່ເກ່ຍຂໍ້ຂັດແຍ່ງໄດ້ຮັບການຝຶກອົບຮົມຫຼາຍຂຶ້ນກ່ວາເກົ່າ. ຍ້ອນຂາດທຶນ ແລະ ຊັບພະຍາກອນພວກເຮົາສາມາດໃຫ້ການຝຶກອົບຮົມໄດ້ພຽງຄັ້ງດຽວເມື່ອເຂົາເຈົ້າເລີ້ມເຂົ້າໜ້າທີ່ສຳຫຼັບ 3 ປີ ແລະ ການຝຶກອົບຮົມສະເພາະເທົ່ານັ້ນ. ຂ້າພະເຈົ້າຮູ້ສຶກວ່າຜູ້ໄກ່ເກ່ຍທຸກໆທ່ານຄວນໄດ້ຮັບການຝຶກຢ່າງໜ້ອຍໜຶ່ງວັນໃນທຸກໆ 6 ເດືອນທັງນັ້ນກໍ່ເພື່ອເສີມສ້າງທັກສະດ້ານເຕັກນິກການໄກ່ເກ່ຍທີ່ເໝາະສົມພ້ອມທັງທັກສະດ້ານອື່ນໆຂອງເຂົາເຈົ້າ.

ທ່ານ Justice Hector Yapa
ປະທານ, ຄະນະກຳມະທິການໄກ່ເກັ່ຍຂໍ້ຂັດແຍ່ງ




ຂໍ້ມູນຈາກການປະເມີນຜົນແຜນງານຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງປີ 2010

### ຄະນະຜູ້ໄກ່ເກ່ຍຂັ້ນຊຸມຊົນໃນການປະຕິບັດງານ

ຄູ່ສາມີພັນລະຍາໜຸ່ມຄູ່ໜຶ່ງໄດ້ຖືກສົ່ງຫາຄະນະໄກ່ເກ່ຍຂໍ້ຂັດແຍ່ງ. ຜູ້ເປັນພັນລະຍາຊື່ Sonali ໄດ້ຮ້ອງທຸກວ່າຖືກທຳຮ້າຍແຕ່ວ່າປະຕິເສດທີ່ຈະເຫົ່າລາຍລະອຽດ. ນາງໄດ້ແຕ່ເຫົ່າວ່າສາມີຂອງນາງຊື່ Lalith ມີລາຍໄດ້ດີແຕ່ບໍ່ເອົາໃສ່ນາງເລີຍ. ນາງຕ້ອງການທີ່ຈະຢ່າຮ້າງ. ຜູ້ເປັນສາມີກໍ່ເຫົ່າວ່າລາວໄດ້ໃຫ້ນາງທຸກຢ່າງເຊັ່ນ: ເຮືອນ,ເງິນ,ຂອງຂັວນ,ວັນພັກ.

ໃນການຊ່ອງໜ້າຜູ້ໄກ່ເກ່ຍສາມາດຊອບຖາມດຶງເອົາຄວາມຈິງຈາກ Sonali ແລະ ກະຕຸ້ນໃຫ້ນາງເຫົ່າເລື່ອງລາວອອກມາວ່າແມ່ນຫຍັງເຮັດໃຫ້ນາງບໍ່ມີຄວາມສຸກ. ນາງຕ້ອງການທີ່ຈະເປີດກິດຈະການຜະລິດປະຈຳບ້ານແຕ່ວ່າ Lalith ບໍ່ຍອມແມ່ນແຕ່ຈະຮັບຟັງນາງອະທິບາຍ. ນາງຮູ້ສຶກຖືກປ່ອຍປະລະເລີຍ ແລະ ມີຄຸນຄ່າໜ້ອຍລົງ. ນີ້ແມ່ນການທຳຮ້າຍທີ່ນາງໄດ້ຮູ້ສຶກ. Lalith ໄດ້ຍອມຮັບວ່າເຖິງວ່າລາວຈະໃຫ້ພັນລະຍາທຸກຢ່າງແຕ່ນາງຕ້ອງການຫາເງິນ ແລະ ປະກອບສ່ວນໃນດ້ານການເງິນຂອງຄອບຄົວ. ລາວອ້າງວ່ານາງບໍ່ເຄີຍອະທິບາຍຈະແຈ້ງ ແລະ ຍອມຮັບວ່າຕົນເອງກໍ່ບໍ່ໃຫ້ເວລາເພື່ອປຶກສາກັບນາງເພາະວ່າມີວຽກຫຼາຍ ແລະ ເມື່ອຍລ້າ. ທັງຄູ່ສາມີພັນລະຍາໄດ້ຕົກລົງທີ່ຈະຫາທາງແກ້ໄຂຄື: ລົມກັນໃຫ້ຫຼາຍຂຶ້ນ ແລະ ເປີດກ້ວາງປຶກສາບັນຫາຕ່າງໆ. Lalith ກ່າວວ່າລາຍຮັບເພີ່ມຈະເປັນຜົນດີແກ່ຄອບຄົວ ແລະ ຕົກລົງເຫັນດີຊ່ວຍພັນລະຍາເລີ້ມຕົ້ນທຸລະກິດຂອງນາງເອງ.

ຊື່ຂອງຄູ່ກໍລະນີແມ່ນໄດ້ຖືກປ່ຽນແປງເພື່ອປົກປ້ອງສິດທິສ່ວນບຸກຄົນຂອງເຂົາເຈົ້າ.



"ສໍາຫຼັບປະຊາຊົນຜູ້ທຸກຍາກໃນຊຸມຊົນຂອງພວກເຮົາ ການຟ້ອງຮ້ອງຂຶ້ນສານທາງການ ແມ່ນມີຄ່າໃຊ້ຈ່າຍສູງເກີນຄວາມສາມາດ. ການໄກ່ເກ່ຍຂໍ້ຂັດແຍ່ງ ແມ່ນບໍລິການແບບບໍ່ເສຍຄ່າ. ມັນໄດ້ເຮັດໃຫ້ການເຂົ້າເຖິງຊ່ອງທາງອັນໜຶ່ງຂອງການແກ້ໄຂບັນຫາຂອງເຂົາເຈົ້າ ແລະ ອະຕະມາກໍ່ເຊື່ອວ່າມັນຈະຊ່ວຍສ້າງຄວາມເປັນປືກແຜນໃນສັງຄົມ."

**ພຣະພິຄຸສິງ Pethigamuwa Rahula Thero (ອາຍຸ 67 ປີ)**
ພຣະພິຄຸສິງ ເປັນຜູ້ໄກ່ເກ່ຍຂໍ້ຂັດແຍ່ງໄດ້ 7 ປີແລ້ວ

*"ສຳຫຼັບລະບົບໄກ່ເກ່ຍຂໍ້ຂັດແຍ່ງໂດຍອີງຕາມຄວາມພໍໃຈແມ່ນດຳເນີນໄປໄດ້ດີ. ອັດຕາການແກ້ໄຂແມ່ນ 50-60 ສ່ວນຮ້ອຍເຊິ່ງເປັນອັດຕາທີ່ສາມາດຍອມຮັບໄດ້ ແລະ ປົກະຕິກົງກັບອັດຕາທີ່ມີ ການສະໜອງການໄກ່ເກ່ຍໃນທົ່ວໂລກ. ອັດຕາ ຄວາມສຳເລັດສ່ວນໃຫຍ່ແມ່ນຂຶ້ນກັບປະເພດຂອງ ແຕ່ລະກໍລະນີທີ່ໄດ້ໄກ່ເກ່ຍ. ບາງກໍລະນີກໍ່ມີອັດຕາສູງ ແລະ ບາງກໍລະນີກໍ່ຕ່ຳ. ຍ້ອນຄຸນລັກສະນະສະເພາະແບບສະມັກໃຈຂອງຂະບວນການໄກ່ເກ່ຍ ແລະ ມັນຈຳເປັນຕ້ອງໄດ້ອີງໃສ່ຄວາມເພິ່ງພໍໃຈຂອງທັງສອງຝ່າຍສະນັ້ນຈຳນວນຂອງກໍລະນີທີ່ບໍ່ສາມາດແກ້ໄຂໄດ້ໂດຍຜ່ານຂະບວນການໄກ່ເກ່ຍຈຶ່ງມີຫຼາຍຢູ່ສະເໝີ. ຂ້າພະເຈົ້າຄວນລະມັດລະວັງກ່ຽວກັບອັດຕາການແກ້ໄຂຂໍ້ຂັດແຍ່ງທີ່ມີສູງເພາະວ່າສຳຫຼັບຂ້າພະເຈົ້າແລ້ວມັນອາດສະແດງໃຫ້ເຫັນວ່າຜູ້ໄກ່ເກ່ຍຂໍ້ຂັດແຍ່ງຖີ້ມຂໍ້ແກ້ໄຂໃຫ້ກັບຄູ່ກໍລະນີ ຫຼື ວ່າເຮັດໃຫ້ຄູ່ກໍລະນີຮູ້ສຶກຖືກບັງຄັບໃຫ້ຕ້ອງຕົກລົງຮັບເອົາການແກ້ໄຂນັ້ນໆ."*

*ທ່ານ ດຣ. Christopher Moore ຄູ່ຮ່ວມ, ສະມາຄົມ CRD, USA*

ໃນກຸ່ມຈຳນວນຜູ້ທີ່ໃຊ້ບໍລິການໄກ່ເກ່ຍຂໍ້ຂັດແຍ່ງ 90 ສ່ວນຮ້ອຍແມ່ນມີຄວາມເພິ່ງພໍໃຈກັບຂະບວນການໄກ່ເກ່ຍ ແລະ ມີ 8 ໃນ 10 ຄົນບອກວ່າພວກເຂົາເຈົ້າຈະນຳສະເໜີຂໍ້ຂັດແຍ່ງໃນອະນາຄົດຕໍ່ກັບຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງ. ອັດຕາຄວາມເພິ່ງພໍໃຈທີ່ສູງກໍ່ພົບເຫັນໃນກຸ່ມຄົນທີ່ມີໂອກາດໜ້ອຍລວມທັງແມ່ຍິງ ແລະ ຊົນກຸ່ມນ້ອຍຕ່າງໆ.

ອອອດເຫດຸເມື່ອຜູ້ໃຊ້ບໍລິການຖືກຖາມໃຫ້ນັບຜົນປະໂຫຍດຕ່າງໆທີ່ໄດ້ຮັບຈາກການໄກ່ເກ່ຍຄຳຕອບທີ່ໄດ້ຮັບຢູ່ສະເໝີແມ່ນ'ການແກ້ໄຂທີ່ວ່ອງໄວ', 'ຄ່າໃຊ້ຈ່າຍທີ່ຕ່ຳ' ແລະ 'ຂະບວນການແກ້ ໄຂແມ່ນເປັນທຳຫຼາຍຂຶ້ນ' (ເປັນເຄື່ອງໝາຍສຳຄັນທີ່ສະແດງການເຂົ້າເຖິງຂະບວນການຍຸດຕິທຳ).

ພຣະພິຄຸສົງ Thero ເປັນຫົວໜ້າພະສົງ Dharmash - asthrodaya Pirivena ແລະ ຮອງປະທານມູນນິທິເດັກນ້ອຍ SOS. ພຣະພິຄຸສົງໄດ້ກ່າວວ່າໃນປະສົບການຂອງພຣະພິຄຸສົງເອງລະບົບຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງຂັ້ນຊຸມຊົນແມ່ນມີການດຳເນີນງານທີ່ດີຫຼາຍ. ພຣະພິຄຸສົງຍັງເຊື່ອວ່າບຸກຄົນຜູ້ສູງອາຍຸໂດຍລວມແລ້ວແມ່ນຜູ້ໄກ່ເກ່ຍທີ່ດີກວ່າເພາະວ່າເຂົາເຈົ້າມີສາຍຕາອັນກວ້າງໄກດ້ານສັງຄົມ.

## ຄຳເຫັນກ່ຽວກັບຜົນກະທົບຂອງການໄກ່ເກ່ຍ (ເປັນສ່ວນຮ້ອຍ)




ຂໍ້ມູນຈາກການປະເມີນຜົນແຜນງານຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງປີ 2010

*"ໂດຍມີປະສົບການອັນຍາວນານກ່ຽວກັບການຟ້ອງຮ້ອງເຊິ່ງເລີ່ມຈາກການເປັນໄອຍະການປະຈຳຫ້ອງການກົມໄອຍະການ ແລະ ຕໍ່ມາໄດ້ເຮັດວຽກເປັນຜູ້ພິພາກສາປະຈຳສານອຸທອນ ແລະ ສານສູງສຸດຂ້າພະເຈົ້າໄດ້ເຫັນການຟ້ອງຮ້ອງຈາກຫຼາກຫຼາຍແງ່ມູມ. ໜຶ່ງໃນຂໍ້ກົດໜ່ວງທີ່ສຳຄັນຂອງລະບົບແມ່ນວ່າສຳຫຼັບທຸກໆຂໍ້ຂັດແຍ່ງທີ່ນຳມາຕໍ່ສູ້ຄະດີມັນຕ້ອງມີຜູ້ຊະນະຢ່າງຈະແຈ້ງ ແລະ ຝ່າຍແພ້ຢ່າງຈະແຈ້ງ ແລະ ຄວາມເປັນປໍລະປັກກັນລະຫວ່າງທັງສອງຝ່າຍກໍ່ຈະຍິ່ງຮຸນແຮງຂຶ້ນສະເໝີແທນທີ່ຈະຫຼຸດຜ່ອນລົງຈາກຂະບວນການແກ້ໄຂ. ມັນເປັນການສ້າງຄູ່ສັດຕູ ແລະ ທຳລາຍໂອກາດທີ່ທັງສອງຝ່າຍຈະສາມາດປົວແປງຍຸວຍາຄວາມສຳພັນຂອງເຂົາເຈົ້າ. ໝາກຜົນນີ້ແມ່ນກົງກັນຂ້າມກັບໝາກຜົນຂອງການໄກ່ເກ່ຍຂໍ້ຂັດແຍ່ງທີ່ມີຜົນສຳເລັດຢູ່ບ່ອນວ່າທັງສອງຝ່າຍແຍກຍ້າຍກັນໄປດ້ວຍຄວາມເພິ່ງພໍໃຈກັບການແກ້ໄຂຂໍ້ຂັດແຍ່ງນັ້ນໆ. ຂ້າພະເຈົ້າຄິດວ່າຄວາມສາມາດເຂົ້າເຖິງການໄກ່ເກ່ຍຂໍ້ຂັດແຍ່ງແມ່ນສິ່ງທີ່ເປັນຄຸນນະປະໂຫຍດທີ່ແທ້ຈິງສຳຫຼັບປະຊາຊົນໃນປະເທດສີລັງກາ."*

***ທ່ານ Justice Heector Yapa***
*ປະທານ,ຄະນະກຳມະທິການໄກ່ເກັ່ຍຂໍ້ຂັດແຍ່ງ*

## ຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງຂັ້ນຊຸມຊົນໃນປະຈຸບັນ



*"ລາຊາອາຈັກອັງກິດມີຄວາມຍິນດີຢ່າງຍິ່ງທີ່ຈະຊ່ວຍເຫຼືອສະໜັບສະໜູນຂໍ້ລິເລີ່ມເຊັ່ນນີ້ເຊິ່ງຈະປະກອບສ່ວນເຂົ້າໃນການແກ້ໄຂຂໍ້ຂັດແຍ່ງຂັ້ນຮາກຖານ ແລະ ສະໜອງກົນໄກອັນເໝາະສົມສຳຫຼັບການແກ້ໄຂ. ການປະເມີນຜົນແຜນງານຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງຂັ້ນຊຸມຊົນນີ້ແມ່ນຄາດວ່າຈະຊ່ວຍບົ່ງບອກຊ່ອງຫວ່າງ ແລະ ສ້າງຄວາມເຂັ້ມແຂງໃຫ້ຂະບວນການແກ້ໄຂເຊິ່ງຈະຊ່ວຍເພີ່ມຜົນກະທົບອັນດີຂຶ້ນ. ພາຍຫຼັງທີ່ໄດ້ຮັບຟັງການນຳສະເໜີຜົນການປະເມີນທີ່ສຳຄັນ ແລະ ເປັນສັກຄີພະຍານຄວາມໝັ້ງໝັ້ນຂອງກະຊວງຍຸດຕິທຳຂ້າພະເຈົ້າເຊື່ອແນ່ວ່າຈຸດປະສົງນີ້ຈະສາມາດບັນລຸໄດ້."*

***ທ່ານ Mark Gooding***
*ຮອງປະທານຄະນະກຳມະທິການຜູ້ມອບໝາຍຂັ້ນສູງແຫ່ງລາຊາອານາຈັກອັງກິດ*

ໂດຍຄຳນຶ່ງເຖິງວ່າລະບົບຄວາມຍຸດຕິທຳທາງການອາດມີຄ່າໃຊ້ຈ່າຍສູງລວມທັງການຕໍ່ສູ້ຂະດີໃນສານຍຸດຕິທຳທີ່ຍາວນານການປະເມີນຜົນນີ້ຊີ້ໃຫ້ເຫັນໄດ້ວ່າ: ຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງຂັ້ນຊຸມຊົນແມ່ນມີປະສິດທິຜົນ ແລະ ມີປະສິດທິພາບເຊິ່ງປົກກະຕິການໄກ່ເກ່ຍຂໍ້ຂັດແຍ່ງແມ່ນພາຍໃນ 60 ວັນ.

ຍ້ອນວ່າຈຸດປະສົງຂອງການໄກ່ເກ່ຍຂໍ້ຂັດແຍ່ງແມ່ນເພື່ອໃຫ້ໂອກາດຄູ່ກໍລະນີໄດ້ແກ້ໄຂບັນຫາຂອງເຂົາເຈົ້າດ້ວຍຕົວເອງສະນັ້ນການໄກ່ເກ່ຍໂດຍລວມແມ່ນຖືກເບິ່ງວ່າມີຄວາມຄາດເຄື່ອນ. ໃນການສຳຫຼວດມີ 86 ສ່ວນຮ້ອຍຂອງຄູ່ກໍລະນີເຫັນພ້ອມກັນວ່າຜູ້ໄກ່ເກ່ຍບໍ່ໄດ້ເຂົ້າຂ້າງຝ່າຍໃດຝ່າຍໜຶ່ງແລະໜ້ອຍກວ່າ 3 ສ່ວນຮ້ອຍຮູ້ສຶກວ່າເຂົາເຈົ້າໄດ້ຮັບຜົນກະທົບທາງລົບຈາກຄວາມຄາດເຄື່ອນນັ້ນ.

ນັບຕັ້ງແຕ່ແຜນງານໄດ້ເລີ່ມຕົ້ນຄະນະໄກ່ເກ່ຍຂໍ້ຂັດແຍ່ງໄດ້ຮັບຟັງກໍລະນີຂັດແຍ່ງຫຼາຍກວ່າ 2 ລ້ານກໍລະນີ ແລະ ໃນນັ້ນຫຼາຍກວ່າ 1 ລ້ານກໍລະນີ (ປະ ມານ 53 ສ່ວນຮ້ອຍ) ແມ່ນໄດ້ຮັບການໄກ່ເກ່ຍຢ່າງມີຜົນສຳເລັດ.

***ຄະນະຜູ້ໄກ່ເກ່ຍຂັ້ນຊຸມຊົນໃນການປະຕິບັດງານ***

*ສີລາ ແລະ ວີມາລາອາໄສຢູ່ໃນເມືອງນ້ອຍໜຶ່ງ. ເຂົາເຈົ້າລົ້ນໄພ້ນຳກັນ. ວີມາລາເປັນຝ່າຍເສຍ ແລະ ຕ້ອງຈ່າຍໃຫ້ສີລາ. ທັງຄູ່ໂຕ້ຖຽງກັນຢ່າງຮຸນແຮງ. ມື້ຕໍ່ມາສາມີຂອງວີມາລາຊື່ຊູນິນເຂົ້າໄປມີສ່ວນຮ່ວມໃນການຕໍ່ສູ້ນີ້. ເຖິງວ່າຈະບໍ່ມີໃຜບາດເຈັບແຕ່ວ່າສາຍຄໍທອງຄຳຂອງສີລາຂາດ. ສີລາອ້າງວ່າຂໍ້ສາຍຄໍຂໍ້ໜຶ່ງຂາດຫາຍໄປ ແລະ ຊູນິນຕ້ອງຮັບຜິດຊອບທົດແທນມູນຄ່າ 2,000 ລູປີ. ຊູນິນ ແລະ ວີມາລາຢືນຢັນວ່າ: ເຂົາເຈົ້າເຫັນສີລາເກັບເອົາທັງສອງຢ່າງໄປຕໍ່ໜ້າຕໍ່ຕາ ແລະ ນາງຕ້ອງການໂຍນຄວາມຜິດໃຫ້ເຂົາເຈົ້າ. ສີລາແຈ້ງຕຳຫຼວດ ແລະ ຂໍ້ຂັດແຍ່ງນີ້ກໍ່ຖືກສົ່ງໃຫ້ມີການໄກ່ເກ່ຍ.*

*ທັງສອງຝ່າຍມີຄວາມໂມໂຫ ແລະ ສີລາກ່າວວ່າຖ້າບໍ່ຖືກທົດແທນຢ່າງເຕັມສ່ວນລາວຈະຟ້ອງຂຶ້ນສານ. ຄະນະຜູ້ໄກ່ເກ່ຍຂໍຮ້ອງທັງສອງຝ່າຍໃຫ້ຄຳນຶງເຖິງການປະນີປະນອມໂດຍອະທິບາຍວ່າຄ່າໃຊ້ຈ່າຍເພື່ອສູ້ຄະດີໃນສານແມ່ນສູງກວ່າ 2,000 ລູປີຫຼາຍເທົ່າ ແລະ ຍັງລວມທັງເວລາທີ່ຕ້ອງເສຍໃນສານ. ສີລາບໍ່ສົນໃຈເພາະຕ້ອງການໃຫ້ບົດຮຽນແກ່ຊູນິນ. ຊູນິນກ່າວວ່າເຖິງວ່າຈະສາມາດຈ່າຍຄ່າທົດແທນແຕ່ລາວຈະບໍ່ຈ່າຍເພາະວ່າມັນຈະເປັນການຍອມຮັບວ່າລາວເປັນຄົນຂີ້ລັກ.ທັງສອງຝ່າຍຕ່າງບໍ່ຍອມຄຳນຶງເຖິງທາງເລືອກອື່ນໃດໆ.*

*ໃນການຊ່ອງໜ້າຄັ້ງທີສອງຍັງເຫັນໄດ້ວ່າທ່າທີຂອງທັງສອງແມ່ນກ້າວລ້າວຂຶ້ນກວ່າເກົ່າ ແລະ ທັງສອງຝ່າຍຢືນຢັນວ່າເຂົາເຈົ້າຕ້ອງການທີ່ຈະຟ້ອງຂຶ້ນສານ. ໂດຍບໍ່ມີທາງອອກໃຫ້ເລືອກສຳຫຼັບການແກ້ໄຂແບບປະນີປະນອມສະນັ້ນຄະນະຜູ້ໄກ່ເກັ່ຍຈຶ່ງໄດ້ອອກໃບຢັ້ງຢືນບໍ່ຕົກລົງໃຫ້ທັງສອງຝ່າຍ. ຊື່ຂອງຄູ່ກໍລະນີແມ່ນໄດ້ຖືກປ່ຽນແປງເພື່ອປົກປ້ອງສິດທິສ່ວນບຸກຄົນຂອງເຂົາເຈົ້າ.*




*“ມີບາງຄຸນລັກສະນະທີ່ສຳຄັນຂອງຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງທີ່ຂ້າພະເຈົ້າຄິດວ່າເປັນເຄື່ອງມືໃນໂຕທີ່ນຳໄປສູ່ຜົນສຳເລັດ. ໃນນັ້ນລວມມີ: ຂະບວນການຄັດເລືອກຜູ້ສະມັກເປັນຜູ້ໄກ່ເກ່ຍທີ່ມີລັກສະນະເປີດກວ້າງ ແລະ ຫຼາຍຂັ້ນຕອນພ້ອມທັງຂັ້ນຕອນການແຕ່ຕັ້ງຜູ້ໄກ່ເກ່ຍທີ່ເນັ້ນໃສ່ຄຸນນະພາບ, ແຜນງານການຝຶກອົບຮົມໃນ 40 ຊົ່ວໂມງທີ່ລວມມີການຝຶກໃຫ້ປະສົບການໃນການສັງເກດແລະຝຶກຕົວຈິງໂດຍຄູຝຶກ, ແລະ ຄະນະຜູ້ໄກ່ເກ່ຍທີ່ມີສະມາຊິກ 3 ທ່ານເຊິ່ງບໍ່ສະເພາະແຕ່ເພີ່ມຂະຫຍາຍຄວາມຮອບຮູ້ ແລະ ທັກສະຮວມໝູ່ແຕ່ຍັງຊ່ວຍປ້ອງກັນທຸກຮູບແບບຂອງການຊໍ້ໂກງ.”*

**ທ່ານ ດຣ. Christopher Moore**
ຄູ່ຮ່ວມ, ສະມາຄົມ CRD, USA

ເຖິງແມ່ນວ່າຈະບໍ່ສາມາດສະຫຼຸບໄດ້ວ່າຖ້າບໍ່ມີການໄກ່ເກ່ຍແລ້ວຂໍ້ຂັດແຍ່ງທັງໝົດເຫຼົ່ານີ້ຈະຕ້ອງຖືກນຳສົ່ງຂຶ້ນສານຍຸດຕິທຳແຕ່ວ່າມັນກໍ່ຈະແຈ້ງວ່າການໄກ່ເກ່ຍໄດ້ສະໜອງທາງເລືອກທີ່ດີໃນຂະບວນການແກ້ໄຂຂໍ້ຂັດແຍ່ງ.

ການປະເມີນຜົນການດຳເນີນງານຂອງຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງຂັ້ນຊຸມຊົນໄດ້ໃຫ້ຫຼັກຖານອ້າງອີງທີ່ສຳຄັນວ່າຄະນະຜູ້ໄກ່ເກ່ຍໄດ້ສົ່ງຜົນກະທົບໃນທາງບວກແກ່ຊຸມຊົນຕ່າງໆໃນທົ່ວປະເທດ. ການປະເມີນຜົນນີ້ສາມາດສຳຫຼວດໄດ້ວ່າມີ 82 ສ່ວນຮ້ອຍຂອງຄູ່ກໍລະນີ ແລະ 63 ສ່ວນຮ້ອຍຂອງຜູ້ໄກ່ເກ່ຍຂໍ້ຂັດແຍ່ງໄດ້ຄິດວ່າຜົນກະທົບທາງບວກຂອງການໄກ່ເກ່ຍຂໍ້ຂັດແຍ່ງຕໍ່ກັບຊຸມຊົນແມ່ນຫຼາຍກວ່າການແກ້ໄຂຂໍ້ຂັດແຍ່ງສ່ວນບຸກຄົນ. ແຕ່ວ່າໃນແຂວງພາກເໜືອມີພຽງແຕ່ 11 ສ່ວນຮ້ອຍເທົ່ານັ້ນທີ່ໄດ້ຕອບຄ້າຍຄືກັນນີ້.

***ຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງຂັ້ນຊຸມຊົນໃນການປະຕິບັດງານ***

*Chaminda ເປັນນັກທຸລະກິດ ແລະ ລູກຄ້າປະຈຳທະນາຄານແຫ່ງລັດ. ລາວໄດ້ຖອນເງິນເກີນຈຳນວນ 120,000 ລູປີເຊິ່ງລາວໄດ້ໃຊ້ຄືນຈົນຍັງເຫຼືອ 15,000ລູປີ. ຕອນນີ້ລາວໄດ້ຍື່ນຄຳຮ້ອງກູ້ຢືມອີກ 200,000ລູປີ ຈາກທະນາຄານນີ້. ສິ່ງທີ່ລາວບໍ່ພໍໃຈຢ່າງຍິ່ງກໍ່ຄື: ລາວຕ້ອງປະກອບເອກະສານລາຍງານກິດຈະການ ແລະ ຖານະການເງິນຢ່າງລະອຽດ. ຖ້າສົມທຽບລາວສາມາດກູ້ເງິນໄດ້ໂດຍປະກອບເອກະສານບາງຢ່າງທີ່ຈຳເປັນ. ສະນັ້ນລາວຈຶ່ງໄປຢືມຈາກທະນາຄານອື່ນ ແລະ ບໍ່ຈ່າຍເງິນທີ່ຖອນເກີນນັ້ນຄືນ. ຫຼາຍເດືອນຜ່ານມາ Chaminda ບໍ່ໄປຈ່າຍເງິນຄືນທະນາຄານແຫ່ງລັດຈຶ່ງຫັນມາເພິ່ງການໄກ່ເກ່ຍ.*

*Chaminda ໄດ້ເປີດເຜີຍກັບຜູ້ໄກ່ເກ່ຍຢ່າງກົງໄປກົງມາວ່າ "ມີພຽງເຫດຜົນຢ່າງດຽວທີ່ຂ້ອຍບໍ່ຈ່າຍຄືນກໍ່ເພາະວ່າຂ້ອຍໃຈຮ້າຍໃຫ້ທະນາຄານທີ່ສັ່ງຂ້ອຍແລ່ນໃຕ້ແລ່ນເໜືອເຮັດເອກະສານຕ່າງໆນາໆທັງໆທີ່ຂ້ອຍກໍ່ເປັນລູກຄ້າປະຈຳ." ເມື່ອ ຜູ້ໄກ່ເກ່ຍໄດ້ຍິນກໍ່ຍິ້ມເຫັນໃຈ ແລະ ກ່າວຢ່າງອ່ອນໂຍນ ວ່າ "ເຈົ້າກໍ່ຮູ້ດີວ່າເຈົ້າກຳລັງກັກເງິນຂອງທະນາຄານໄວ້ແມ່ນບໍ?" Chaminda ຍິ້ມກັບຄືນແບບອາຍໆ ແລະ ກົ້ມຫົວລົງ. ຜູ້ໄກ່ເກັ່ຍກໍ່ຂໍຮ້ອງໃຫ້ Chaminda ຢືນຢັນຄຳຢັ້ງຢືນຂອງຜູ້ຕ່າງໜ້າທະນາຄານເຖິງຈຳນວນເງິນທີ່ຍັງເຫຼືອ ແລະ ດອກເບ້ຍຂອງມັນແມ່ນ 20,000ລູປີ ແລະກໍ່ຍອມຮັບວ່າຖືກຕ້ອງ. ຜູ້ໄກ່ເກ່ຍກໍ່ຖາມວ່າ "ບັນນີ້ເຮົາຈະແກ້ໄຂກັນໄດ້ແນວໃດ?" Chaminda ຄິດໜ້ອຍໜຶ່ງແລ້ວເວົ້າວ່າ "ຂ້ອຍຈະຈ່າຍຄືນຈຳນວນເງິນທີ່ຖອນເກີນນັ້ນບາດດຽວຖ້າຫາກວ່າດອກເບ້ຍສາມາດຖືກຍົກເວັ້ນໃຫ້ຂ້ອຍ." ທາງທະນາຄານກໍ່ຕອບວ່າ "ພວກເຮົາອາດຍິນດີຍົກເວັ້ນໃຫ້ທັງໝົດແຕ່ດອກເບ້ຍ 1,000 ລູປີຈະຕ້ອງຈາກພາຍໃນສອງອາທິດ." Chaminda ກໍ່ໄດ້ຕອບຕົກລົງ ແລະ ລົງນາມໃນຕົກລົງ.*

*ຊື່ຂອງຄູ່ກໍລະນີແມ່ນໄດ້ຖືກປ່ຽນແປງເພື່ອປົກປ້ອງສິດທິສ່ວນບຸກຄົນຂອງເຂົາເຈົ້າ.*

ບາງທີ່ສ່ວນໜຶ່ງກໍ່ອາດເພາະຄວາມເປັນຈິງທີ່ວ່າແຜນງານນີ້ແມ່ນຍັງໃໝ່ສຳຫຼັບເຂົາເຈົ້າ. ມັນໜ້າສົນໃຈທີ່ເຫັນສະຖາບັນການເງິນເຊັ່ນທະນາຄານ ແລະ ສະຖາບັນພານິດໄດ້ເລີ້ມຫັນມາໃຫ້ຄວາມສົນໃຈຄະນະໄກ່ເກ່ຍຂໍ້ຂັດແຍ່ງຫຼາຍຂຶ້ນໃນການແກ້ໄຂບັນຫາເງິນກູ້ຢືມທີ່ເກັບຄືນບໍ່ໄດ້ເຖິງແມ່ນວ່າສິດ ແລະ ພາລະໜ້າໃນດ້ານການເງິນຈະມີຈຳກັດ. ມັນໄດ້ກັບກາຍເປັນວ່າທັງທະນາຄານ ແລະ ລູກໜີ້ແມ່ນມີຄວາມຍິນດີທີ່ຈະຂຶ້ນຊ່ອງໜ້າກັນຕໍ່ໜ້າຜູ້ໄກ່ເກ່ຍຂໍ້ຂັດແຍ່ງເພາະວ່າທັງສອງຕ້ອງການທີ່ຈະຕົກລົງກັນກ່ຽວກັບການໃຊ້ຈ່າຍຄືນໂດຍອີງໃສ່ເງື່ອນໄຂທີ່ຜູ້ເປັນລູກໜີ້ສາມາດປະຕິບັດນຳໄດ້.

ໃນປີ 2003 ລັດຖະສະພາໄດ້ຜ່ານຄຳສັ່ງວ່າດ້ວຍການໄກ່ເກັ່ຍ (ປະເພດຂໍ້ຂັດແຍ່ງພິເສດ) ຢ່າງເປັນເອກະສັນ. ຄຳສັ່ງດັ່ງກ່າວໄດ້ອະນຸຍາດໃຫ້ກະຊວງຍຸດຕິທຳສ້າງຕັ້ງຄະນະຜູ້ໄກ່ເກ່ຍພິເສດ (SMB) ເຊິ່ງຈະເປັນການສ້າງຕັ້ງສະເພາະໄລຍະເວລາໃດໜຶ່ງແລະຈຳກັດຂອບເຂດປະເພດຂໍ້ຂັດແຍ່ງ ຫຼື ເຂດພື້ນທີ່ສະເພາະໃນການແຍກຕົວອອກຈາກກົດໝາຍສຳຫຼັບຄະນະສະພາໄກ່ເກ່ຍຂໍ້ຂັດແຍ່ງຂັ້ນຊຸມຊົນ. ຄະນະຜູ້ໄກ່ເກ່ຍພິເສດຍັງມີພາລະບົດບາດໃນການໄກ່ເກ່ຍຂໍ້ຂັດແຍ່ງຖ້າໜຶ່ງໃນຄູກໍລະນີນັ້ນແມ່ນໜ່ວຍງານລັດຖະກອນ ຫຼື ຜູ້ຕ່າງໜ້າໜ່ວຍງານລັດຖະກອນ. ກະຊວງຍຸດຕິທຳແມ່ນມີໜ້າທີ່ອຳນາດໃນການກຳນົດເງື່ອນໄຂຕ່າງໆສຳຫຼັບຜູ້ໄກ່ເກ່ຍທີ່ຈະຖືກຂັດເລືອກປະຈຳຄະນະຜູ້ໄກ່ເກ່ຍພິເສດເຫຼົ່ານີ້ໂດຍຄຳນຶງເຖິງຄວາມຊຳນິຊຳນານທີ່ຮຽກຮ້ອງສຳຫຼັບປະເພດຂໍ້ຂັດແຍ່ງສະເພາະ.

ຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງພິເສດໄດ້ຖືກສ້າງຕັ້ງຂຶ້ນໃນປີ 2005 ເພື່ອຮັບມືກັບບັນຫາທີ່ໄດ້ເກີດຂຶ້ນພາຍຫຼັງເຫດການອຸທົກຄະໄພສຸນະມິເຊິ່ງໄດ້ທຳລາຍເຂດຊາຍຝັ່ງທະເລຂອງປະເທດສີລັງກາ. ຄະນະຜູ້ໄກ່ເກ່ຍພິເສດມີພາລະບົດບາດໃນການໄກ່ເກ່ຍຂໍ້ຂັດແຍ່ງໃດໜຶ່ງທີ່ເກີດຂຶ້ນກ່ຽວຂ້ອງກັບບັນຫາທີ່ດິນ ແລະ ການຊົດເຊີຍ ແລະ ມັນກໍ່ແມ່ນໃນທາງບັງຄັບທີ່ວ່າສຳຫຼັບຂໍ້ຂັດແຍ່ງທີ່ມີມູນຄ່າຕໍ່ກວ່າ 500,000ລູປີຄວນມີການພະຍາຍາມໄກ່ເກ່ຍເສຍກ່ອນກ່ອນທີ່ຈະນຳສິ່ງຂໍ້ຂັດແຍ່ງນັ້ນຂຶ້ນສານຍຸດຕິທຳ.

ຜູ້ໄກ່ເກ່ຍຂໍ້ຂັດແຍ່ງທີ່ມີພື້ນຖານເປັນມືອາຊີບຈະໄດ້ຮັບການຝຶກອົບຮົມຈຳນວນ 6 ວັນທີ່ຈະກະກຽມໃຫ້ເຂົາເຈົ້າຮັບມືໄດ້ກັບປະເພດສະເພາະຂອງຂໍ້ຂັດແຍ່ງທີ່ເຂົາເຈົ້າຈະໄດ້ໄກ່ເກ່ຍ. ມູນນິທິເອເຊຍໄດ້ສະໜອງການຊ່ວຍເຫຼືອເພື່ອສ້າງຕັ້ງ SMB ຈຳນວນ 13 ແຫ່ງເຊິ່ງເປີດໃຫ້ບໍລິການໃນເຂດຊາຍຝັ່ງທະເລທີ່ໄດ້ຮັບຜົນກະທົບຈາກອຸທົກກະໄພ. ໂດຍທີ່ວ່າແບບຈຳລອງຄະນະຜູ້ໄກ່ເກັ່ຍຂໍ້ຂັດແຍ່ງຂັ້ນຊຸມຊົນມີຜົນສຳເລັດຢ່າງໂດເດັ່ນເຕັກນິກຂອງການໄກ່ເກ່ຍແມ່ນໄດ້ຖືກນຳໃຊ້ເພື່ອຮັບມືກັບຄວາມຫຼາກຫຼາຍຂອງຂໍ້ຂັດແຍ່ງເຊິ່ງລວມທັງຂໍ້ຂັດແຍ່ງທາງການຄ້າບາງຢ່າງ ແລະ ໃນການແກ້ໄຂຂໍ້ຂັດແຍ່ງໂດຍອົງກອນເຄິ່ງສານ, ອົງກອນທາງສານຍຸດຕິທຳທີ່ໄກ່ເກ່ຍຂໍ້ຂັດແຍ່ງພາຍໃນຊຸມຊົນມູສລິມ. ມູນນິທິເອເຊຍໄດ້ສະໜັບສະໜູນຈັດກອງປະຊຸມຝຶກອົບຮົມທັກສະການໄກ່ເກ່ຍຄັ້ງປະຖົມມະເລີກສຳຫຼັບອົງກອນເຄິ່ງສານຍຸດຕິທຳໃນປີ 2000 ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ 53 ທ່ານ.

ຫວ່າງຫຼາຍປີມໍ່ໆມານີ້ແຜນງານຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງຂັ້ນຊຸມຊົນຂອງປະເທດສີລັງກາໄດ້ດຶງດູດຄວາມສົນໃຈຈາກນາໆປະເທດ. ປະເທດສີລັງກາໄດ້ຕ້ອນຮັບແຂກຄະນະຜູ້ແທນຈາກປະເທດຈີນ, ມົງໂກນ ແລະ ເນປານເຊິ່ງໄດ້ມາສຶກສາແຜນງານ ແລະ ນຳໃຊ້ອົງປະກອບຂອງແບບຈຳລອງຂອງປະເທດສີລັງກາເພື່ອນຳໄປພັດທະນາລະບົບການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນຊຸມຊົນຂອງເຂົາເຈົ້າເອງ.

**ຄະນະຜູ້ໄກ່ເກ່ຍຂັ້ນຊຸມຊົນໃນການປະຕິບັດງານ**

Athula ຕ້ອງການຟ້ອງຮ້ອງແມ່ຂອງລາວຊື່ Soma ຂຶ້ນສານຍຸຕິທຳ. ລາວໄດ້ປຸກເຮືອນໃນທີ່ດິນອອກຊື່ແມ່ຂອງລາວ ແລະ ເຖິງວ່າແມ່ລາວໄດ້ສັນຍາໄວ້ຕັ້ງແຕ່ດົນວ່າຈະໂອນໃຫ້ລາວແຕ່ກໍ່ບໍ່ໂອນຈັກເທື່ອ. ລາວຈຶ່ງກັງວົນຫຼາຍວ່າແມ່ຂອງລາວຈະບໍ່ໂອນໃຫ້ເລີຍ. ທັງສອງແມ່ນບໍ່ໄດ້ປາກລົມນຳກັນເລີຍ. ພາຍຫຼັງໄດ້ຮັບການຮ້ອງທຸກເຈົ້າໜ້າທີ່ຕ່ຳຫຼວດກໍ່ສົ່ງເລື່ອງເພື່ອຂຶ້ນໄກ່ເກ່ຍ. ທັນທີທີ່ລາວນັ່ງລົງຕໍ່ໜ້າຄະນະຜູ້ໄກ່ເກ່ຍ Athula ເວົ້າວ່າ “ຢ່າເສຍເວລາຂອງທ່ານເລີຍ. ອອກໃບຢັ້ງຢືນບໍ່ຕົກລົງໃຫ້ຂ້ອຍ ແລະ ຂ້ອຍຈະເອົາຜູ້ຍິງຄົນນີ້ຂຶ້ນສານ.”

ຄະນະຜູ້ໄກ່ເກ່ຍໄດ້ຕັດສິໃຈໂອລົມກັບ Athula ພຽງລຳພັງ. ຜົນອອກມາກໍ່ຄື Athula ແມ່ນລູກອາຍຸນ້ອຍກວ່າໝູ່ໃນຄອບຄົວ ແລະ ລາວກໍ່ຮູ້ສຶກວ່າໄດ້ຮັບສ່ວນແບ່ງໜ້ອຍຢູ່ສະເໝີ. ເມື່ອອ້າຍເອື້ອຍລາວແຕ່ງງານເຂົາເຈົ້າຕ່າງໄດ້ຮັບຂອງຂວັນເປັນທີ່ດິນຈາກແມ່. ເມື່ອມາຮອດພຽນລາວທີ່ດິນນີ້ກໍ່ຍັງບໍ່ທັນໄດ້ໂອນເປັນຂອງລາວເຖິງວ່າແມ່ລາວຈະອະນຸຍາດໃຫ້ປຸກເຮືອນໃສ່. ຄວາມບໍ່ພໍໃຈທີ່ມີແຕ່ນ້ອຍສຸດທ້າຍກໍ່ໄດ້ລະເບີດອອກ. ເມື່ອຜູ້ໄກ່ເກ່ຍເລົ່າເລື່ອງສູ່ຜູ້ເປັນແມ່ຟັງນາງກໍ່ເປັນລົມຊ໋ອກລົງເມື່ອຮູ້ເຖິງຄວາມເຈັບປວດທີ່ມີມານານ. ນາງກ່າວວ່ານາງຍັງບໍ່ໄດ້ໂອນທີ່ດິນນີ້ເພາະຕ້ອງເກັບເງິນກ່ອນເພື່ອຈ່າຍຄ່າອອກໃບຕາດິນເຊິ່ງນາງບໍ່ຢາກໃຫ້ Athula ເປັນຜູ້ຈ່າຍ. ນາງບໍ່ເຂົ້າໃຈເລີຍວ່າມັນຈະສ້າງຄວາມເຈັບປວດໃຈຫຼາຍຂະໜາດນີ້. ສຸດທ້າຍທັງສອງກໍ່ຄືນດີກັນແບບຕື້ນຕັນໃຈ. Athula ຕົກລົງທີ່ຈະລໍຖ້າຈົນກວ່າແມ່ລາວພ້ອມທີ່ຈະໂອນທີ່ດິນນັ້ນ. ຕໍ່ມາ Athula ໄດ້ກັບມາຂອບໃຈນຳຄະນະຜູ້ໄກ່ເກັ່ຍສຳຫຼັບການຢຽວຢາຮອຍແຕກລ້າວ ແລະ ເຈັບປວດ.

ຊື່ຂອງຄູ່ກໍລະນີແມ່ນໄດ້ຖືກປ່ຽນແປງເພື່ອປົກປ້ອງສິດທິສ່ວນບຸກຄົນ.



*"ຢູ່ໃນຊຸມຊົນຂອງພວກເຮົາແມ່ນມີບັນຫາຫຼາຍ. ການຊ່ວຍປະຊາຊົນຊອກຫາທາງແກ້ໄຂໂດຍຜ່ານການໄກ່ເກ່ຍໄດ້ໃຫ້ຄວາມຮູ້ສຶກສະຫງົບຈິດໃຈແລະຄວາມເພິ່ງພໍໃຈແກ່ຂ້າພະເຈົ້າ. ການໄກ່ເກ່ຍຂໍ້ຂັດແຍ່ງບໍ່ໄດ້ສ້າງຂໍ້ຈຳກັດໃດໆ. ແມ່ນແຕ່ໃນສະພາບເງື່ອນໄຂທີ່ຝ່າຍໜຶ່ງບໍ່ມີໜ້າຫຼືການແກ້ໄຂບໍ່ສາມາດມີໄດ້ແຕ່ກໍ່ບໍ່ມີການໃຊ້ຄວາມກົດດັນ ແລະ ການບັງຄັບໃດໆ. ປະຊາຊົນແມ່ນມັກແນວຄວາມຄິດນີ້. ເຈົ້າໜ້າທີ່ຕໍ່າຫຼວດແລະ Grama Niladaris (ອົງກອນລັດຖະບານທ້ອງຖິ່ນ) ຄວນກະຕຸ້ນໃຫ້ປະຊາຊົນຫັນມາໝູນໃຊ້ການໄກ່ເກ່ຍຂໍ້ຂັດແຍ່ງໃຫ້ຫຼາຍຂຶ້ນ."*

***ທ່ານ Sri Shakthivel (ອາຍຸ 75 ປີ)*** *ປະທານຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງເມືອງ Jaffna*

ໃນເດືອນກຸມພາປີ 2011 ລັດຖະສະພາແຫ່ງປະເທດສີລັງກາໄດ້ອະນຸມັດການປັບປຸງລັດຖະບັນຍັດວ່າດ້ວຍຄະນະຜູ້ໄກ່ເກ້ຍຂໍ້ຂັດແຍ່ງເພື່ອຂະຫຍາຍກອບຈຳກັດຂອງຂໍ້ຂັດແຍ່ງທີ່ຈະນຳຂຶ້ນມາໄກ່ເກ່ຍເຊິ່ງວັດແທກເປັນຈຳນວນເງິນຈາກ 25,000 ມາເປັນ 250,000 ລູປີ.
ການປັບປຸງນີ້ໄດ້ອະນຸມັດໃຫ້ມີການໄກ່ເກ່ຍໃນກໍລະນີຂໍ້ຂັດແຍ່ງທີ່ມີຜູ້ເຍົາ (ອາຍຸຕ່ຳກວ່າ 18 ປີ) ໄດ້ພົວພັນກັບການລັກເລັກຂະໂມຍນ້ອຍທີ່ມີມູນຄ່າຕ່ຳກວ່າ 5,000 ລູປີ.
ການເພີ່ມຂຶ້ນ 10 ເທົ່າຕົວຂອງກອບມູນຄ່າເງິນຕາແມ່ນສະແດງໃຫ້ເຫັນເຖິງຄວາມເຊື່ອໝັ້ນໃນລະບົບການໄກ່ເກ້ຍຂໍ້ຂັດແຍ່ງພ້ອມນັ້ນມັນຍັງເປັນການຍົກສູງຖານະບົດບາດຂອງຄະນະຜູ້ໄກ່ເກ້ຍຂໍ້ຂັດແຍ່ງ ແລະ ເປັນການເພີ່ມຈຳນວນຂໍ້ຂັດແຍ່ງ (ອາດຈະເພີ່ມເປັນເທົ່າຕົວ) ທີ່ຈະຖືກນຳຂຶ້ນໄກ່ເກ່ຍພ້ອມດຽວກັນນີ້ມັນກໍ່ໄດ້ສ້າງສິ່ງທ້າທາຍ ແລະ ໂອກາດອັນໃໝ່ໃຫ້ແກ່ລະບົບການໄກ່ເກ້ຍຂໍ້ຂັດແຍ່ງ.

*“ຢູ່ໃນການປຸ່ງບແປງມາດຕາກົດໝາຍຜ່ານມານີ້ພວກເຮົາຄາດໄວ້ວ່າຈຳນວນຂໍ້ຂັດແຍ່ງທີ່ໄກ່ເກ້ຍໂດຍຄະນະຜູ້ໄກ່ເກ້ຍຂໍ້ຂັດແຍ່ງໃນແຕ່ລະປີອາດເພີ່ມຂຶ້ນສູງເຖິງ 3000,000 ກໍລະນີ.”*

***ທ່ານ A. K. D. D. D. Arandara***
*ຜູ້ຊ່ວຍເລຂາທິການ, ກະຊວງຍຸດຕິທຳ*

ພາຍຫຼັງທີ່ໄດ້ສິດສອນຢູ່ໃນໂຮງຮຽນລັດມາເປັນເວລາກວ່າ 30 ປີທ່ານ Shakthivel ໄດ້ເຮັດວຽກເປັນຜູ້ຊ່ວຍອຳນວຍການດ້ານການສຶກສາລວມໄດ້ 4 ປີ. ທ່ານໄດ້ຖືກສະເໜີເຂົ້າຮັບເລືອກບັນຈຸໃນຄະນະຜູ້ໄກ່ເກ້ຍຂໍ້ຂັດແຍ່ງໂດຍເລຂາທິການເມືອງ Jaffna.

ກະຊວງຍຸດຕິທຳໄດ້ກຳນົດຂົງເຂດຫຼັກທີ່ແຜນງານຈະຕ້ອງໄດ້ສ້າງຄວາມເຂັ້ມແຂງເພື່ອຮັບມືກັບຈຳນວນ ແລະ ຄວາມສັບຊ້ອນຂອງຂໍ້ຂັດແຍ່ງທີ່ມີເພີ່ມຂຶ້ນ ແລະ ເພື່ອແກ້ໄຂຂໍ້ຄົງຄ້າງທີ່ມີໃນລະບົບປະຈຸບັນພ້ອມທັງປັບປຸງຄວາມມີປະສິດທິຜົນແລະຄວາມຊຳນິຊຳນານຂອງຜູ້ໄກ່ເກ້ຍຂໍ້ຂັດແຍ່ງ.

## ການຝຶກອົບຮົມຜູ້ໄກ່ເກ້ຍຂໍ້ຂັດແຍ່ງ

ທາງກະຊວງໄດ້ມີແຜນເພີ່ມຈຳນວນຄູຝຶກຜູ້ໄກ່ເກ້ຍຂໍ້ຂັດແຍ່ງທີ່ເວົ້າພາສາ Sinhala ຈຳນວນ 10 ທ່ານ ແລະ ສຳຫຼັບພາສາ Tamil ຂຶ້ນອີກ 5 ບາດກ້າວໄປຂ້າງໜ້າ ທ່ານ. ເມື່ອສຳເລັດການປັບປຸງຂີດຄວາມສາມາດໃນການຝຶກອົບຮົມແລ້ວກະຊວງຍຸດຕິທຳຈະໄດ້ເລີ້ມເພີ່ມຈຳນວນຜູ້ໄກ່ເກ່ຍໃນແຕ່ລະຄະນະຜູ້ໄກ່ເກ້ຍຂໍ້ຂັດແຍ່ງຢູ່ຕາມເຂດພື້ນທີ່ຕ່າງໆ. ຄວາມຮັບຜິດຊອບຂອງຄູຝຶກ ແລະ ຂອບເຂດພື້ນທີ່ແມ່ນຈະໄດ້ກຳນົດຢ່າງຈະແຈ້ງ ແລະ ປັບປຸງການປະສານງານ ແລະ ສິ່ງອຳນວຍຄວາມສະດວກຕ່າງໆສຳຫຼັບການຝຶກອົບຮົມການໄກ່ເກ້ຍຂໍ້ຂັດແຍ່ງ.



*“ພວກເຮົາ ຮູ້ສຶກຕື່ນເຕັ້ນກ່ຽວກັບມາດຕາໃໝ່ໃນລັດຖະບັດຍັດທີ່ອະນຸຍາດໃຫ້ມີການໄກ່ເກ່ຍຂໍ້ຂັດແຍ່ງທີ່ກ່ຽວກັບເດັກນ້ອຍເຊິ່ງເມື່ອກ່ອນກໍ່ມີແຕ່ແກ້ໄຂໃນຂັ້ນສານຍຸດຕິທຳເທົ່ານັ້ນ. ມັນຍັງເປັນການເປີດໂອກາດຫຼາຍຢ່າງ ຕົວຢ່າງວ່າ: ຖ້າຂະບວນການໄກ່ເກ່ຍສາມາດຮູ້ໄດ້ເຖິງບັນຫາທີ່ແທ້ຈິງວ່າເປັນຫຍັງເດັກນ້ອຍລັກເຄື່ອງໂອກາດທີ່ຈະຍຸດຕິພຶດຕິກຳນີ້ກໍ່ມີຫຼາຍຂຶ້ນ ແລະ ມັນກໍ່ຄຸ້ມຄ່າທີ່ຈະ ເຮັດສິ່ງນີ້.”*

***ທ່ານ Kamalini de Silva***

***ເລຂາທິການຊ່ວຍ,ກະຊວງຍຸດຕິທຳ***

ໃນເດືອນມັງກອນຂອງປີນີ້ກະຊວງຍຸດຕິທຳໄດ້ຈັດພິມປື້ມຄູ່ມືສຳຫຼັບຄູຝຶກ ແລະ ນັກຝຶກອົບຮົມເຫຼັ້ມໃໝ່ເຊິ່ງນອນຢູ່ໃນການຊ່ວຍເຫຼືອ ແລະ ການຮ່ວມມືຂອງມູນນິທິເອເຊຍໂດຍມີກອງທຶນຈາກຄະນະກຳມະການສະພາສູງແຫ່ງລາຊາອານາຈັກອັງກິດ. ປື້ມຄູ່ມືເຫຼັ້ມໃໝ່ໄດ້ຈັດພິມເປັນພາສາ Sinhala, Tamil ແລະ ອັງກິດ ແລະ ມີເນື້ອໃນກວມເອົາບັນຫາເລື່ອງຍິງ-ຊາຍ ແລະ ຄວາມອ່ອນໄຫວຂອງຄວາມຫຼາກຫຼາຍ. ປື້ມຄູ່ມືເຫຼົ່ານີ້ຈະຊ່ວຍສ້າງມາດຕະຖານຂອງຂະບວນການໄກ່ເກ່ຍແລະການຝຶກອົບຮົມຜູ້ໄກ່ເກ່ຍພ້ອມດຽວກັນມັນຍັງເປັນແຫຼ່ງຄວາມຮອບຮູ້ ແລະ ການພັດທະນາທັກສະ.

ໃນປີ 2003 ກະຊວງຍຸດຕິທຳໄດ້ລວມເອົາບັນຫາຄວາມອ່ອນໄຫວດ້ານຍິງ-ຊາຍເຂົ້າໃນແຜນງານການຝຶກອົບຮົມທັກສະການໄກ່ເກ່ຍຂໍ້ຂັດແຍ່ງ. ໃນປີ 2009 ກະຊວງຍຸດຕິທຳໄດ້ເລີ່ມປະຕິບັດແຜນການຊຸດຝຶກອົບຮົມພິເສດສຳຫຼັບຜູ້ໄກ່ເກ່ຍຂໍ້ຂັດແຍ່ງເປັນໄລຍະ 3 ວັນກ່ຽວກັບຄວາມອ່ອນໄຫວຂອງບັນຫາດ້ານຍິງ-ຊາຍ ແລະ ບັນຫາຄວາມຮຸນແຮງລະຫວ່າງຍິງ-ຊາຍເຊິ່ງລວມມີບັນຫາຂໍ້ຂັດແຍ່ງໃນຄອບຄົວ ແລະ ສິດທິແມ່ຍິງ. ການຝຶກອົບຮົມທີ່ຈະຊ່ວຍປິດຊ່ອງຫວ່າງທີ່ມີມານານແມ່ນໄດ້ຮັບການສະໜັບສະໜູນຈາກອົງການບໍ່ຂຶ້ນກັບລັດຖະບານປະຈຳທ້ອງຖິ່ນທີ່ມີຊື່ວ່າ: ຄວາມຕ້ອງການຂອງແມ່ຍິງ (Women in Need). ຜ່ານມາໄດ້ຈັດຕັ້ງປະຕິບັດແຜນການຝຶກອົບຮົມໄດ້ແລ້ວ 37 ຄັ້ງ ແລະ ຍັງນອນຢູ່ໃນແຜນເຕີມອີກທີ່ມີເປົ້າໝາຍໃຫ້ຄວບຄຸມຄະນະຜູ້ໄກ່ເກ່ຍທັງໝົດໃນທົ່ວປະເທດໃຫ້ໄດ້ພາຍໃນທ້າຍປີ 2011.

ພ້ອມດຽວກັນນີ້ຍັງມີຄວາມຕ້ອງການການຝຶກອົບຮົມທີ່ເນັ້ນໃສ່ບັນຫາສະເພາະໃນຂົງເຂດທີ່ຜູ້ໄກ່ເກ່ຍຂໍ້ຂັດແຍ່ງກຳນົດເອງເຊິ່ງໃນນັ້ນລວມມີການຝຶກອົບຮົມກ່ຽວກັບການບໍລິຫານກໍລະນີ ແລະ ການບໍລິຫານເວລາ.

**ຄວາມຕ້ອງການຄວາມຫຼາກຫຼາຍ**

ໜ້ອຍກວ່າ 10 ສ່ວນຮ້ອຍຂອງຜູ້ໄກ່ເກ່ຍຂໍ້ຂັດແຍ່ງແມ່ນມີອາຍຸຕ່ຳກວ່າ 45 ປີ ແລະ ຈຳນວນຜູ້ໄກ່ເກ່ຍຂໍ້ຂັດແຍ່ງເພດຍິງແມ່ນມີໜ້ອຍກວ່າ 100 ທ່ານ ຫຼື ມີພຽງແຕ່ 14 ສ່ວນຮ້ອຍຂອງທັງໝົດ. ຜູ້ໄກ່ເກ່ຍຂໍ້ຂັດແຍ່ງຈຳນວນ 8 ໃນ 10 ທ່ານແມ່ນຍັງເຮັດວຽກຢູ່ໃນຂະແໜງການລັດຫຼືວ່າອອກກິນເບ້ຍບຳນານຈາກຂະແໜງລັດເຊິ່ງມັນສະແດງໃຫ້ເຫັນວ່າມີຄວາມຄາດເຄື່ອນໄປທາງດ້ານການຄັດເລືອກຜູ້ໄກ່ເກ່ຍທີ່ມີສາຍພົວພັນກັບຫ້ອງການລັດ.

*"ໂດຍລວມແລ້ວຂ້າພະເຈົ້າມີຄວາມປິຕິຍິນດີກັບການເຕີບໂຕຂອງ CMB ໃນໄລຍະ 20 ປີ ຜ່ານມາ. ຈຳນວນກໍລະນີໄກ່ເກ່ຍທີ່ປະສົບຜົນສຳເລັດ - ຫຼາຍກວ່າໜຶ່ງລ້ານ - ແມ່ນເປັນຈຳນວນທີ່ໂດດເດັ່ນພ້ອມດຽວກັນຂ້າພະເຈົ້າກໍ່ມີຄວາມປະທັບໃຈກັບລະບົບການໄກ່ເກ່ຍຂໍ້ຂັດແຍ່ງທີ່ມອບອຳນາດການຄວບຄຸມທ້ອງຖິ່ນໃຫ້ແກ່ຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງ ແລະ ການເຂົ້າເຖິງຂະບວນການຍຸດຕິທຳຂອງປະຊາຊົນທີ່ໄດ້ຮັບການປັບປຸງດີຂຶ້ນ. ສິ່ງກັງ ວົນສິ່ງດຽວຂອງຂ້າພະເຈົ້າກໍ່ຄືຄວາມຜິດແບບຊ້ຳໆໃນການຮັບຜູ້ໄກ່ເກ່ຍຂໍ້ຂັດແຍ່ງທີ່ເປັນຊົນກຸ່ມນ້ອຍ, ແມ່ຍິງ ແລະ ຍັງໜຸ່ມໃນຈຳນວນສູງຫຼາຍ."*

***ທ່ານດຣ. Christopher Moore***
*ຄູ່ຮ່ວມ, ສະມາຄົມ CRD, USA*

ທ່ານ Nandakumara ເປັນອາຈານສອນປະຈຳຢູ່ໂຮງຮຽນໃນເຂດເມືອງ Kotte ເຊິ່ງທ່ານໄດ້ຖືກສະເໜີເຂົ້າຮັບເລືອກໃນຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງໂດຍພະສົງອົງໜຶ່ງທີ່ໄດ້ເຫັນຄວາມທຸ້ມເທຂອງທ່ານໃນການບໍລິການດ້ານສັງຄົມ ແລະ ອົງປະກອບອື່ນໆຂອງການເປັນຜູ້ໄກ່ເກ່ຍຂໍ້ຂັດແຍ່ງທີ່ດີ.

**ທ່ານ Kapila Namdakumara (ອາຍຸ 43 ປີ)**
**ເປັນຜູ້ໄກ່ເກ່ຂໍ້ຂັດແຍ່ງມາໄດ້ 3 ປີ**



*"ຂ້າພະເຈົ້າມີຄວາມເພິງພໍໃຈເປັນຢ່າງຍິ່ງກັບເວລາທີ່ຂ້າພະເຈົ້າໄດ້ໃຊ້ໄປກັບການໄກ່ເກັ່ຍຂໍ້ຂັດແຍ່ງ. ຂ້າພະເຈົ້າຄິດວ່າຄະນະຜູ້ໄກ່ເກັ່ຍຂໍ້ຂັດແຍ່ງທີ່ປະກອບດ້ວຍຜູ້ໄກ່ເກັ່ຍໄວໜຸ່ມ ແລະ ຜູ້ມີປະສົບການແມ່ນສິ່ງທີ່ດີທີ່ສຸດເພາະວ່າປະຊາຊົນມີຄວາມນັບຖືເຄົາລົບປະສົບການຊີວິດທີ່ຜູ້ໄກ່ເກັ່ຍອາວຸໂສນໍາມາໃຊ້. ຜູ້ໄກ່ເກັ່ຍໜຸ່ມອາດມີຄວາມເຂົ້າໃຈເລິກເຊິ່ງກວ່າກ່ຽວກັບບັນຫາທີ່ຄົນໄວໜຸ່ມປະເຊີນໜ້າຢູ່ໃນປະຈຸບັນ. ຂ້າພະເຈົ້າຮູ້ສຶກວ່າພວກເຮົາຄວນມີລະບົບໃດໜຶ່ງນໍາໃຊ້ເພື່ອຕິດຕາມວ່າເມື່ອຄູ່ກໍລະນີທັງສອງຝ່າຍໄດ້ເຮັດຂໍ້ຕົກລົງຮ່ວມກັນແລ້ວຈະຕ້ອງໄດ້ຈັດຕັ້ງປະຕິບັດ. ຂ້າພະເຈົ້າບໍ່ແນ່ໃຈວ່າຈະຈັດຕັ້ງປະຕິບັດກັນແນວໃດໃນຕົວຈິງແຕ່ຂ້າພະເຈົ້າຄິດວ່າມັນຈະເຮັດໃຫ້ປະຊາຊົນມີຄວາມເຊື່ອໝັ້ນໃນລະບົບນີ້ຫຼາຍຂຶ້ນ."*




ສັດສ່ວນຂອງຜູ້ໄກ່ເກັ່ຍຂໍ້ຂັດແຍ່ງທີ່ເປັນຄົນຊົນເຜົ່າ Tamil (5 ສ່ວນຮ້ອຍ) ແມ່ນຈະມີໜ້ອຍກວ່າຈຳນວນພົນລະເມືອງທັງໝົດ (ພົນລະເມືອງສີລັງກາແລະ Tamil ລວມກັນກວມເອົາ 18 ສ່ວນຮ້ອຍຂຂອງພົນລະເມືອງທັງໝົດ). ຈຳນວນຜູ້ໄກ່ເກັ່ຍຂໍ້ຂັດແຍ່ງທີ່ເປັນ Tamil ແມ່ນເພີ່ມຂຶ້ນເຊິ່ງມາຈາກການສ້າງຕັ້ງຄະນະຜູ້ໄກ່ເກັ່ຍຂໍ້ຂັດແຍ່ງຫຼາຍຂຶ້ນໃນແຂວງພາກເໜືອ ແລະ ຈຳນວນຜູ້ໄກ່ເກັ່ຍຂໍ້ຂັດແຍ່ງກໍ່ຕ້ອງເພີ່ມຂຶ້ນໂດຍສະເພາະໃນແຂວງພາກກາງ ແລະ ປ້າຍຄຳຂວັນປະກາດວ່າຄະນະຜູ້ໄກ່ເກັ່ຍຂໍ້ຂັດແຍ່ງກຳລັງເຮັດວຽກຢູ່ທີ່ໂຮງຮຽນໃນ Jaffna ພາກຕາເວັນອອກພ້ອມທັງໃນແຂວງພາກໃຕ້ທີ່ມີຊົນຊາດຊົນເຜົ່າຫຼາກຫຼາຍ.

ສ່ວນໃຫຍ່ຂອງຜູ້ໄກ່ເກັ່ຍຂໍ້ຂັດແຍ່ງໃນປະຈຸບັນແມ່ນມີອາຍຸຫຼາຍກວ່າ 60 ປີ - ເຊິ່ງເປັນເກນອາຍຸທີ່ມີບົດບາດເປັນ "ຜູ້ເຖົ້າຜູ້ແກ່" ອີງຕາມປະເພນີແລະບາງທີ່ກໍ່ເປັນແນວຄວາມຄິດທີ່ມີມາແຕ່ດົນນານທີ່ວ່າບຸກຄົນເຫຼົ່ານີ້ແມ່ນເໝາະສົມກັບບົດບາດສາທາລະນະຊົນເຊັ່ນນີ້. ໃນສັງຄົມປະເທດສີລັງກາພະນັກງານກິນເບ້ຍບຳນານແມ່ນກຸ່ມຄົນທີ່ສາມາດມີເວລາໃຫ້ກັບວຽກໄກ່ເກັ່ຍນີ້.

ຄຸນລັກສະນະນີ້ກໍ່ມີຂໍ້ດີເດັ່ນຈຳນວນໜຶ່ງການປະສົມປະສານລະຫວ່າງອາວຸໂສແລະໜຸ່ມແໜ້ນອາດຈະຊ່ວຍສ້າງຄວາມເຂັ້ມແຂງໃຫ້ກັບຄະນະໄກ່ເກັ່ຍຂໍ້ຂັດແຍ່ງໂດຍເຮັດໃຫ້ຄະນະຜູ້ໄກ່ເກັ່ຍມີມູມມອງແບບຕ່າງໆ ແລະ ມີຄວາມເຂົ້າໃຈກ່ຽວກັບບັນຫາສະເພາະທີ່ປະຊາຊົນກຸ່ມຕ່າງປະເຊີນໜ້າຢູ່.

ທ່ານ Chandrasena ໄດ້ອອກກິນເບ້ຍບຳນານຈາກການເປັນພະນັກງານລັດຖະກອນປະຈຳກະຊວງເຄຫະສະຖານ. ທ່ານໄດ້ກ່າວວ່າການຍອມຮັບການໄກ່ເກ່ຍຂໍ້ຂັດແຍ່ງໂດຍທົ່ວໄປໄດ້ຮັບການປັບປຸງດີຂຶ້ນຫຼາຍໃນໄລຍະ 10 ປີຜ່ານມາ.

**ທ່ານ N. D. Chandrasena (ອາຍຸ 69 ປີ) ເປັນຜູ້ໄກ່ເກັ່ຍຂໍ້ຂັດແຍ່ງມາໄດ້ 14 ປີ**



"ໃນບາງກໍລະນີຂໍ້ຂັດແຍ່ງທີ່ຂ້າພະເຈົ້າໄດ້ໄກ່ເກ້ຍຄູ່ກໍລະນີທັງສອງຝ່າຍເຂົ້າປະຊຸມຊ່ອງໜ້າຄັ້ງທຳອິດດ້ວຍການຜິດຖຽງກັນຢ່າງຮຸນແຮງ ແລະ ຫຼາຍໆຄັ້ງຕໍ່ມາກໍ່ຢ່າງອອກໄປພ້ອມກັນແລະກໍ່ຂື້ນລົດຄັນດຽວກັນ. ມີບາງກໍລະນີຈະດ້ວຍເຫດຜົນໃດກໍ່ແລ້ວແຕ່ຂໍ້ຂັດແຍ່ງແມ່ນບໍ່ສາມາດແກ້ໄຂໄດ້ໂດຍການໄກ່ເກ້ຍແຕ່ວ່າທັງສອງຝ່າຍເລີ້ມເຂົ້າໃຈກັນ ແລະ ກັນຫຼາຍຂຶ້ນແລະກໍ່ຈາກໄປດ້ວຍບັນຍາກາດທີ່ດີກວ່າຕອນເຂົາເຈົ້າເຂົ້າມາ. ໃນກໍລະນີໜຶ່ງອີກໜຶ່ງໃນຄູ່ກໍລະນີຈະເວົ້າອອກມາງ່າຍໆວ່າ 'ກະລຸນາຊ່ວຍອອກໃບຢັ້ງຢືນບໍ່ຕົກລົງໃຫ້ຂ້ອຍແດ່. ຂ້ອຍຈະບໍ່ຮ່ວມການໂອລົມສົນທະນາໃດໆທັງໝົດ.' ນີ້ກໍ່ໝາຍຄວາມວ່າເຂົາເຈົ້າໄດ້ປຶກສາຫາລືກັບທະນາຍຄວາມກ່ອນໜ້ານີ້ແລ້ວເຂົ່າຈະເປັນຜູ້ທີ່ຕ້ອງການຈະວ່າຄວາມສ້ຄະດີໃນສານຍຸດຕິທຳ."

## ການກ້າວໄປຂ້າງໜ້າ

*"ຄູຝຶກອົບຮົມການໄກ່ເກ່ຍຂອງພວກເຮົາມີບົດບາດສຳຄັນໃນແຜນງານການໄກ່ເກ່ຍຂໍ້ຂັດແຍ່ງ. ເຂົາເຈົ້າຮັບຜິດຊອບການຝຶກອົບຮົມ ແລະ ໃຫ້ຄຳແນະນຳແກ່ຄະນະຜູ້ໄກ່ເກ່ຍ. ໃນຖານະທີ່ເປັນພະນັກງານລັດຜົນຕອບແທນດ້ານການເງິນທີ່ພວກເຮົາໃຫ້ໄດ້ແມ່ນຈຳກັດສະນັ້ນພວກເຮົາຈະຕ້ອງຊອກຫາວິທີອື່ນເພື່ອຈູງໃຈເຂົາເຈົ້າ. ທາງເລືອກທີ່ມີກໍ່ຄືພະຍາຍາມເລືອກສັນການຝຶກອົບຮົມທີ່ດີໃຫ້ກັບເຂົາເຈົ້າເຊິ່ງລວມມີການຖືວສຶກສາຢູ່ປະເທດຕ່າງໆ ແລະ ການນຳສະເນີຄວາມຮູ້ສູ່ເວທີສາກົນອີງຕາມທຶນຮອນທີ່ມີ."*

***ທ່ານ Kamalini de Silva***
*ເລຂາທິການຊ່ວຍ, ກະຊວງຍຸດຕິທຳ*

ທາງເລືອກໜຶ່ງທີ່ຈະເພີ່ມຄວາມຫຼາກຫຼາຍຂຶ້ນກໍ່ຄືເພີ່ມຄວາມຫຼາກຫຼາຍຂອງກຸ່ມທີ່ມີສິດ ແລະ ຄວາມຮັບຜິດໃນການສົ່ງຜູ້ເຂົ້າຮັບເລືອກເປັນຜູ້ໄກ່ເກ່ຍ. ປົກກະຕິແລ້ວທ່ານປະທານຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງຈະບໍ່ໄດ້ກຳນົດທັງຄະນະເພື່ອສະເໜີເຂົ້າຮັບເລືອກອີກຄັ້ງໜຶ່ງເຊິ່ງນັ້ນກໍ່ເປັນການກີດກັ້ນການປ່ຽນແປງ. ຄວາມຫຼາກຫຼາຍທີ່ດີອາດຈະຊັກຊວນໃຫ້ອົງການທີ່ບໍ່ຂຶ້ນກັບລັດຖະບານ ແລະ ອົງການຊຸມຊົນທ້ອງຖິ່ນເຊັ່ນອົງການແມ່ຍິງໃຫ້ສະເໜີຜູ້ເຂົ້າຮັບເລືອກ. ໃນທາງປະຕິບັດກໍ່ໝາຍຄວາມວ່າການແຈ້ງໃຫ້ແຕ່ລະອົງການສະເໜີຜູ້ເຂົ້າຮັບເລືອກຄວນຈະແຈກຍາຍໃຫ້ກວ້າງຂວາງກວ່າທີ່ເຮັດໃນປະຈຸບັນ.

ອີງຕາມຄຳສະເໜີຈາກການປະເມີນຜົນແຜນງານຄະນະຜູ້ໄກ່ເກ່ຍຂັ້ນຊຸມຊົນໂດຍມູນນິທິເອເຊຍກະຊວງຍຸດຕິທຳໄດ້ແກ້ໄຂໂດຍກຳນົດໃຫ້ວ່າຈະຕ້ອງມີຢ່າງໜ້ອຍ 30 ສ່ວນຮ້ອຍຂອງຜູ້ຖືກສະເໜີເຂົ້າຮັບເລືອກເປັນແມ່ຍິງ ແລະ ຜູ້ເຂົ້າຮັບເລືອກ 30 ຫາ 40 ສ່ວນຮ້ອຍຈະຕ້ອງມີອາຍຸລະຫວ່າງ 30 ຫາ 45 ປີ.



*"ໃນດ້ານບວກກະຊວງຍຸດຕິທຳໄດ້ລວມເອົາບັນຫາສິດທິແມ່ຍິງເຂົ້າໃນຫຼັກສູດຝຶກອົບຮົມເຊິ່ງແມ່ນການເລີ້ມຕົ້ນທີ່ສຳຄັນ. ໃນດ້ານລົບກະຊວງຍຸດຕິທຳຈະຕ້ອງເອົາໃຈໃສ່ຫຼາຍຂຶ້ນກ່ຽວກັບການເພີ່ມຈຳນວນແມ່ຍິງໃຫ້ຫຼາຍຂຶ້ນໃນຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງເພາະວ່າຂໍ້ຂັດແຍ່ງຫຼາຍໆກໍລະນີແມ່ນມີແມ່ຍິງກ່ຽວຂ້ອງຢູ່ນຳ. ຄວາມຄິດດັ່ງເດີມຄືແມ່ຍິງສ່ວນໃຫ່ຍມີເວລາໜ້ອຍໃຫ້ກັບວຽກງານໄກ່ເກ່ຍ, ເຂົາເຈົ້າມີວຽກເຮືອນຊານຕ້ອງເບິ່ງແຍງແຕ່ວ່າໃນຕົວຈິງແມ່ນມີແມ່ຍິງຫຼາຍທີ່ຍິນດີອາສາສະມັກເຮັດວຽກນີ້. ຂ້າພະເຈົ້າຄິດວ່າກະຊວງຍຸດຕິທຳຕ້ອງຮັບປະກັນໃຫ້ມີໜ່ວຍງານຮັບຜິດຊອບການສະເໜີຜູ້ເຂົ້າຮັບເລືອກທີ່ມີຈຳນວນແມ່ຍິງຫຼາຍຂຶ້ນ."*

***ທ່ານ Ramani Jayasundere***
*ຜູ້ຊີ້ນຳດ້ານເຕັກນິກ, ມູນນິທິເອເຊຍ*

**ທ່ານປະທານຄະນະຜູ້ໄກ່ເກ່ຍ Kesbewa ກຳລັງໃຊ້ມືຖືສົ່ງບົດລາຍງານຂໍ້ມູນການໄກ່ເກ່ຍເຊິ່ງເປັນສ່ວນໜຶ່ງຂອງໂຄງການນຳລ່ອງ.**



## ການສ້າງຄວາມຮັບຮູ້

ເຖິງວ່າຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງຂັ້ນຊຸມຊົນຈະເປັນທີ່ຮູ້ຈັກກັນດີແຕ່ໃນປະຈຸບັນກໍ່ມີພຽງແຕ່ຜູ້ທີ່ເຄີຍເຂົ້າຮ່ວມໂດຍກົງໃນຂະບວນການໄກ່ເກ່ຍເທົ່ານັ້ນທີ່ເຂົ້າໃຈຂະບວນການໄກ່ເກ່ຍນີ້. ໂດຍລວມແລ້ວການຂາດຄວາມເຂົ້າໃຈແມ່ນສາເຫດໜຶ່ງທີ່ວ່າເປັນຫຍັງຈຳນວນຄູ່ກໍລະນີ (ປະມານໜຶ່ງໃນສິບ) ປະຕິເສດທີ່ຈະຂຶ້ນເວທີໄກ່ເກ່ຍ. ທຸກຄົນຕ່າງກໍ່ເຫັນພ້ອມກັນວ່າບັນຫານີ້ສາມາດແກ້ໄຂໄດ້ໂດຍການເຜີຍແຜ່ຜ່ານສື່ຕ່າງໆໂດຍສະເພາະແມ່ນທາງໂທລະພາບ (ຄືກັບການເຜີຍແຜ່ແຜນງານໃນເມື່ອກ່ອນເຊິ່ງສະໜັບສະໜູນໂດຍມູນນິທິເອເຊຍ) ແຕ່ວ່າໃນປະຈຸບັນແມ່ນຍັງຂາດທຶນສະໜັບສະໜູນ.

## ການບໍລິຫານຂໍ້ມູນຂ່າວສານ

ການບໍລິຫານຂໍ້ມູນຂ່າວສານກ່ຽວກັບການເຮັດວຽກຂອງຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງແມ່ນອີກຂົງເຂດໜຶ່ງທີ່ຈະຕ້ອງໄດ້ເອົາໃສ່.

ໃນປະຈຸບັນຫົວໜ້າຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງຈະເປັນຜູ້ສົ່ງບົດລາຍງານປະຈຳເດືອນເຊິ່ງລວມມີຂໍ້ມູນສະຖິຕິການໄກ່ເກ່ຍແຕ່ວ່າຂໍ້ມູນຂ່າວສານເຫຼົ່ານີ້ແມ່ນມີຄວາມຈຳກັດຫຼາຍ ແລະ ເກັບກຳໄດ້ຍາກ. ຕົວຢ່າງ: ຂໍ້ມູນກ່ຽວກັບປະເພດຂໍ້ຂັດແຍ່ງທີ່ໄດ້ໄກ່ເກ່ຍແລະການໄກ່ເກ່ຍນັ້ນແມ່ນດ້ວຍຄວາມສະມັກໃຈ ຫຼື ເປັນພາກບັງຄັບ. ສິ່ງເຫຼົ່ານີ້ແມ່ນບໍ່ສາມາດຮູ້ໄດ້.

ມູນນິທິເອເຊຍໄດ້ໃຫ້ການຊ່ວຍເຫຼືອແກ່ກະຊວງຍຸດຕິທຳເພື່ອອອກແບບຂັ້ນຕອນການລາຍງານໂດຍປ່ຽນຈາກການລາຍງານປະຈຳເດືອນມາເປັນປະຈຳອາທິດເຊິ່ງວ່າຫົວໜ້າຄະນະຜູ້ໄກ່ເກ່ຍສາມາດສົ່ງຜ່ານມືຖື. ປະຈຸບັນໂຄງການນຳລ່ອງກຳລັງຈັດຕັ້ງປະຕິບັດກັບ 2 ຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງຢູ່ເມືອງ Colombo. ພາຍຫຼັງທີ່ໄດ້ທົດສອບ ແລະ ປັບປຸງອີງຕາມຄຳຄິດເຫັນຂອງຜູ້ໃຊ້ແລ້ວຈະໄດ້ມີການນຳໃຊ້ລະບົບອັດຕະໂນມັດສ້າງຖານຂໍ້ມູນ ແລະ ຂໍ້ມູນຂ່າວສານເຫຼົ່ານີ້ຈະຊ່ວຍໃຫ້ການປະເມີນຜົນ ແລະ ການວິເຄາະຂໍ້ມູນຕ່າງສຳຫຼັບການຕິດຕາມ ແລະ ການວາງແຜນຍຸດທະສາດໄດ້ງ່າຍຍິ່ງຂຶ້ນ.



### ສ້າງການຮ່ວມມືກັບຄູ່ຮ່ວມໃຫ້ເຂັ້ມແຂງ

ຂົງເຂດອື່ນໆທີ່ສຳຄັນສຳຫຼັບການພັດທະນາລວມມີການຮ່ວມມືກັບສະຖາບັນແຫ່ງລັດຕ່າງໆ ແລະ ກຳຈັດຂໍ້ສົງໃສກ່ຽງກັບພາລະບົດບາດຂອງສະຖເບັນເຫຼົ່ານີ້.
ຕົວຢ່າງ: ຄະນະຜູ້ໄກ່ເກັ່ຍຂໍ້ຂັດແຍ່ງບໍ່ມີການພົວພັນກັບເຈົ້າໜ້າທີ່ຕຳຫຼວດຢ່າງເປັນທາງການເຖິງວ່າໃນຕົວຈິງແລ້ວເຈົ້າໜ້າທີ່ຕຳຫຼວດມີບົດບາດອັນສຳຄັນໃນການນຳສິ່ງຂໍ້ຂັດແຍ່ງໃຫ້ທາງຄະນະຜູ້ໄກ່ເກັ່ຍ ແລະ ຍິ່ງໄປກວ່ານັ້ນເຈົ້າໜ້າທີ່ຕຳຫຼວດຍັງຊ່ວຍຄະນະຜູ້ໄກ່ເກັ່ຍຕິດຕໍ່ພົວພັນກັບຄູ່ກໍລະນີເຊິ່ງນັ້ນແມ່ນນອກເໜືອຈາກໜ້າທີ່ຂອງເຂົາເຈົ້າ. ສະນັ້ນມັນຈະມີຜົນດີສຳຫຼັບຂັ້ນຕອນທາງການຖ້າຫາກມີຖານຂໍ້ມູນແບ່ງປັນກັບເຈົ້າໜ້າທີ່ຕຳຫຼວດ ແລະ ກຳນົດພາລະບົດບາດຂອງຕຳຫຼວດເມື່ອເຂົາເຈົ້າກ່ຽວຂ້ອງກັບຂໍ້ຂັດແຍ່ງໃດໜຶ່ງ.
ໂດຍໄດ້ຮັບການຊ່ວຍເຫຼືອດ້ານການເງິນຈາກຄະນະກຳມະທິການສະພາສູງແຫ່ງລາຊາອານາຈັກອັງກິດທາງມູນນິທິເອເຊຍໄດ້ສະໜັບສະໜູນກະຊວງຍຸດຕິທຳຈັດຕັ້ງປະຕິບັດແຜນງານຜູ້ມີສ່ວນຮ່ວມໃນແຕ່ລະເມືອງເຊິ່ງກວມເອົາໄອຍະການເມືອງ, ເຈົ້າເມືອງ, ອຳນວຍການຕຳຫຼວດເມືອງ ແລະ ພະນັກງານລັດຖະກອນ. ແຜນງານໄດ້ເລີ້ມປະຕິບັດໃນປີ 2006 ໂດຍມີຈຸດປະສົງສ້າງເຜີຍແຜ່ຄວາມຮູ້ ແລະ ສ້າງຄວາມເຂັ້ມແຂງໃຫ້ກັບສາຍພົວພັນລະຫວ່າງອົງກອນເຫຼົ່ານີ້ແລະຄະນະຜູ້ໄກ່ເກັ່ຍຂໍ້ຂັດແຍ່ງທ້ອງຖິ່ນ.

*"ພວກເຮົາຫວັງວ່າການເຮັດໃຫ້ເດັກນັກຮຽນໄດ້ຮູ້ຈັກກັບແນວຄວາມຄິດການໄກ່ເກັ່ຍແມ່ນການມອບສິ່ງດີໆມີຄ່າໃຫ້ກັບຄົນລຸ້ນຫຼັງແລະກໍ່ຫວັງຢ່າງຍິ່ງວ່າມັນຈະເປັນແຮງກະຕຸ້ນໃຫ້ເຂົາເຈົ້າສ່ວນສ່ວນໃດໜຶ່ງໃຫ້ອາສາສະມັກປະກອບສ່ວນເປັນຜູ້ໄກ່ເກັ່ຍ ແລະ ພວກເຮົາກໍ່ຈະມີຜູ້ໄກ່ເກັ່ຍລຸ້ນໜຸ່ມໃນຂ້າງໜ້າ."*

***ທ່ານ A. K. D. D. D. Arandara***
*ຜູ້ຊ່ວຍເລຂາທິການ, ກະຊວງຍຸດຕິທຳ*

ນາງ Muralitharan ເຮັດວຽກເປັນຜູ້ຕີພິມບັນທຶກປະຈຳສານຂັ້ນຕົ້ນທີ່ Mulaithivu. ປະຈຸບັນນາງເຮັດວຽກນຳອົງການພັດທະນາສັງຄົມຊົນະບົດຂອງແມ່ຍິງ. ກ່ອນໜ້າຖືກສະເໜີເຂົ້າຮັບເລືອກເປັນຜູ້ໄກ່ເກັ່ຍໂດຍພະນັກງານລັດໃນທ້ອງຖິ່ນນາງຮູ້ພຽງເລັກນ້ອຍກ່ຽວກັບການໄກ່ເກັ່ຍແຕ່ເມື່ອເປັນສະມາຊິກຄະນະຜູ້ໄກ່ເກັ່ຍໄດ້ຫຼາຍປີນາງໄດ້ກາຍເປັນຜູ້ມີສັດທາອັນແຮງກ້າຕໍ່ແຜນງານ. ປະຈຸບັນນາງແມ່ນໜຶ່ງໃນສອງສະມາຊິກແມ່ຍິງຂອງຄະນະຜູ້ໄກ່ເກັ່ຍຂໍ້ຂັດແຍ່ງປະຈຳ Jaffna.



*“ຄະນະຂອງພວກເຮົາໃນ Jaffna ໄດ້ໄກ່ເກັ່ຍຂໍ້ຂັດແຍ່ງຫຼາກຫຼາຍປະເພດເຊັ່ນການບໍ່ຈ່າຍໜີ້ສິນ, ເຂດທີ່ດິນ, ການແບ່ງປັນນໍ້າສ້າງ ແລະ ບັນຫາຄອບຄົວ. ຂໍ້ຂັດແຍ່ງພິເສດໜຶ່ງທີ່ພວກເຮົາດຳເນີນການຢູ່ຄື: ມີປະຊາຊົນຈຳນວນໜຶ່ງໄດ້ຍ້າຍເຂົ້າມາຕັ້ງຖິ່ນຖານໃນເຂດທີ່ດິນທີ່ເຈົ້າຂອງໄດ້ປະໜີໄປເພື່ອຫຼົບຫຼີກສົງຄາມ. ປະຈຸບັນບັນດາເຈົ້າຂອງທີ່ດິນເຫຼົ່ານີ້ໄດ້ກັບມາທວງເອົາທີ່ດິນຄືນແຕ່ບາງຄັ້ງຜູ້ຍ້າຍມາຢູ່ໃໝ່ນັ້ນກໍ່ບໍ່ຍອມຍ້າຍອອກໄປເຊິ່ງເຮັດໃຫ້ເກີດມີຂໍ້ຂັດແຍ່ງກັນຢ່າງຮຸນແຮງ.”*

***ທ່ານນາງ* Gowry Muralitharan *(ອາຍຸ 49ປີ)***

*ເປັນຜູ້ໄກ່ເກັ່ຍໄດ້ 4 ປີ*

ແຜນງານນີ້ໄດ້ຮັບການອຳນວຍຄວາມສະດວກຈາກຄູຝຶກຂອງກະຊວງຍຸດຕິທຳ ແລະ ເປັນແຜນງານທີ່ມີປະສິດທິຜົນແລະກຳລັງດຳເນີນຢູ່.

**ການສ້າງເພື່ອອະນາຄົດ**

ແຜນງານໃໝ່ອັນໜຶ່ງທີ່ລິເລີ່ມໂດຍກະຊວງຍຸດຕິທຳແມ່ນການນຳສະເໜີເຕັກນິກການໄກ່ເກ່ຍປະກອບເຂົ້າໃນຫຼັກສູດການສອນໃນໂຮງຮຽນ. ຄູຝຶກການໄກ່ເກ່ຍຂໍ້ຂັດແຍ່ງຈະຝຶກກຸ່ມນັກຮຽນ ແລະ ຄູອາຈານພ້ອມນັ້ນກໍ່ຊ່ວນສ້າງຕັ້ງ "ໜ່ວຍໄກ່ເກ່ຍ" ໃນແຕ່ລະໂຮງຮຽນ. ນອກນັ້ນກໍ່ຍັງມີການສ້າງຕັ້ງຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງລະຫວ່າງນັກຮຽນນັກສຶກສາດ້ວຍກັນ. ຄະນະຜູ້ໄກ່ເກ່ຍທີ່ມີຜູ້ຊ່ວຍແຜນງານຈາກກະຊວງຍຸດຕິທຳໄດ້ຈັດກິດຈະກຳທີ່ກ່ຽວຂ້ອງຫຼາຍຢ່າງເຊັ່ນການຕັ້ງແຂ້ມຂອງໂຮງຮຽນ, ການຝຶກເປັນຜູ້ນຳ, ການແຂ່ງຂັນ ແລະການວາງສະແດງທີ່ກ່ຽວກັບການໄກ່ເກ່ຍຂໍ້ຂັດແຍ່ງ.

ກະຊວງຍຸດຕິທຳກຳລັງພິຈາລະນາການພັດທະນາຂັ້ນຕອນ ແລະ ລະບົບແກ້ໄຂຂໍ້ຂັດແຍ່ງທີ່ດີໃນທາງປະຕິບັດໃນມະຫາວິທະຍາໄລໃນເຂດທ້ອງຖິ່ນ.

**ການສົ່ງເສີມການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນຊຸມຊົນໃນໄລຍະສອງທົດສະຫັວດຜ່ານມາ**

ແຜນງານຄະນະໄກ່ເກ່ຍຂໍ້ຂັດແຍ່ງຂັ້ນຊຸມຊົນທີ່ສ້າງຕັ້ງຂຶ້ນໂດຍກະຊວງຍຸດຕິທຳໄດ້ກາຍເປັນຜົນສຳເລັດອັນຍິ່ງໃຫ່ຍສຳຫຼັບລະບົບຍຸດຕິທຳຂອງປະເທດສີລັງກາ. ໃນນັ້ນມູນນິທິເອເຊຍກໍ່ແມ່ນຄູ່ຮ່ວມພັດທະນາມາຕັ້ງແຕ່ເລີ້ມຕົ້ນ. ມູນນິທິເອເຊຍໄດ້ຮ່ວມມືສ້າງ ແລະ ຈັດຕັ້ງແຜນງານການຝຶກອົບຮົມຄັ້ງທຳອິດໃນທ້າຍຊຸມປີແປດສິບ ແລະ ຕໍ່ມາກໍ່ແມ່ນການຝຶກອົບຮົມດ້ານທັກສະການໄກ່ເກ່ຍສຳຫຼັບສະມາຊິກຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງໃນແຂວງພາກຕາເວັນອອກ ແລະ ພາກເໜືອທີ່ໄດ້ຮັບຜົນກະທົບຈາກສົງຄາມຢ່າງໜັກໜວງ. ການຮ່ວມມືຂອງມູນນິທິເອເຊຍໄດ້ຂະຫຍາຍອອກໄປເຖິງການສ້າງຕັ້ງຄະນະຜູ້ໄກ່ເກ່ຍຂໍ້ຂັດແຍ່ງພິເສດເພື່ອການໄກ່ເກ່ຍຂໍ້ຂັດແຍ່ງທີ່ເກີດຂື້ນຈາກອຸທົກກະໄພ tsunami. ຄຽງຄູ່ກັນນັ້ນມູນນິທິເອເຊຍກໍ່ຍັງໄດ້ຮ່ວມມືຊ່ວຍເຫຼືອຈັດກອງປະຊຸມປຶກສາຫາລືກັບຜູ້ມີສ່ວນຮ່ວມ ແລະ ຈັດໂຄສະນາເຜີຍແຜ່ກ່ຽວກັບວຽກງານການໄກ່ເກ່ຍຂໍ້ຂັດແຍ່ງ.ມູນນິທິເອເຊຍໄດ້ສະໜັບສະໜູນຕະຫຼອດໄລຍະສອງທົດສະຫວັດແລະຍັງສືບຕໍ່ເຖິງປະຈຸບັນ.

ຂໍ້ມູນທີ່ໄດ້ພົບຄວາມຄິດ ,ການຕີຄວາມໝາຍ , ເຫັນ ແລະ ສິ່ງທັງໝົດທີ່ໄດ້ຂຽນລົງໃນແຕ່ລະບົດນັ້ນແມ່ນ ຜົນງານຂອງຜູ້ຂຽນພຽງຄົນດຽວ, ເຊິ່ງທັງໝົດນີ້ຈະບໍ່ມີຜົນສະທ້ອນຕໍ່ມູນນິທິເອເຊຍ ເຊັ່ນດຽວກັນ ມູນນິທິ ບໍ່ຮັບຜິດຊອບຄ້ຳປະກັນ , ໃນການແປເອກະສານນີ້.

**ຫາກຕ້ອງການເບິ່ງຕົ້ນສະບັບພາສາອັງກິດ, ກະລຸນາເຂົ້າຢ້ຽມຢາມເວບໄຊ:**
http://asiafoundation.org/publications/pdf/948

ປື້ມເຫຼັ້ມນີ້ໄດ້ຖືກຈັດພິມໂດຍມູນນິທິເອເຊຍ
ເມືອງໂຄໂລມໂບໃນປະເທດສີລັງກາ

ຜະລິດໂດຍບໍລິສັດ Emagewise (Pvt) ຈຳກັດ

53/3 ຖະໜົນ Gregory ເມືອງໂຄໂລມໂບ 7 ປະເທດສີລັງກາ

ໂທ: +94 (11) 2688 501

ແຟກ: +94 (11) 2688 558

www.emagewise.com

ອອກແບບໂດຍຜະລິດໂດຍບໍລິສັດ Emagewise (Pvt) ຈຳກັດ

ບົດຂຽນໂດຍ Michelle Gunawardana

ຮູບພາບໂດຍ Udaya Wijesoma, Taprobane Street Studios

ແບບດິຈິຕໍແລະພິມໂດຍສາຂາ Gunaratne, ສີລັງກາ

ພິມຄັ້ງທຳອິດປີ 2011

© ສະຫງວນລິກະສິດໂດຍມູນນິທິເອເຊຍ, ປະເທດສີລັງກາ

ISBN 978-955-1068-01-9